ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ກອງປະຊຸມໃຫຍ່ຄັ້ງທີ VIII
# ຂອງສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ
# ທີ່ ຫໍປະຊຸມແຫ່ງຊາດ (NCC) ນະຄອນຫຼວງວຽງຈັນ

# (ຮ່າງ) ບົດລາຍງານ
# ການເຄື່ອນໄຫວປີ 2017-2020 ແລະ
# ແຜນການເຄື່ອນໄຫວປີ 2021-2023

ສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ ລາວ

ນະຄອນຫຼວງວຽງຈັນ, ວັນທີ 25 ກັນຍາ 2020

**ສາລະບານ**

I.ສະພາບລວມຂອງເສດຖະກິດ ຂອງທຸລະກິດໃນ ສປປ ລາວ ໃນໄລຍະ 2017-2020. .......... 1

1.1 ສະພາບເສດຖະກິດ.......... 1

1.2 ສະພາບຂອງພາກທຸລະກິດໃນ ສປປ ລາວ .......... 2

II. ເຄື່ອນໄຫວວຽກງານ ຂອງ ສຄອ ແຫ່ງຊາດລາວ ແຕ່ 2017-2020 (ວາລະຂອງຄະນະບໍລິຫານງານຊຸດທີ VII) .......... 3

2.1 ສະພາບລວມ .......... 3

2.2 ການປັບປຸງໂຄງຮ່າງການຈັດຕັ້ງ .......... 4

2.3 ການພັດທະນາແວດລ້ອມການດໍາເນີນທຸລະກິດ .......... 6

2.4 ວຽກງານພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ (SME) .......... 11

2.5 ວຽກງານສົ່ງເສີມຜະລິດຕະພັນລາວ (Made in Laos) .......... 13

2.6 ວຽກງານຖານຂໍ້ມູນວິສາຫະກິດ ແລະ ສະມາຊິກ.......... 16

2.7 ວຽກງານການເຊື່ອມໂຍງເສດຖະກິດອາຊຽນ ແລະ ພາກພື້ນ.......... 16

2.8 ວຽກງານບໍລິຫານ.......... 26

2.9 ວຽກງານການຂະຫຍາຍສະມາຊິກ ແລະ ສຄອ ແຂວງ, ສະມາຄົມ ແລະ ກຸ່ມທຸລະກິດ.......... 26

2.10 ວຽກງານການພັດທະນາຊັບພະຍາກອນມະນຸດ .......... 27

2.11 ວຽກງານເສດຖະກິດ ແລະ ການເງິນ .......... 27

2.12 ຂໍ້ສະເໜີ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ກ່ຽວກັບຜົນກະທົບຂອງການແຜ່2.13 ລະບາດຂອງພະຍາດໂຄວິດ-19. .......... 28

2.13 ວຽກງານການເຄື່ອນໄຫວກິດຈະກຳທາງສັງຄົມ: .......... 31

III. ສະດວກ,ຂໍ້ຫຍຸ້ງຍາກແລະບົດຮຽນທີ່ຖອດຖອນໄດ້ .......... 31

3.1 ຂໍ້ສະດວກ: .......... 31

3.2 ຂໍ້ຫຍຸ້ງຍາກ: .......... 32

3.3 ບົດຮຽນທີ່ຖອດຖອນໄດ້ .......... 32

3.4 ຂໍ້ສະເໜີ .......... 33

IV. ແຜນການເຄື່ອນໄຫວໃນຕໍ່ໜ້າ .......... 34

4.1 ແຜນຍຸດທະສາດການພັດທະນາພາກທຸລະກິດປີ 2021-2025 .......... 34

4.2. ເສົາຄໍ້າຍຸດທະສາດ ແລະ ໂຄງຮ່າງການຈັດຕັ້ງໃໝ່ .......... 37

4.3. ແຜນລະອຽດເພື່ອປະຕິບັດຍຸດທະສາດພັດທະນາພາກທຸລະກິດໃນ ສປປ ລາວ2021-2023 (3ປີ). .......... 38

4.3.1. ການພັດທະນາການພົບປະລະຫວ່າງພາກລະລັດ-ພາກທຸລະກິດເພື່ອແວດລ້ອມທຸລະກິດທີ່ດີຂຶ້ນ. .......... 38

4.3.2. ການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ແລະ ສູນບໍລິການ (SSC). .. 42

4.3.3. ການສົ່ງເສີມ ແລະ ການຕະຫຼາດຂອງຜະລິດຕະພັນລາວ. .......... 47

4.3.4. ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການລົງທຶນທີ່ຍືນຍົງ. .......... 52

4.3.5. ການພັດທະນາຜູ້ປະກອບການ ແລະ ກິດຈະການຜູ້ໃຊ້ແຮງງານ. .......... 59

4.3.6. ຂໍ້ມູນຂ່າວສານ, ການປະສາສຳພັນ ແລະ ການພັດທະນາສະມາຊິກຂອງ ສຄອຊ .......... 62

4.4. ງົບປະມານລາຍຮັບແລະລາຍຈ່າຍປີ 2021-2023 53

4.5 ໂຄງຮ່າງການຈັດຕັ້ງໃໝ່ຂອງ ສຄອຊ ໃນອະນາຄົດ .......... 70

# I. ສະພາບລວມຂອງເສດຖະກິດ ຂອງທຸລະກິດໃນ ສປປ ລາວ ໃນໄລຍະ 2017-2020.

## 1.1 ສະພາບເສດຖະກິດ

ເສດຖະກິດ ຂອງ ສປປ ລາວ ໄດ້ຂະຫຍາຍຕົວສະເລ່ຍ 6,62 % ໃນໄລຍະ 3 ປີ ທີ່ຜ່ານມາ. ໃນປີ 2020 ລາຍຮັບຕໍ່ ຫົວຄົນເທົ່າ 2,742 ໂດລາ ເຮັດໃຫ້ ສປປ ລາວ ຈັດເຂົ້າເປັນປະເທດລາຍຮັບຕ່ຳ ລະດັບກາງ (lower middle income). ຂະແໜງການທີ່ປະກອບເຂົ້າໃນ GDP ມີ ຂະແໜງກະສິກຳ 8,1 %, ຂະແໜງອຸດສາຫະກຳ 14.73%, ແລະ ຂະແໜງການບໍລິການ 11.3 %. ອັດຕາເງິນເຟີ້ສະເລ່ຍຢູ່ໃນອັນດັບ 2.85 % ໃນ 04 ທີ່ຜ່ານມາ. ຕົວເລກການລົງທືນຂອງພາກເອກະຊົນບັນລຸໄດ້ 77,228.1 ຕື້ກີບ, ເທົ່າກັບ 46.7% ຂອງ GDP.

ຕາມການສຳຫຼວດຈຳນວນ ຫົວໜ່ວຍທຸລະກິດ ທີ່ລົງທະບຽນຢູ່ ສປປ ລາວ ມີປະມານ 125,000 ຫົວໜ່ວຍ, ໃນນັ້ນ 98% ເປັນທຸລະກິດຂະໜາດນ້ອຍ ແລະກາງ (SME) ເປັນ 91,8% ເປັນບໍລິສັດເອກະຊົນ. ຍັງມີທຸລະກິດຂະໜາດນ້ອຍ ແລະກາງ ເກືອບທັບເຄິ່ງແມ່ນບໍ່ໄດ້ລົງທະບຽນ ແລະການເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍ.
ສະພາບແວດລ້ອມໃນການດຳເນີນທຸລະກິດ ຢູ່ ສປປ ລາວ ແມ່ນຍັງຕ່ຳຫຼາຍຖ້າທຽບໃສ່ສາກົນ ໃນປີ 2020 ສປປ ລາວ ໄດ້ຖືກຈັດເປັນ 154 ໂດຍທະນາຄານໂລກ. ບັນຫາທີ່ຫົວໜ່ວຍທຸລະກິດໄດ້ຖືເປັນຂໍ້ຈຳກັດໃນການດຳເນີນທຸລະກິດ ຢູ່ ສປປ ລາວແມ່ນ: ❶ການເລີ່ມຕົ້ນທຸລະກິດ(ໄດ້ທີ 181), ❷ການຂໍອະນຸມັດປຸກສ້າງ(ໄດ້ທີ 99), ❸ການຂໍເອົາໄຟຟ້າເຂົ້າຕິດຕັ້ງ(ໄດ້ທີ 144), ❹ການຈົດທະບຽນຊັບສິນ(ໄດ້ທີ 88), ❺ ການເຂົ້າເຖິງສິນເຊື່ອ (ໄດ້ທີ 80), ❻ການປົກປ້ອງຜູ້ລົງທຶນລາຍນ້ອຍ(ໄດ້ທີ 179), ❼ການມອບອາກອຳໄລ(ໄດ້ທີ 157),❽ການຄ້າຊາຍແດນ(ໄດ້ທີ 78), 9 ການຈັດຕັ້ງປະຕິບັດສັນຍາ (ໄດ້ທີ 161), 10 ການຟ້ອງລົ້ມລະລາຍຂອງບໍລິສັດ (ໄດ້ທີ 168).

ເສດຖະກິດຂອງ ສປປ ລາວ ກໍ່ຄືທຸລະກິດໃນ ສປປ ລາວ ໄດ້ຮັບຜົນກະທົບຈາກວິກິດການເສດຖະກິດໂລກຂະຫຍາຍຕົວບໍ່ສູງ ແລະການຫຼຸດຖອຍ ດ້ານເສດຖະກິດ ຂອງປະເທດເພື່ອນບ້ານ ແລະ ຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສົງຄາມການຄ້າ) ລະຫວ່າງ ສປ ຈີນ ແລະ ສາຫະລັດອາເມລິກາ, ການແຜ່ລະບາດຂອງພະຍາດໂຄວິດ-19, ດ້ານການເງິນໂລກ ຍັງມີການຜັນແປຫລາຍດ້ານ ເປັນຕົ້ນ ອັດຕາດອກເບ້ຍຂອງຕະຫລາດເພີ່ມຂຶ້ນສູງ, ລາຄານ້ຳມັນສູງຂຶ້ນ, ເຊິ່ງຜົນເຮັດໃຫ້ ຕົ້ນທຶນການຄ້າ, ການລົງທຶນ ແລະ ການຜະລິດ ສູງຂຶ້ນ. ສະພາບດັ່ງກ່າວມີຜົນກະທົບໂດຍກົງ ແລະ ທາງອ້ອມຕໍ່ການພັດທະນາ ເສດຖະກິດ-ສັງຄົມຂອງປະເທດເຮົາຫລາຍຢ່າງຮ້າຍແຮງ, ມີຫຼາຍທຸລະກິດໃນຂະແໜງໂຮງແຮມ, ຮ້ານອາຫານ, ທ່ອງທ່ຽວ, ອຸດສາຫະກຳ, ຕັດຫຍິດ ປິດໂຕລົງ, ອັດຕາການຫວ່າງງານຂອງແຮງງານລາວ 20% ຂອງຈຳນວນແຮງງານທັງໝົດ (ປະມານ 500,000ຄົນ ຕາມຕົວເລກຈາກກະຊວງແຮງງານປີ 2020).
ເຖິງຢ່າງໃດກໍ່ຕາມ ສຳລັບສະພາບພາຍໃນປະເທດເຫັນວ່າ ເສດຖະກິດມະຫາພາກໂດຍລວມຍັງມີຄວາມໝັ້ນທ່ຽງ ແລະ ສືບຕໍ່ຂະຫຍາຍ ຕົວຢ່າງຕໍ່ເນື່ອງແຕ່ໃນຈັງຫວະທີ່ຊ້າລົງ ເນື່ອງຈາກປັດໃຈພາຍນອກ ແລະ ພາຍໃນປະເທດ, ໂດຍສະເພາະຜົນກະທົບຈາກການເພີ່ມຂຶ້ນຂອງຕົ້ນທຶນການຜະລິດ, ການແຜ່ລະບາດຂອງພະຍາດໂຄວິດ-19, ການປະເຊີນກັບໄພພິບັດທຳມະຊາດ ແລະ ນ້ຳຖ້ວມຢ່າງໜັກໜ່ວງ, ລັດຖະບານ ກໍ່ໄດ້ພະຍາຍາມແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໄດ້ດີພໍສົມຄວນ.

ການຂະຫຍາຍຕົວ ດ້ານອຸດສາຫະກຳປຸງແຕ່ງ ແລະການບໍລິການ ການຫັນປ່ຽນໂຄງປະກອບເສດຖະກິດພື້ນຖານລັດຖະບານ ສປປ ລາວ ໄດ້ປັບປຸງ ລະບຽບກົດໝາຍ ໃຫ້ແທດເໝາະກັບສິນທິສັນຍາຕ່າງໆ ໃນກອບອາຊຽນ ແລະຂອງອົງການການຄ້າໂລກ(WTO) ເພື່ອເຊື່ອມໂຍງ ເສດຖະກິດ ຂອງ ສປປ ລາວ ເຂົ້າສູ່ປະຊາຄົມອາຊຽນ. ການປັບປຸງກົດໝາຍທີ່ກ່ຽວພັນກັບທຸລະກິດ ໂດຍສະເພາະແມ່ນ ກົດໝາຍແຮງງານ ແລະກົດໝາຍການລົງທຶນ ທີ່ມີຄວາມ

ສຳຄັນໃນ ການພັດທະນາທຸລະກິດ ໃນ ສປປ ລາວ ໃຫ້ໝັ້ນຄົງ. ນະໂຍບາຍພັດທະນາເສດຖະກິດມະຫາພາກຂອງລັດຖະບານຕາມ ແຜນພັດທະນາເສດຖະກິດສັງຄົມຄັ້ງທີ 08 ເຊິ່ງເລັ່ງເຫັນຄວາມສຳຄັນຕໍ່ພາກທຸລະກິດ ໃນໂຄງປະກອບຂອງເສດຖະກິດຂອງຊາດ ແລະເຫັນຄວາມສຳຄັນໃນ ການບຸກທະລຸ ເພື່ອປ່ຽນແປງລະບອບການຄຸ້ມຄອງໄປຕາມເສດຖະກິດຕະຫຼາດ ແມ່ນເດີນໄປຕາມທາງທີ່ຖືກຕ້ອງແລ້ວ. ນະໂຍບາຍເປີດກວ້າງ ແລະສົ່ງເສີມການລົງທຶນ ເປັນນະໂຍບາຍເຊື່ອມໂຍງເສດຖະກິດພາກພື້ນ ຂອງປະຊາຄົມເສດຖະກິດອາຊຽນ ສົມທົບກັບທ່າແຮງການຜະລິດອຸດສາຫະກຳໄຟຟ້າ, ອຸດສາຫະກຳປຸງແຕ່ງເປັນບໍລິການຈຳນວນໜຶ່ງ ເປັນທ່າແຮງໃຫ້ທຸລະກິດ ໃນ ສປປ ລາວ ສາມາດຂະຫຍາຍຖານການຜະລິດ ເພີ່ມຂຶ້ນເຊັ່ນ: ໃນຂະແໜງການຂົນສົ່ງ (ໂລຈິດສຕິກ, ການເງິນ, ທະນາຄານ ແລະ ການບໍລິການ ອື່ນໆ).

ທ່າແຮງໃນອະນາຄົດຂອງທຸລະກິດໃນ ສປປ ລາວ ຍັງຈະແມ່ນ: 1) ພະລັງງານໄຟຟ້າທີ່ຍັງມີຫຼາຍໂຄງການທີ່ຈະສາມາດພັດທະນາ, 2) ໂຄງການກໍ່ສ້າງໂຄງລ່າງພື້ນຖານເພື່ອເຊື່ອມເສັ້ນທາງລົດໄຟບໍ່ເຕັນ - ນະຄອນຫຼວງວຽງຈັນ, ການກໍ່ສ້າງຕົວເມືອງ ພ້ອມທັງ ການເປີດກວ້າງການລົງທຶນ ໃນການກໍ່ສ້າງອະສັງຫາລິມະຊັບ, ການພັດທະນາເສດຖະກິດພິເສດ, ການຂະຫຍາຍອຸດສາຫະກຳການກະເສດ, ການເປີດກວ້າງ ການລົງທຶນໃນສະຖາບັນການເງິນ ແລະທະນາຄານເອກະຊົນ, ການເປີດກວ້າງການຄ້າຂາຍຍົກ - ຂາຍຍ່ອຍ ແລະນະໂຍບາຍເປີດກວ້າງອື່ນໆ ລ້ວນແຕ່ອຳນວຍຄວາມສະດວກ ແລະສ້າງກະລະໂອກາດໃຫ້ການລົງທຶນ ແລະທຸລະກິດໃຫ້ຂະຫຍາຍຕົວໃນ ສປປ ລາວ.

## 2.1 ສະພາບຂອງພາກທຸລະກິດໃນ ສປປ ລາວ

ພາກທຸລະກິດ ຂອງ ສປປ ລາວ ໃນໄລຍະ 03 ທີ່ຜ່ານມາ ໄດ້ມີການເຕີບໃຫຍ່ຂະຫຍາຍຕົວ ແລະ ມີ ຫົວໜ່ວຍທຸລະກິດ, ຮູບແບບການຜະລິດ ກຳເນີດເກີດຂຶ້ນເປັນຈຳນວນຫຼວງຫຼາຍ. ບັນດາພາກສ່ວນເສດຖະກິດດັ່ງກ່າວໄດ້ກາຍເປັນກຳລັງແຮງປະກອບສ່ວນສຳຄັນອັນໃຫຍ່ຫຼວງເຂົ້າໃນການພັດທະນາເສດຖະກິດຂອງຊາດ. ແຕ່ເຖິງຢ່າງໃດກໍຕາມ ຢືນຢູ່ບົນຈິດໃຈກ້າຮັບຄວາມເປັນຈິງທີ່ເກີດຂຶ້ນ ກໍ່ເຫັນວ່າພາກທຸລະກິດພວກເຮົາ ຍັງປະເຊີນໜ້າກັບຄວາມຫຸ້ຍຍາກ ຫຼາຍປະການ ເປັນຕົ້ນແມ່ນ:

(1) ທຸລະກິດຈຳນວນຫຼາຍແມ່ນເນັ້ນໃສ່ ການຈັດຕັ້ງປະຕິບັດໂຄງການ ກໍ່ສ້າງພື້ນຖານໂຄງລ່າງຂອງລັດ ທີ່ຕົນເອງບໍ່ສຳນານບວກກັບ ຄວາມອ່ອນແອຂອງການຄອງໂຄງການຂອງລັດ ຈຶ່ງເຮັດໃຫ້ທຶນຮອນຂອງຕົນສູນເສຍ, ສ້າງຄວາມຟຸມເຟືອຍ ໃຊ້ຈ່າຍໃຊ້ຈາຍງົບປະມານ ເຮັດໃຫ້ພາກລັດ ແລະ ທຸລະກິດ ຕົກເຂົ້າໃສ່ກັບດັກຂອງໜີ້ສິນ, ຂາດສະພາບຄ່ອງ ແລະ ປິດໂຕ ບໍລິສັດ ລົງແລ້ວກໍ່ມີ.

(2) ພາກທຸລະກິດ ຢູ່ ສປປ ລາວ ພວກເຮົາ ໂດຍສະເພາະ ວິສາຫາກິດຂະໜາດນ້ອຍ ແລະ ຂະໜາດກາງ ສ່ວນຫຼາຍ ບໍ່ມີແຜນຍຸດທະສາດໃນການພັດທະນາ, ບໍ່ທັນສາມາດປັບເຂົ້າສູ່ ມາດຕະຖານທຸລະກິດ ຕາມທີ່ກົດໝາຍວິສາຫະກິດ ແລະ ກົດໝາຍອື່ນໆທີ່ກ່ຽວຂ້ອງ, ຂາດບຸກຄະລະກອນ, ຜູ້ບໍລິຫານທີ່ມີສີມື ທັງໃນແງ່ຄວາມຮູ້, ຄວາມສາມາດ ແລະ ແງ່ປະສົບປະການ.

(3) ພາກທຸລະກິດ ຍັງອ່ອນນ້ອຍໃນການນຳໃຊ້ເທກໂນໂລຍີໃໝ່ ພາໃຫ້ການດຳເນີນທຸລະກິດ ຫຼື ການຜະລິດສິນຄ້າມີປະສິດຕິຜົນຕ່ຳ. ຈຶ່ງເຮັດໃຫ້ຍາກໃນການປັບຕົວເຂົ້າກັບສະພາບການປ່ຽນແປງຂອງຕະຫຼາດ ພາຍໃນ, ພາກພື້ນ ແລະ ສາກົນ.

(4) ຜູ້ປະກອບການຈຳນວນໜຶ່ງ ທີ່ໄດ້ຮັບອານຸຍາດລົງທຶນ ແລ້ວແຕ່ບໍ່ມີການເຄື່ອນໄຫວ ດຳເນີນທຸລະກິດ ເຮັດໃຫ້ການພັດທະນາບໍ່ໄປຕາມແຜນ ແລະ ເສຍຜົນປະໂຫຍດ ຈຳນວນມະຫາສານ

(5) ຜູ້ປະກອບການ ຈຳນວນໜຶ່ງ ພົບຄວາມຫຍຸ້ງຍາກ ໃນການເຂົ້າຫາແຫຼ່ງທຶນ ເຊິ່ງທະນາຄານ ຕ້ອງການຫຼັກຊັບຄ້ຳປະກັນ ທີ່ເປັນສິດນຳໃຊ້ທີ່ດິນ ເຊິ່ງເປັນຂໍ້ຫຍຸ້ງຍາກ ເຮັດໃຫ້ທຸລະກິດຂະໜາດນ້ອຍ ແລະທຸລະກິດລິເລີ່ມຕັ້ງໃໝ່ຕ້ອງເຂົ້າຫາເງິນກູ້ທີ່ສາມາດຄ້ຳປະກັນດ້ວຍຫຼັກຊັບອື່ນ ເຊິ່ງເຮັດໃຫ້ວິສາຫະກິດ ເຫຼົ່ານີ້ຊອກຫາແຫຼ່ງທຶນໃນ

ຕະຫລາດມີດທີ່ມີອັດຕາດອກເບ້ຍສູງກວ່າທະນາຄານ.

(6) ທຸລະກິດປະເພດກະສິກຳ ມີຄວາມສ່ຽງຈາກໄພທຳມະຊາດ ແລະ ຄວາມເສບປຽບໃນຕະຫຼາດ ເຮັດໃຫ້ການຜະລິດສິນຄ້າຢູ່ໃນປະເທດເຮົາ ມີຄວາມສ່ຽງ ແລະ ບໍ່ມີຄວາມເຂັ້ມແຂງ.

ເຖິງແນວໃດກໍ່ຕາມ ພັກ ແລະ ລັດຖະບານ ກໍ່ຄືອົງກອນພາກທຸລະກິດພວກເຮົາຕ້ອງໄດ້ຮ່ວມແຮງຮ່ວມໃຈກັນ ຍຶດໝັ້ນໃນການປະຕິບັດຢ່າງສະເໜີຕົ້ນສະເໜີປາຍຕໍ່ໂຍບາຍຊຸກຍູ້ການສົ່ງເສີມກຳລັງແຮງ ພາກສ່ວນເສດຖະກິດ ໂດຍຮັບປະກັນໃຫ້ທຸກພາກສ່ວນເສດຖະກິດສາມາດເຄື່ອນໃຫວຢ່າງມີຄວາມສະເໝີພາບ ຕໍ່ ໜ້າກົດໝາຍ, ພ້ອມທັງສ້າງສະພາບແວດລ້ອມທີ່ອຳນວຍທຸກພາກສ່ວນເສດຖະກິດສາມາດເຄື່ອນໃຫວຢ່າງຄ່ອງຕົວ ແລະ ສາມາດປະກອບສ່ວນໃນການຂະຫຍາຍການຜະລິດ, ທຸລະກິດແລະ ສາມາດ ແຂ່ງຂັນຕາມກົນໄກເສດຖະກິດຕະຫລາດ ກໍ່ຄື ການເສື່ອມໂຍງກັບພາກພື້ນ ແລະ ສາກົນ.

## II. ເຄື່ອນໄຫວວຽກງານ ຂອງ ສຄອ ແຫ່ງຊາດລາວ ແຕ່ 2017-2020 (ວາລະຂອງ ຄະນະບໍລິຫານງານຊຸດທີ VII)

### 2.1 ສະພາບລວມ

ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ໄດ້ຮັບການສ້າງຕັ້ງຂຶ້ນໃນວັນທີ 05 ພຶດສະພາ 1989 ຕາມະຕິ ຕົກລົງສະບັບເລກທີ 598/ຫສນຍຂອງ ສະພາລັດຖະມົນຕີ. ສຄອຊ ໄດ້ມີບົດບາດໃນການເຕົ້າ ໂຮມເອົາບັນດາຫົວໜ່ວຍທຸລະກິດ ໃນ ສປປ ລາວ ໃນການຈັດຕັ້ງປະຕິບັດ ນະໂຍບາຍເປີດກວ້າງ ເສດຖະກິດ ຂອງລັດຖະບານ. ໃນວາລະຂອງຄະນະບໍລິຫານງານຊຸດທີ III ຈຶ່ງໄດ້ຮັບຮອງເອົາດຳລັດ 125/ນຍ ວ່າດ້ວຍການຈັດ ຕັ້ງ ແລະ ການເຄື່ອນໄຫວຂອງ ສຄອ ແຫ່ງຊາດລາວ ໂດຍກຳນົດໃຫ້ ສຄອຊ ເປັນອົງການຈັດຕັ້ງສູງສຸດຂອງທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ມີໜ້າທີ່ປຸກລະດົມຂົນຂວາຍ, ເຕົ້າໂຮມ, ຈັດຕັ້ງສຶກສາ, ນຳພາຫົວໜ່ວຍທຸລະກິດ ເຄື່ອນໄຫວຖືກຕ້ອງຕາມລະບຽບກົດໝາຍ, ປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳຂອງສະ ມາຊິກ. ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ກັບອົງການຈັດຕັ້ງ, ສຄອຊ ໄດ້ມີການປັບປຸງດຳລັດຂອງຕົນໃນແຕ່ລະໄລຍະເຊັ່ນວ່າ ໄດ້ປັບປຸງດຳລັດ 125/ນຍ ມາເປັນດຳລັດ 316/ນຍ ໃນປີ 2009 ແລະ ໄດ້ປັບດຳລັດ 316/ນຍ ມາເປັນດຳລັດ 237/ນຍ ໃນວັນທີ 18 ພຶດສະພາ 2020.

ໃນວັນທີ 09 ທັນວາ ປີ 2016 ກອງປະຊຸມໃຫ່ຍຂອງ ສຄອຊ ໄດ້ຮັບຮອງເອົາ ຄະນະບໍລິຫານງານຊຸດທີ VII ເພື່ອເຂົ້າມາສືບຕໍ່ບໍລິຫານ, ຈັດຕັ້ງປະຕິບັດ, ຊີ້ນຳ,ນຳພາ ວຽກງານຂອງ ສະຄອຊ ແລະ **ໄດ້ສ້າງແຜນຍຸດທະສາດການພັດທະນາພາກທຸລະກິດ ສະບັບທຳອິດຂຶ້ນ ໂດຍເນັ້ນໃສ່ ເປົ້າໝາຍໄລຍະຍາວແມ່ນ "ເສີມສ້າງຄວາມເຂັ້ມແຂງຂອງທຸລະກິດ ໃນ ສປປ ລາວ ເພື່ອພັດທະນາເສດຖະກິດແຫ່ງຊາດ ຕາມທິດການພັດທະນາສີຂຽວ ແລະ ຍືນຍົງ" ແຜນຍຸດທະສາດໄດ້ກຳນົດ 04 ເສົາຄ້ຳ ເຊັ່ນ:**

1) ການປັບປຸງສະພາບແວດລ້ອມການດຳເນີນທຸລະກິດໃຫ້ດີຂຶ້ນ;
2) ການພັດທະນາ ແລະ ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ;

3) ການສົ່ງເສີມ ຜະລິດຕະພັນລາວ (Made in Laos);

4) ການສ້າງລະບົບຖານຂໍ້ມູນຂອງວິສາຫະກິດ;

**ແລະ ປະກອບມີ 06 ເປົ້າໝາຍທີ່ສຳຄັນດັ່ງນີ້:**

- ເສີມສ້າງຄວາມເຂັ້ມແຂງຂອງທຸລະກິດ SMEs ພ້ອມທັງຂະຫຍາຍຖານການຜະລິດທຸລະກິດ ທີ່ຖືກຕ້ອງຕາມລະບຽບກົດຫມາຍ ໃຫ້ຫລາຍຂຶ້ນກ່ວາເກົ່າ,
- ເສີມສ້າງຄວາມເຂັ້ມແຂງຂອງພາກທຸລະກິດການຜະລິດເພື່ອສົ່ງອອກ,
- ເສີມສ້າງແວດລ້ອມທຸລະກິດໃຫ້ດີຂຶ້ນ ໂດຍນຳໃຊ້ເວທີກອງປະຊຸມທຸລະກິດລາວ ແລະ ເວທີປຶກສາຫາລືພາກລັດ ແລະ ທຸລະກິດ ແລະ ອື່ນໆ,
- ສ້າງຖານຂໍ້ມູນສຳລັບພາກທຸລະກິດ,
- ການເຊື່ອມໂຍງຂອງທຸລະກິດລາວເພື່ອກ້າວເຂົ້າສູ່ປະຊາຄົມເສດຖະກິດອາຊຽນ ແລະ (6) ປັບປຸງການຈັດຕັ້ງລະບົບສົ່ງເສີມ ແລະ ການບໍລິການທຸລະກິດ ຂອງ ສຄອຊ, ສຄອ ແຂວງ, ກຸ່ມ ແລະ ສະມາຄົມທຸລະກິດ.

**ໂດຍອີງໃສ່ 6 ເປົ້າຫມາຍ ທີ່ໄດ້ກຳນົດຂ້າງເທິງນີ້, ສຄອຊ ໄດ້ຂັບລຸເປົ້າຫມາຍຂອງຕົນດັ່ງນີ້:**

## 2.2 ການປັບປຸງໂຄງຮ່າງການຈັດຕັ້ງ

ສຄອຊ ໄແມ່ນອົງການຈັດຕັ້ງທາງສັງຄົມສູງສຸດຂອງພາກທຸລະກິດ ທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນໂດຍລັດຖະບານ, ມີຄວາມເປັນເຈົ້າຕົນເອງທາງດ້ານການເຄື່ອນໄຫວ ແລະ ງົບປະມານ, ມີການຮ່ວມມື ແລະ ປະສານສົມທົບກັບ ອົງການຈັດຕັ້ງ ລັດ ທີ່ກ່ຽວຂ້ອງ, ເປັນຂົວຕໍ່ລະຫວ່າງພາກລັດ ແລະ ພາກທຸລະກິດ, ເປັນຕົວແທນໃຫ້ແກ່ຜູ້ໃຊ້ແຮງງານ, ສະມາຄົມ-ກຸ່ມທຸລະກິດ, ສະຫະກອນ, ກຸ່ມຜູ້ປະກອບການທຸລະກິດອິດສະລະ ແລະ ຫົວໜ່ວຍທຸລະກິດທີ່ສ້າງ ຕັ້ງ ແລະ ເຄື່ອນໄຫວຖືກຕ້ອງຕາມກົດ ໝາຍຂອງ ສປປ ລາວ. ມີພາລະບົດບາດໃນການປະກອບຄຳຄິດເຫັນໃຫ້ ແກ່ພາກລັດກ່ຽວກັບທຸລະກິດ, ປຸກລະດົມຂົນຂວາຍ, ສຶກສາອົບຮົມ, ນຳພາ, ຈັດຕັ້ງ, ເຕົ້າໂຮມນັກທຸລະກິດ ເພື່ອສົ່ງ ເສີມເສດຖະກິດ , ການຄ້າ, ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການເງິນ ແລະ ການບໍລິການ ລວມທັງ ປົກປ້ອງສິດ ຜົນປະໂຫຍດອັນຊອບທຳ ຂອງວິສາຫະກິດໃຫ້ເຄື່ອນໄຫວທຸລະກິດຖືກຕ້ອງຕາມກົດໝາຍ.

**ສຄອຊ ໄດ້ແບ່ງສາຍບໍລິຫານປະກອບດ້ວຍ**:

| | | | |
|---|---|---|---|
| - ປະທານ ກິຕິມະສັກ | 1 | ທ່ານ | |
| - ປະທານ | 1 | ທ່ານ | |
| - ຮອງ ປະທານ | 6 | ທ່ານ | |
| - ຄະນະບໍລິຫານງານ | 45 | ທ່ານ | (ລວມປະທານ ສຄອ ແຂວງ ) |
| - ປະທານທີ່ປຶກສາ | 1 | ທ່ານ | |
| - ປະທານກວດ | 1 | ທ່ານ | |

- ນາຍຄັງ 1 ທ່ານ
- ເລຂາທິການ 1 ທ່ານ
- ແລະ ຮອງ ເລຂາທິການ 4 ທ່ານ

**ໂຄງສ້າງການຈັດຕັ້ງຫ້ອງການປະຈຳ ປະກອບດ້ວຍ:**

- 4 ພະແນກ, 1 ຫ້ອງການ ແລະ 2 ສູນ.
- ພະນັກງານປະຈຳທັງໝົດ: 43 ທ່ານ, ເພດຍິງ: 24 ທ່ານ. ພະນັກງານສັນຍາຈ້າງ 3 ທ່ານ
- **ສຄອແຫ່ງຊາດໄດ້ມີອົງການຈັດຕັ້ງພັກ ແລະ ອົງການຈັດຕັ້ງມະຫາຊົນ ທີ່ເປັນກາລັງແຮງໃນການຊີ້ນຳ - ນຳພາວຽກງານຕ່າງໆຄື:**
- ໜ່ວຍພັກ, ມີສະມາຊິກ: 24 ສະຫາຍ
- ໜ່ວຍຊາວໜຸ່ມ, ມີສະມາຊິກ: 35 ສະຫາຍ
- ໜ່ວຍເພດຍິງ, ມີສະມາຊິກ: 24 ສະຫາຍ
- ກຳມະບານ, ມີສະມາຊິກ: 22 ສະຫາຍ

ການເຄື່ອນໄຫວວຽກງານຂອງໜ່ວຍພັກ ສຄອ ແຫ່ງຊາດລາວ ແມ່ນຂຶ້ນກັບ ຄະນະບໍລິຫານງານພັກຂອງກະຊວງອຸດສາຫະກຳ ແລະ ການຄ້າ.



## 2.3 ການພັດທະນາແວດລ້ອມການດຳເນີນທຸລະກິດ

### 2.3.1 ວຽກງານການປັບປຸງສະພາບແວດລ້ອມຂອງການດຳເນີນທຸລະກິດ (ເສົາຄ້ຳທີ1)

ການປະກອບສ່ວນຂອງພາກທຸລະກິດ ນຳໂດຍ ສຄອ ແຫ່ງຊາດລາວ ໄດ້ຈັດຕັ້ງກອງປະຊຸມປຶກສາຫາລືພາກລັດ ແລະ ພາກທຸລະກິດ ໃນຂັ້ນຕ່າງໆ ເປັນຕົ້ນແມ່ນ ການຈັ້ງຕັ້ງ ກອງປະຊຸມທຸລະກິດລາວ (LBF), ກອງປະຊຸມ ພົບປະພາກລັດ-ພາທຸລະກິດຂັ້ນແຂວງ(LPPD), ການຈັ້ງຕັ້ງປະຕິບັດຄຳສັ່ງເລກທີ 02/ນຍ ການ, ການປະເມີນການອຳນວຍຄວາມສະດວກທາງດ້ານການຄ້າ, ການລົງທຶນຂັ້ນແຂວງ ແລະ ອື່ນໆ. ພ້ອມດຽວກັນນີ້ກໍ່ຍັງໄດ້ ປະກອບຄຳເຫັນຕໍ່ການ ປັບປຸງນິຕິກຳ ແລະ ກົດໝາຍທີ່ຕິພັນກັບ ທຸລະກິດ ເປັນຕົ້ນແມ່ນ: ກົດໝາຍອາ ກອນມູນຄ່າເພີ່ມ, ກົດໝາຍອາກອນຊົມໃຊ້, ກົດໝາຍອາກອນລາຍໄດ້, ກົດໝາຍຄຸ້ມຄອງສວຍສາອາກອນ, ກົດໝາຍພາສີ, ກົດໝາຍປະກັນສັງຄົມ, ກົດໝາຍປະກັນສຸຂະພາບ, ກົດໝາຍວ່າດ້ວຍການຕ້ານການທຸ້ມຕະຫຼາດ ແລະ ການອຸດໜູນ, ປະກອບຄຳເຫັນຕໍ່ຮ່າງກົດໝາຍພາສີສະບັບປັບປຸງ, ຮ່າງດຳລັດ, ກົດລະບຽບທີ່ຕິດພັນກັບທຸລະກິດ, ໄດ້ປະກອບ ຄຳຄິດຄຳເຫັນ ຕໍ່ບົດສະຫຼຸບ ແຜນພັດທະນາ ເສດ ຖະກິດ-ສັງຄົມ VIII ແລະ ແລະ ວິໃສທັດຂອງ ສປປ ລາວ ຮອດປີ 2030. ປະກອບສ່ວນໃນການປັງປຸງກົນໄກການປຶກສາຫາລື ພາກລັດ ແລະ ພາກທຸລະກິດ ເພື່ອປັບປຸງ ສະພາບແວດລ້ອມ ຂອງການດຳເນີນທຸລະກິດ ໃນ ສປປ ລາວ ໂດຍສະເພາະແມ່ນ:

ວຽກງານກອງປະຊຸມທຸລະກິດລາວ LBF , ສະພາບແວດລ້ອມທຸລະກິດ ເຊັ່ນ: (1) ໄດ້ສຳເລັດ ຈັດກອງປະຊຸມ LBF ຄັ້ງທີ 10, ຄັ້ງທີ 11 , ຄັ້ງທີ 12 ແລະ ກະກຽມກອງປະຊຸມ LBF ຄັ້ງທີ 13 ທີ່ຄາດວ່າຈະໄດ້ຈັດຕັ້ງຂື້ນໃນ ທ້າຍປີ 2020 ນີ້,(2) ໄດ້ແຕ່ງຕັ້ງຕາງໜ້າພາກທຸລະກິດ ເຂົ້າໃນແຕ່ລະອານຸກຳມະການ(Taskforce) ໃນຄຳສັ່ງເລກທີ 02/ນຍ ເພື່ອປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງເລກທີ 02/ນຍ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນດີ. (3) ໄດ້ປຶກສາຫາລື ເພື່ອປັບປຸງໂຄງຮ່າງ ແລະ ແບບແຜນວິທີເຮັດວຽກຂອງກອງເລຂາ ກອງປະຊຸມທຸລະກິດລາວ ແລະ ກອງເລຂາຂອງຄຳສັ່ງເລກທີ 02 ໃຫ້ມີການປະສານງານໄດ້ດີຂື້ນ, (4) ຈັດກອງປະຊຸມຮ່ວມກັບກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະການລົງທຶນ ຕໍ່ກັບຮ່າງຄຳແນະນຳຂອງລັດຖະມົນຕີກະຊວງແຜນການ ແລະການລົງທຶນ ວ່າດ້ວຍການໃຫ້ນະໂຍບາຍ ສົ່ງເສີມການລົງທຶນດ້ານພາສີ ແລະອາກອນມູນຄ່າເພີ່ມສຳລັບແຜນນຳເຂົ້າຂອງວິສາຫະກິດ ໃນ 9/2018 ທີສຄອຊ, (5) ເຂົ້າຮ່ວມການໄປທັດສະນະສຶກສາເພື່ອແລກປ່ຽນບົດຮຽນ ກ່ຽວກັບ ການບໍລິຫານ, ການຮ່ວມມື ໃນການ ຄຸ້ມຄອງອີງກອນ ກັບປະເທດໄທ ເພື່ອປຶກສາຫາລື ກ່ຽວກັບ ການແກ້ໄຂອຸປະສັກ ໃນຂົງເຂດວຽກງານການທ່ອງທ່ຽວ, ລະຫວ່າງ ພາກລັດ ແລະ ພາກທຸລະກິດ, ການສ້າງແຜນວາດການປະຕິຮູບການລົງທຶນ ແລະ ກົນໄກການຮ້ອງທຸກດ້ານການລົງທຶນ, (6) ຈັດກອງປະຊຸມ ຮ່ວມກັບກົມພາສີ ກະຊວງການເງິນ ປຶກສາຫາລືບັນຫາທີພາກທຸລະກິດສະເໜີຕໍ່ລັດຖະບານ( ຂັ້ນຂອດການນຳເຂົ້າ, ຄົ້ນຄ້ວາ ແຜນ Master list, ສະເໜີຍຶດເວລາບໍລິການຂອງລັດດ້ານພາສີຕາມດ່ານສາຍແດນ, (7) ຈັດຕັ້ງປຶກສາຫາລືຕໍ່ຮ່າງຜົນການສຳຫຼວດດັດສະນີການສ້າງສິ່ງອຳນວຍຄວາມສະດວກທາງ

ດ້ານການຄ້າ ແລະການລົງທຶນ ແລະ ເຜີຍແຜ່ ຜົນການສຳຫຼວດ ດັດສະນີການສ້າງສິ່ງອຳນວຍຄວາມສະດວກທາງດ້ານການຄ້າ ແລະການລົງທຶນ ( Provincial Facilitation for Investment and Trade Index( ProFIT) ຈຳນວນ 03 ຄັ້ງ, (8) ເຂົ້າຮ່ວມໂຄງການສູນຜູ້ປະກອບການແມ່ຍິງ ໃນກອບການຮ່ວມມືທີ່ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ: ຈັດຕັ້ງປະຕິບັດຕາມແຜນ 2017-2019 ບັນລຸສ້າງຜູ້ປະກອບການແມ່ຍິງ 600 ຄົນ ເຂົ້າເຖິງໂຄງການໂດຍການພັດທະນາທຸລະກິດຂອງເຂົາເຈົ້າ, ຝຶກອົບຮົມວິຊາຊີບ, ຝຶກອົບຮົມກ່ຽວຂ້ອງ, ໃຫ້ຄຳແນະນຳ ແລະຄຳປຶກສາແກ່ແມ່ຍິງ ( ຝຶກດ້ານການບໍລິຫານຈັດການທຸລະກິດນ້ອຍ, ຮຽນພາສາອັງກິດ, ອອກແບບເວັບໄຊ, ຫຼັກສູດຕຳຫູກ, ການຍ້ອມສີທຳມະຊາດ , ເສີມສວຍ) (9) ຮ່ວມມືກັບ ກະຊວງອຸດສາຫະກຳ ແລະການຄ້າ ຈັດ ກອງປະຊຸມປັບປຸງຄວາມສະດວກໃນການເລີ່ມຕົ້ນທຸລະກິດ ຕາມ ຄຳສັ່ງ 02/ນຍ, ແລະກອງປະຊຸມ ປຶກສາຫາລືພາກລັດພາກທຸລະກິດບັນຫາທີ່ຕິດພັນການອຳນວຍຄວາມສະດວກທາງດ້ານການຄ້າ ແລະ ພາສີ-ອາກອນ, (10) ສຄອຊ ຮ່ວມມືກັບ ກະຊວງແຜນການແລະການລົງທຶນ ໂດຍເປັນປະທານ ທ່ານ ນ.ວາລີ ເວດສະພົງ, ຮອງປະທານ ສຄອ ແຫ່ງຊາດ ຫົວຂໍ້: ກອງປະຊຸມປັບປຸງຄວາມສະດວກໃນການດຳເນີນທຸລະກິດ ແລະ ການລົງທຶນຢູ່ ສປປລາວ, (11) ເຂົ້າຮ່ວມກອງປະຊຸມສະໄໝສາມັນ ຂອງຄະນະກຳມະການຄຸ້ມຄອງກອງທຶນປະກັນສຸຂະພາບແຫ່ງຊາດ, (12) ເຂົ້າຮ່ວມກອງປະຊຸມ ກົນໄກ ການປະສານງານແລະຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດການປັບປຸງ 10 ຕົວຊີ້ວັດ ຕາມຄຳສັ່ງເລກທີ 02/ນຍ, (13) ຮ່ວມກັບ ຄະນະກຳມະທິການ ແມ່ ເດັກ ຈັດຕັ້ງປະຕິບັດສົນທິສັນຍາ ເດັກ ແລະທົບທວນແຜນຈັດຕັ້ງປະຕິບັດ ຜ່ານມາ.

**2.3.2 ການປັບປຸງນິຕິກຳເຊັ່ນ: (1)** ໄດ້ຄົ້ນຄ້ວາ-ປັບປຸງ ດຳລັດເລກທີ 316/ນຍ ລົງວັນທີ 20/11/2009 ມາເປັນດຳລັດເລກທີ 237/ນຍ ລົງວັນທີ 18 ເມສາ 2020, (2) ໄດ້ສຳເລັດການສ້າງແຜນຍຸດທະສາດເພື່ອພັດທະນາພາກທຸລະກິດເອກະຊົນ ຢູ່ ສປປ ລາວ ແຕ່ປີ 2018-2020 ຊຶ່ງໄດ້ຖືກຮັບຮອງເອົາໃນເດືອນ 5/2018, (3) ເຂົ້າຮ່ວມກອງປະຊຸມປຶກສາຫາລື ກ່ຽວກັບ ການຈັດຕັ້ງປະຕິບັດການປະເມີນຜົນກະທົບຂອງຮ່າງນິຕິກຳ ຫຼື RIA ຮ່ວມກັບ ກະຊວງຍຸຕິທຳ ປະຈຳປີ 2018, (4) ເຂົ້າຮ່ວມການປຶກສາຫາລື ຮ່າງກົດໝາຍ ວ່າດ້ວຍການປະກັນສັງຄົມ(ສະບັບປັບປຸງ)ຮ່ວມກັບ ກະຊວງແຮງງານ ແລະສະຫວັດດີການສັງຄົມ, ສູນກາງສະຫະພັນກຳມະບານລາວ, ກະຊວງ ຍຸຕິທຳ, ຄະນະກຳມະທິການກົດໝາຍສະພາແຫ່ງຊາດ, (4) ຮ່ວມກັບ ກະຊວງການເງິນທາບທາມຄຳເຫັນຕໍ່ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ , ກົດໝາຍວ່າດ້ວຍອາກອນລາຍໄດ້, ແລະ ກົດໝາຍອາກອນຊົມໃຊ້ ແລະ ໄດ້ສັງລວມຄຳເຫັນຂອງພາກທຸລະກິດ ຕໍ່ຮ່າງກົດໝາຍດັ່ງກ່າວ ເພື່ອໃຫ້ພາກສ່ວນກ່ຽວຂ້ອງຂອງລັດຖະບານພິຈາລະນາ, (5) ເຂົ້າຮ່ວມຄະນະກຳມະທິການຄົ້ນຄວ້າປຶກສາຫາລື ຜ່ານເນື້ອໃນຮ່າງກົດໝາຍການຄ້າອີເລັກໂທນິກ , ຮ່າງກົດໝາຍທະນາຄານ , ຮ່າງກົດໝາຍ ວ່າດວ້ຍປ່າໄມ້ , ຮ່າງກົດໝາຍປະກັນສຸຂະພາບ , ຮ່າງກົດໝາຍວ່າດ້ວຍທີ່ດິນ, ການປັບປຸງດຳລັດ ວ່າດ້ວຍການດຳເນີນທຸລະກິດເຂົ້າ-ສົ່ງອອກ ແລະ ຈຳໜ່າຍຍານພາຫະນະ, , ປະກອບຄຳເຫັນໃສ່ຮ່າງຂໍ້ຕົກລົງວ່າດ້ວຍຕະຫຼາດ, ຮ່າງປຶດແນະນຳການຈັດຕັ້ງ

ປະຕິບັດຂໍ້ຕົກລົງວ່າດ້ວຍຕະຫຼາດ, ຮ່າງ(ສະບັບປັບປຸງ) ຂໍ້ຕົກລົງວ່າດ້ວຍສູນການຄ້າ ແລະ ຮ້ານສັບພະສິນຄ້າ, ຮ່າງ (ສະບັບປັບປຸງ)ຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ຍ່ອຍ, ຮ່າງບົດແນະນຳການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ, (6) ຮ່ວມກັບຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ ກ່ຽວກັບ ເຜີຍແຜ່ ວຽກງານປະກັນສັງຄົມ,ປຶກສາຫາລື ແລະແລກປ່ຽນແນວຄວາມຄິດຂອງບັນດາແຂວງຄວາມຄິດຂອງຫົວໜ່ວຍແຮງງານຕໍ່ການຈັດຕັ້ງວຽກງານປະກັນສັງຄົມ ໃນໄລຍະຜ່ານມາ ໃນເດືອນ 10/2018 ທີ່ ສຄອຊ, (7) ຮ່ວມກັບ ກະຊວງສຶກສາທິການ ແລະກິລາ ກ່ຽວກັບການທາບທາມຄຳເຫັນຕໍ່ຮ່າງກົດໝາຍອະຊີວະສຶກສາ , ໃນ ເດືອນ 10/2018 ທີ່ ສຄອຊ, (8) ຈັດຮ່ວມກັບ ໂຄງການ ລູນາ ໃນຫົວຂໍ້: ກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບປັບປຸງ, ຮ່າງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງດ້ານເສດຖະກິດ , (ຮ່າງ) ຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາກ່ຽວກັບເຄື່ອງໝາຍການຄ້າ ແລະ ຊື່ການຄ້າ , (ຮ່າງ)ຂໍ້ຕົກລົງວ່າດ້ວຍ ການສ້າງຕັ້ງ ແລະ ຄຸ້ມຄອງຫ້ອງການຜູ້ຕາງໜ້າຂອງນິຕິບຸກຄົນຕ່າງປະເທດ ຢູ່ໃນ ສປປ ລາວ, (ຮ່າງ) ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, (9) ເຂົ້າຮ່ວມການປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດຂອງຮ່າງນິຕິກຳ ແລະກົດໝາຍ ແລະ ປຶກສາຫາລືເພື່ອຜ່ານຮ່າງບົດລາຍງານການຈັດຕັ້ງປະຕິບັດກ່ຽວກັບວຽກງານປະເມີນຜົນກະທົບຂອງຮ່າງນິຕິກຳ ແລະແຜນການໃນຕໍ່ໜ້າໃນ ສປປລາວ , ຄົ້ນຄ້ວາ ຕໍ່ກັບ ຮ່າງດຳລັດວ່າດ້ວຍຄວາມປອດໄພ ແລະສຸຂະພາບແຮງງານ , ຄົ້ນຄ້ວາ ຜ່ານໃບທົດສອບ ແລະຢັ້ງຢືນສີມືແຮງງານ ,ຄົ້ນຄ້ວາ ແລະແກ້ໄຂຂໍ້ຂັດແຍ່ງແຮງງານ ໃນລະບົບສາມຝ່າຍ ແລະຂໍ້ຂັດແຍ່ງທາງທຸລະກິດ ໃຫ້ສະມາຊິກ, (10) ຈັດກອງປະຊຸມ ສຳມະນາ ຮ່ວມມືກັບ ກົມສ່ວຍສາອາກອນ,ກະຊວງການເງິນ ໃນຫວົຂໍ້: ການແຈ້ງມອບພັນທະສ່ວຍສາອາກອນດ້ວຍຕົນເອງຜ່ານເວບໄຊ ທີ່ ລະບົບໃໝ່ຂອງກົມສວຍສາອາກອນ, ໃນວັນທີ 28 /11/2018 ແລະ ອື່ນໆ. , (11) ເຂົ້າຮ່ວມ ປະຊຸມຄົ້ນຄວ້າປຶກສາຫາລື ຜ່ານເນື້ອໃນຮ່າງກົດໝາຍພາສີ ສາມຄັ້ງ, (12) ປະກອບຄຳເຫັນໃສ່ ແລະເຂົ້າຮ່ວມ ຮ່າງດຳລັດການຄ້າອີເລັກໂທນິກ , ຮ່າງກົດໝາຍທະນາຄານ , ຮ່າງດຳລັດ ວ່າດ້ວຍທຸລະກິດຍານພາຫະນະທາງບົກ , ຮ່າງດຳລັດຄຸ້ມຄອງໄພພິບັດ, ຮ່າງນິຕິກຳອື່ນໆ, (13) ຈັດກອງປະຊຸມປຶກສາຫາລື ແລະກະກຽມແຜນການ ເຄື່ອນໄຫວ ຂອງຄະນະຮັບຜິດຊອບຮ່າງລະບຽບຄຸ້ມຄອງຜູ້ໄກ່ເກ່ຍ, (14) ພະແນກໄດ້ເຂົ້າຮ່ວມຝຶກອົບຮົມສ້າງຄວາມເຂັ້ມແຂງວຽກງານ ການປະເມີນຜົນກະທົບຂອງຮ່າງນິຕິກຳ , (15) ເຂົ້າຮ່ວມ ລົງຕິດຕາມໃນການຈັດຕັ້ງປະຕິບັດເງື່ອນໄຂແລະມາດຕະຖານຄຳແນະນຳສຳລັບຫົວໜ່ວຍທຸລະກິດໃນການດຳເນີນທຸລະກິດລະຫວ່າງ ພະຍາດໂຄວິກ 19, (16) ຄະນະປະທານ ເຂົ້າຮ່ວມ ຮ່າງຂໍ້ຕົກລົງທີ່ໄດ້ປັບປຸງຈາກຄຳແນະນຳສະບັບເລກທີ 0537/ອຄ.ກທຄວ ກ່ຽວກັບຂໍ້ຕົກລົງວ່າດ້ວຍ ການຂຶ້ນທະບຽນວິສາຫະກິດ ແລະອອກໃບອະນຸຍາດດຳເນີນທຸລະກິດ, (17) ເຂົ້າຮ່ວມ ຜ່ານຮ່າງຂໍ້ຕົກລົງວ່າດ້ວຍ ການຄຸ້ມຄອງ ແລະການນຳໃຊ້ກອງທຶນຊ່ວຍເຫຼືອຜູ້

ອອກແຮງງານ ຢູ່ຕ່າງປະເທດ ແລະແຮງງານຕ່າງປະເທດ ຢູ່ ສປປລາວ, (18) ຄະນະສຄອຊ ແລະອົງການສາມຝ່າຍ ຮ່າງຂໍ້ຕົກລົງວ່າດ້ວຍ ຂອບລະດັບມາດຖານສີມືແຮງງານ, ແລະ ບົດແນະນຳໃນການສ້າງ ແລະ ນຳໃຊ້ມາດຕະຖານສີມືແຮງງານແຫ່ງຊາດ, (19) ສັງລວມຂໍ້ສະເໜີກ່ຽວກັບນະໂຍບາຍ ແລະມາດຕະການແກ້ໄຂຜົນກະທົບທາງເສດຖະກິດຈາກການແຜ່ລະບາດຂອງ ພະຍາດໂຄວິກ 19 ຕໍ່ທຸລະກິດດ້ານແຮງງານ ແລະສະຫວັດດີການສັງຄົມ.

**2.3.3 ວຽກການປຶກສາຫາລື ສາມຝ່າຍຫຼື ໄຕພາຄີ ເຄື່ອນໄຫວດັ່ງນີ້:** (1) ສຄອຊ ຈັດຕັ້ງກອງປະຊຸມ ປຶກສາຫາລື ຄ່າແຮງງານຂັ້ນຕ່ຳນຳ ພາກທຸລະກິດ ເພື່ອສະເໜີຄຳຄິດເຫັນຕໍ່ລັດຖະບານ ຈຳ ນວນ 05 ຄັ້ງ, (2) ຈັດກອງປະຊຸມວຽກງານ ສາຍພົວພັນແຮງງານປຶກສາຫາລືຄ່າແຮງງານຂັ້ນຕ່ຳ ຂອງອົງການສາມຝ່າຍ( ກະຊວງແຮງງານ ແລະສະຫວັດດີການສັງຄົມ ຕ່າງໜ້າລັດຖະບານ, ສູນກາງສະຫະພັນກຳມະບານລາວ ຕ່າງໜ້າຜູ້ອອກແຮງງານ ແລະສະພາການຄ້າ ແລະອຸດສາຫະກຳແຫ່ງຊາດລາວ ຕ່າງໜ້າຜູ້ໃຊ້ແຮງງານ ຈຳນວນ 05 ຄັ້ງ, (3) ຈັດຕັ້ງກອງປະຊຸມເພື່ອປະກອບຄຳເຫັນຕໍ່ຮ່າງແຜນຍຸດທະສາດວຽກງານປົກປ້ອງສັງຄົມແຫ່ງຊາດ, ຮ່າງແຜນຍຸດທະສາດການຈ້າງງານໃນຊົນ ນະບົດ, ປຶກສາຫາລືກະກຽມເນື້ອໃນສຳລັບກອງປະຊຸມອາຊຽນກ່ຽວກັບແຮງງານເຄື່ອນຍ້າຍ ຄັ້ງທີ 10,11 , (4) ຈັດກອງປະຊຸມວຽກສາຍພົວພັນແຮງງານ ຂອງອົງການສາມຝ່າຍ ທຸກໆ ສາມເດືອນ ນັບຕັ້ງແຕ່ປີ 2010 ຈົນເຖິງປັດຈຸບັນ, (5) ປຶກສາຫາລືກັບອົງການສາມຝ່າຍໃນການກະກຽມແຜນກິດຈະກຳ ສະເຫຼີມສະຫຼອງວັນຄົບຮອບ100ປີຂອງການສ້າງຕັ້ງອົງການແຮງງານສາກົນ, (6) ປຶກສາຫາລືສົນທິສັນຍາຂອງອົງການແຮງງານສາກົນເລກທີ 111 ວ່າດ້ວຍການຈຳແນກທີ່ພົວພັນເຖິງການຈ້າງງານ ແລະອາຊີບ ແລະ ເລກທີ 182ວ່າດ້ວຍການຫ້າມ ແລະ ການດຳເນີນການລົບລ້າງການໃຊ້ແຮງງານເດັກໃນທຸກຮູບແບບທີ່ຮ້າຍແຮງທີ່ສຸດໂດຍທັນທີ (7) ປຶກສາຫາລືສາມຝ່າຍ ກ່ຽວກັບແຜນງານໂຄງການຮ່ວມມືດ້ານວຽກງານຄວາມປອດໄພ ແລະສຸຂະພາບແຮງງານສາກົນ-ສ ເກົາຫລີ ,ໂຄງການ OSH ZERO ,ແຜນການຮ່ວມມື ປີ 2017-2020, (8) ຄະນະກຳມະທິການຕ່າງໜ້າຜູ້ໃຊ້ແຮງງານ ເຂົ້າຮ່ວມກອງປະຊຸມຄະນະກຳມະການຈັດຕັ້ງແຂ່ງຂັນສີມືແຮງງານແຫ່ງຊາດ ຄັ້ງທີ III ຮ່ວມກັບ ກະຊວງແຮງງານ ແລະສະຫວັດດີການສັງຄົມ , ສູນກາງສະຫະພັນກຳມະບານລາວ, (9) ຄົ້ນຄ້ວາກ່ຽວກັບການເກັບກຳຂໍ້ມູນໃນການລາຍງານບັນດາສົນທິສັນຍາຂອງອົງການແຮງງານສາກົນ ແລະ ປຶກສາຫາລືຂະບວນການໃຫ້ສັດຕະຍາບັນຂອງສົນທິສັນຍາ, (10) ເຂົ້າຮ່ວມຄະນະກຳມະທິການຖານຂໍ້ມູນແຮງງານ ,ຈັດຫາງານ ແລະ ການສ້າງເວບໄຊ ການຊອກວຽກເຮັດງານທຳ, (11) ເຂົ້າຮ່ວມຄະນະກຳມະທິການປະເມີນຜົນຂອງການຈັດຕັ້ງປະຕິບັດຂໍ້ສະເໜີແນະພາຍໃຕ້ກົນໄກ UPR (ສິດທິມະນຸດ), (12) ຈັດງານ 'ຕະຫຼາດນັດແຮງງານ' ຮ່ວມກັບ ຄະນະວິສາຫະວະກຳສາດ , ສະພາການຄ້າ ແລະອຸດສາຫະກຳ ອີຢູ ເພື່ອຊ່ວຍ ສ້າງໂອກາດໃຫ້ ນັກສຶກສາ ,ຄູອາຈານພົບປະກັນ ພາກທຸລະກິດ ດ້ານວຽກງານພັດທະນາບຸກຄະລາກອນ ແລະ ຊອກວຽກເຮັດງານທຳໃຫ້ນັກສຶກສາຈົບໃໝ່ ນັບຕັ້ງແຕ່ປີ 2012 ຈົນເຖິງປັດຈຸບັນ ຈຳນວນ 8 ຄັ້ງ. ວຽກງານການ

ເຄືອນໄຫວ ຄະນະປະທານ ແລະ ຄະນະກຳມະທິການຕ່າງໜ້າຜູ້ໃຊ້ແຮງງານ ຢູ່ຕ່າງປະເທດເຊັ່ນ: (1) ເຂົ້າຮ່ວມກອງປະຊຸມປະຈຳປີ ຂອງອົງການແຮງງານສາກົນ ທີ່ ເຈນີວາ ໂດຍ ທ່ານ ອຸເດດ ສຸວັນນະວົງ ,ປະທານ ສຄອ ແຫ່ງຊາດ ປີ 2017 ແລະ ທ່ານ ທະນົງສິນ ກັນລະຍາ ,ຮອງປະທານ ສຄອ ແຫ່ງຊາດລາວ ປີ 2018 ແລະ ທ່ານ ນ.ດາວອະດົງ ພິລາໄຊພິທັກ ຮອງເລຂາທິການສຄອແຫ່ງຊາດ ລາວ ໃນປີ 2019, (2)ຕາງໜ້າພາກທຸລະກິດລາວ ເຂົ້າຮ່ວມກອງປະຊຸມ Regional Multi Stakeholderr' Forum : Responsible Business Conduct for Safe labour Migration in ASEAN, 19-20 ກັນຍາ 2018, (3) ເຂົ້າຮ່ວມກອງປະຊຸມ 7th ASEAN Labour Inspection Conferene, 27-28 Sep 2018, (3) ເຂົ້າຮ່ວມ ກອງປະຊຸມ ພາກພື້ນ 9th Asean Regional Tripartite Social Dialogue Conference strengthening social partnerdhip ,9-10 October 2018, (4) ເຂົ້າຮ່ວມ 42nd ASEAN CONFEDERATION OF EMPLOYERS (ACE) CEOs' MEETING ທີ່ປະເທດ ຟີລິປິນ, (5) ເຂົ້າຮ່ວມກອງປະຊຸມ Consultaive Forum on Regional Cooperation Against Human Trafficking Labour Exploilation, and Slavery at sea 27-28 March 2018 ທີ່ ບາລີ ປະເທດອິນໂດເນເຊຍ, (7) ຈັດຕັ້ງກອງປະຊຸມຮ່ວມກັບຊ່ຽວຊານອົງການແຮງງານສາກົນ( ILO Skill Special list) ເພື່ອສ້າງແຮງງານລາວໃຫ້ມີສີມື ໃນວັນທີ 28/3/2018 ແລະ (8) ຕ້ອນຮັບທ່ານ Wade Bromley , senior specialist on Employers' activities ,ILO.

**2.3.4 ວຽກງານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນເຊັ່ນ:** (1) ປະກອບລາຍຊື່ ທ່ານ ຮອງ ປະທານ ສຄອຊ ( ທ່ານ ນາງ ວາລີ ເວດສະພົງ ) ແລະ ທ່ານ ນາງ ດາວອະດົງ ພິລາໄຊພິທັກ ປະກອບເຂົ້າໃນຄະນະຮັບຜິດຊອບຮ່າງລະບຽບ ການຄຸ້ມຄອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນຕ່າງປະເທດ ແລະ ຮ່າງລະບຽບຄຸ້ມຄອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ ແລະ (2) ຄະນະບໍລິຫານງານ ແລະສະມາຊິກ ສຄອ ແຫ່ງຊາດ ເຂົ້າຮ່ວມກອງປະຊຸມທາບທາມຮ່າງຄຳແນະນຳຂອງສານປະຊາຊົນສູງສຸດວ່າດ້ວຍການພິຈາລະນາສານຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ 16/3/18 ແລະໄດ້ປະກອບຄຳເຫັນສິ່ງໃຫ້ສານປະຊາຊົນສູງສຸດ

**2.3.5 ຈັດກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ເຊັ່ນ:** (1) ຈັດສົ່ງທຶນ AOTS-Japan , HIDA/ NICC ໃຫ້ສະມາຊິກ ສະພາການຄ້າ ແລະອຸດສາຫະກຳແຫ່ງຊາດ ຝຶກອົບຮົມໄລຍະ ສອງອາທິດ ທີ່ປະເທດຍີ່ປຸ່ນ ໃນຫົວຂໍ້: Management Training Program , Industry Relation and Human Resoure Management , Occupational Safety & Health Management & Work Environment Improvement, ຈຳນວນ 06 ທຶນ ຕໍ່ປີ ນັບຕັ້ງແຕ່ປີ 2003 ຈົນເຖິງປັດຈຸບັນ ໄດ້ຫຼາຍກວ່າ 50 ທຶນ, (2) ຈັດຮ່ວມມືກັບ ມະຫາໄລວິທະຍາໄລ ຊົງຢອງຈັດຫຼັກສູດ MBA ມີ ນັກທຸລະກິດ ເຂົ້າຮ່ວມ 42

ທ່ານ, ສ້າງລາຍຮັບໄດ້ ຫຼາຍກວ່າ 25 ລ້ານກີບ, (3) ຈັດຮ່ວມກັບ AOTS-Bangkok ຈັດ 6 ຄັ້ງ ຕໍ່ປີ ໃນຫົວຂໍ້: ຫຼັກສູດການພັດທະນາບຸກຄະລາກອນຢ່າງມື້ອາຊີບ( 5ສ) , ການບໍລິຫານການຂົນສົ່ງ ລາຍຮັບທັງໝົດ 400 ກວ່າ ລ້ານກີບ.

**2.3.6** ວຽກງານໂຄງການການສຶກສາແບບຄອບຄູ່ DCT ຂອງການຮ່ວມມືລາວເຢຍລະມັນ VELA 2 ໂຄງການ ສາມປີ 2019-202: (1) ຈັດກອງປະຊຸມ ເຜີຍແຜ່ ສະເໜີ ຮູບແບບ ຂອງ ສູນການສຶກສາແບບຄອບຄູ່ ໃຫ້ຄະນະບໍລິຫານງານ ສຄອຊ ສອງຄັ້ງ ໂດຍການເປັນປະທານ ທ່ານ ອຸເດດ ສຸວັນນະວົງ ປະທານ ສຄອຊແລະ ທ່ານ ອາເລັກ ຫົວໜ້າໂຄງການ , ຊ່ຽວຊານ ເອກາດ ໂຄງການ GIZ, (2) ການສ້າງຄວາມສາມາດຂອງບຸກຄະລາກອນ ກ່ຽວຂ້ອງກັບ ສູນບໍລິການ DCT, (3) ການສົ່ງເສີມ / ການຕະຫຼາດ DCT ໄດ້ສ້າງ ສື່ສິ່ງພິມໂຄສະນາ ຂອງ ສູນບໍລິການ ອສຄ, ຈັດກອງປະຊຸມພົບປະປຶກສາຫາລື ກ່ຽວກັບການກະກຽມງານສົ່ງເສີມອາຊີວະສຶກສາ ທີ່ ແຂວງຈຳປາສັກ, ນະຄອນປາກເຊ ແລະ ນະຄອນຫລວງພະບາງ, (4) ທີມງານ ສຄອຊ ໄດ້ລົງເຮັດວຽກ ກັບສຄອ ແຂວງ ເພື່ອ ສ້າງຄວາມເຂັ້ມແຂງ ໃນການຈັດງານ ຕະຫຼາດນັດແຮງງານ ແລະຈັດງານ ສາມແຂວງ , ແຂວງ ວຽງຈັນ, ຫຼວງພະບາງ, ຈຳປາສັກ, (5) ຈັດ ກອງປະຊຸມປຶກສາຫາລື ລະຫລ່າງ ຄະນະປະທານ ສຄອຊ ແລະ ຫ້ອງການສະພາອະຊີວະສຶກສາ ,ກະຊວງສຶກສາທິການ ແລະກິລາ ໃນການຮ່ວມມື ວຽກງານ ສູນບໍລິການ DCT ສອງຄັ້ງ, (6) ການພັດທະນາຊຸດການຝຶກອົບຮົມບໍລິການຫຼັກ DCT ໄດ້ ດຳເນີນງານແລະທົດລອງໃຊ້ ໄດ້ມີການເຮັດການສຳຫຼວດເພິ່ງພໍໃຈຂອງຄູ່ຮ່ວມງານ, (7) ພັດທະນາເຄື່ອງມືໂຄສະນາວຽກງານອາຊີວະສຶກສາແບບຄວບຄູ່, (8) ກະກຽມພິທີເປີດສູນ DCT ຢ່າງເປັນທາງການໃນ ວັນທີ 25/9/2020 ແລະ ອື່ນໆ.

## 2.4 ວຽກງານພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ (SME) (ເສົາຄ້ຳທີ 2)

ສຄອຊ ໄດ້ ເຄື່ອນໄຫວຕາມ ພາລະບົດບາດ ຂອງຕົນ ແລະ ໄດ້ເລັ່ງໃສ່ການພັດທະນາ ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີຄວາມເຂັ້ມແຂງ ເຂົ້າສູ່ AEC ແລະ ສ້າງຄວາມເຂັ້ມແຂງໃຫ້ SME ໂດຍຮ່ວມມືກັບໂຄງການພັດທະນາ ຂອງລັດຖະບານ ແລະ ບັນດາອົງການຈັດຕັ້ງສາກົນຕ່າງໆ ເພື່ອຈັດຝຶກອົບຮົມ, ສຳມະນາ ແລະ ການແລກປ່ຽນບົດຮຽນ ດ້ານວິຊາການ ໃຫ້ແກ່ຜູ້ປະກອບການ ໂດຍສະເພາະແມ່ນການຮ່ວມມືກັບ ກົມສົ່ງເສີມ ແລະ ພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ກະຊວງອຸດສາຫະກຳ ແລະ ການຄ້າ, ໂຄງການ RELATED-GIZ ໃນການສ້າງສູນບໍລິການທຸລະກິດຂະໜາດນ້ອຍ ແລະ ກາງ (ສບວ) ຂຶ້ນໃນປີ 2017 ເພື່ອການພັດທະນາ SMEs ໃນ ສປປ ລາວ. ໄດ້ຈັດຝຶກອົບຮົມ ແລະ ກິດຈະກຳ ໃນຫົວຂໍ້ຕ່າງໆໃຫ້ກັບ SMEs ເຊັ່ນ: Book Keeping, 5ສ KAIZEN, ການເຂົ້າຫາແຫຼ່ງທຶນ, E-Commerce, ການຂຽນແຜນທຸລະກິດ, ຈັດງານ Food truck, ຈັດ SSC Breakfast ແລະ ການຝຶກອົບອື່ນໆ; ທາງສູນສາມາດບໍລິການໃຫ້ແກ່ ຜູ້ປະກອບການ SME ຈຳນວນ 1,913 ທ່ານ. ສູນໄດ້ເຊັນ MOU

ຮ່ວມກັບ ມະຫາວິທະຍາໄລ ຂອນແກ່ນ (ປະເທດໄທ) ເຂົ້າຮ່ວມກອງປະຊຸມທາງດ້ານວິຊາການພາຍໃນ ແລະຕ່າງປະເທດ ຈໍານວນ ຫລາຍຄັ້ງເຊັ່ນ: ວຽກງານຊັບສິນທາງປັນຍາໂລກ, ຮັບຜິດຊອບຄະນະທີ່ປຶກສາ (ASEAN SME Council), ເຮັດການວິໄຈກ່ຽວກັບ ໂອກາດ ແລະ ສິ່ງທ້າທາຍ ທີ່ແທ້ຈິງຂອງຂະແໜງການ SMEs ສປປ ລາວ ພາຍຫຼັງການເຂົ້າເປັນປະຊາຄົມເສດຖະກິດອາຊຽນ, ເຂົ້າຮ່ວມເປັນຜູ້ປະເມີນພາຍນອກ ສູນປະກັນຄຸນນະພາບ, ກະຊວງສຶກສາທິການ ແລະກິລາ, ເຂົ້າຮ່ວມໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານອາຊີວະສຶກສາ ແລະ ອົບຮົມວິຊາຊີບ,ເຂົ້າຮ່ວມໂຄງການ ການສົ່ງເສີມການຄ້າ ໂດຍຜ່ານການສ້າງເປັນມາດຕະຖານໃນຂົງເຂດອາຊີໃຕ້ ແລະ ອາຊີ ຕາເວັນອອກສ່ຽງໃຕ້ , ສ້າງປຶ້ມຄູ່ມືການປຶກສາຫາລືຂັ້ນແຂວງ, ສໍາຫລວດທຸລະກິດ(Enterprise survey)ໂຄງການ GIZ, ຈັດຄະນະທຸລະກິດ SMEs ໄປແລກປ່ຽນບົດຮຽນ ຢູ່ປະເທດອາຊຽນ ແລະ ປະເທດອື່ນໆ ຫຼາຍຄັ້ງ.

ໄດ້ປະຕິບັດໂຄງການ Second Private Development II (ADB) ຮ່ວມກັບກົມນໍາເຂົ້າ-ສົ່ງອອກ, ກົມພັດທະນາ ແລະສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ ແລະກະຊວງວິທະຍາສາດ ກ່ຽວກັບການພັດທະນາສົ່ງເສີມຜູ້ປະກອບການທຸລະກິດຂະໜາດນ້ອຍ ແລະກາງ ໂດຍສະເພາະແມ່ນການພັດທະນາ E-Commerce Platform “Plaosme.com” ແລະ ສົ່ງເສີມແຫຼ່ງກໍາເນີດຜະລິດຕະພັນ (GI), ຮ່ວມກັບກະຊວງວິທະຍາສາດ ແລະ ສິ່ງແວດລ້ອມ , ກົມຊັບສິນທາງປັນຍາ ແລະກົມນໍາເຂົ້າແລະສົ່ງອອກ.

ຮ່ວມກັບອົງການແຮງງານສາກົນ ILO ໃນການຈັດຕັ້ງການຝຶກອົບຮົມໃຫ້ພະນັກງານ ສູນ SME ແລະ ບໍລິສັດທີປຶກສາທີເຂົ້າຮ່ວມໂຄງການ ໃຫ້ກາຍ ເປັນຄູຝຶກ ດ້ານ ການວາງແຜນທຸລະກິດ, ການເຂົ້າຫາແຫຼ່ງທຶນ ແລະ ໃຫ້ຄໍາປຶກສາດ້ານການເງິນໃຫ້ກັບ ບັນດາບໍລິສັດ SME ໃນຂອບເຂດທົ່ວປະເທດ ຫຼາຍກວ່າ 2152 ບໍລິສັດໃນປີ 2019. ໄດ້ສໍາເລັດໃນການ ການສ້າງລະບຽບການຄຸ້ມຄອງກອງທຶນນາງຟ້າ(Angle Investment Fund Article) ເພື່ອສະໜັບສະໜູນຜູ້ປະກອບການ ສ້າງໂຄງການລິເລີ່ມທຸລະກິດ (Business Start Up), ການເຂົ້າຫາແຫຼ່ງທຶນຂອງຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ສາມາດຂະຫຍາຍຕົວ ແລະ ຕໍ່ຍອດທຸລະກິດຂອງເຂົາເຈົ້າໄດ້ ແລະ ການຊ່ວຍເຫລືອຜູ້ປະກອບການໃນການກະກຽມໂຄງການທຸລະກິດ ລວມທັງການວາງແຜນທຸລະກິດ ແລະ ການຈັດຫາຜູ້ລົງທຶນຮ່ວມ “Angel Investor” ແລະ (Business Incubator) ລວມທັງການ ສ້າງສູນຂໍ້ມູນຂ່າວສານໃຫ້ແກ່ທຸລະກິດ SMEs ຢູ່ ສຄອຊ ອີກດ້ວຍ. ໃນປີ 2019 ທາງສູນ ສບວ ໄດ້ເປີດສາຂາເພີ່ມອີກ 2 ແຂວງ ຄື ຢູ່ ແຂວງຫຼວງພະບາງ ແລະ ແຂວງ ຈໍາປາສັກ ໃນໄຕມາດ 1 ຂອງ ປີ 2019. ໄດ້ສົ່ງຜູ້ປະກອບການ SME ໄປຝຶກອົບຮົມເພື່ອຍົກສູງລະດັບວິຊາການຢູ່ສູນຊຽງແສນ ໄດ້ຫຼາຍຄັ້ງ ພ້ອມທັງ ສືບຕໍ່ພັດທະນາບຸກຄະລາກອນ ຂອງ ສູນ ສບວ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃນຂອບການຮ່ວມມືກັບ ບັນດາຄູ່ຮ່ວມພັດທະນາ, ນໍາໃຊ້ຄວາມຮູ້ຄວາມສາມາດຂອງພະນັກງານທີ່ມີ ເພື່ອສ້າງລາຍຮັບເຂົ້າສູນ. ສູນ ສບວ ໄດ້ສືບຕໍ່ຈັດຕັ້ງປະຕິບັດຂອງຢ່າງແຂງແຮງ ໃນປີ 2020 ສືບຕໍ່ຈັດຕັ້ງການຝຶກອົບຮົມ ການວາງແຜນທຸລະກິດ, ການເຂົ້າຫາແຫຼ່ງທຶນ ແລະ ໃຫ້ຄໍາປຶກສາດ້ານການເງິນໃຫ້ກັບ ບັນດາ

ບໍລິສັດ SME ແລະ ຫົວຂໍ້ອື່ນໄດ້ຫຼາຍກວ່າ 20 ຄັ້ງ, ມີຜູ້ເຂົ້າຮ່ວມຫຼາຍກວ່າ 1034 ຄົນ. ໄດ້ຈັດຕັ້ງປະຕິບັດການປ່ອຍກູ້ ແລະ ຄໍ້າປະກັນການເຂົ້າຫາແຫຼ່ງທຶນຂອງ SME ໄດ້ຫຼາຍກວ່າ 500 ລ້ານກີບ, ສືບຕໍ່ຈັດຕັ້ງປະຕິບັດໂຄງການ SME ເຊື່ອມໂຍງກັບອາຊຽນ (SME Website ກັບບັນດາ Website ຂອງໜ່ວຍງານສົ່ງເສີມ SME ໃນອາຊຽນ), ຈັດຕັ້ງປະຕິບັດການລຶບລ້າງການນຳໃຊ້ plastic (Plastic Free Project), ຮ່ວມກັບທະນາຄານທຸລະກິດ ເພື່ອໂຄສະນາກິດຈະກຳ, ການສົ່ງເສີມການເຂົ້າຫຼາແຫຼ່ງທຶນ ຜ່ານລະບົບເວບໄຊຂອງ ສູນ ສບວ ແລະ ການສ້າງຄວາມເຂັ້ມແຂງໃຫ້ SME , ພະນັກງານຂອງສູນ ສບວ ອື່ນໆ.

**ລວມຜູ້ທີ່ໄດ້ຮັບການຝຶກອົບຮົມຈາກສູນ ສບວ ໃນໄລຍະ 03 ປີທີ່ຜ່ານມາມີທັງຫມົດ 5099 ຄົນ ເຊັ່ນ: 2018: 1913 ຄົນ, 2019: 2152 ຄົນ ແລະ 2020:1034 ຄົນ.**

### 2.5 ວຽກງານສົ່ງເສີມຜະລິດຕະພັນລາວ (Made in Laos) (ເສົາຄໍ້າທີ 3)

#### 2.5.1 ວຽກງານວາງສະແດງສິນຄ້າ, ການຕະຫຼາດ ແລະ ຜະລິດຕະພັນ

ເພື່ອປະຕິບັດນະໂຍບາຍຂອງພັກ-ລັດ ຕໍ່ກັບການສົ່ງເສີມການຜະລິດເປັນສິນຄ້າ, ສຄອ ແຫ່ງຊາດລາວ ໄດ້ມີຈັດບັນດາກິດຈະກຳຕ່າງໆແກ່ຜູ້ປະກອບການ ກໍ່ຄືສະມາຊິກ ສຄອ ແຫ່ງຊາດລາວ ໂດຍຫນຶ່ງໃນນັ້ນກໍ່ຄື: ງານວາງສະແດງສິນຄ້າ ແລະ ພົວພັນຕະຫລາດຕ່າງປະເທດ ເຊິ່ງໄດ້ມີການຈັດງານວາງສະແດງພາຍໃນປະເທດ ໂດຍຮ່ວມກັບບັນດາ ສຄອ ແຂວງ , ກຸ່ມ/ສະມາຄົມທຸລະກິດ ເປັນຕົ້ນ: ງານວາງສະແດງຜະລິດຕະພັນລາວ (Made in Laos), ງານວາງສະແດງອາຫານລາວ, ງານວາງສະແດງເຟີນິເຈີລາວ, ງານວາງສະແດງຫັດຖະກຳ ແລະ ງານສະແດງອື່ນໆ ທີ່ຮ່ວມກັບບັນດາກະຊວງກ່ຽວຂ້ອງຕ່າງໆ. ນອກນັ້ນ, ສຄອ ແຫ່ງຊາດລາວ ກໍ່ຍັງໄດ້ມີການນຳພານັກທຸລະກິດ ເຂົ້າຮ່ວມງານວາງສະແດງຢູ່ຕ່າງປະເທດ ເພື່ອໂຄສະນາປະຊາສຳພັນ ແລະ ນຳສະເຫນີ ຜະລິດຕະພັນຂອງຕົນ ສູ່ສາຍຕາຊາວຕ່າງປະເທດ ເຊັ່ນ: ປະເທດໄທ, ອິນໂດເນເຊຍ, ຟີລິບປິນ, ສສ ຫວຽດນາມ, ອິຕາລີ, ອິນເດຍ, ສ. ເກົາຫລີ ແລະ ສປ ຈີນ (ງານວາງສະແດງ 12 ພັນນາ, ງານວາງສະແດງຄຸນມິງ ແລະ ງານວາງສະແດງນານນິງ, ງານວາງສະແດງ ຊຽງໄຮ ອິມຟອດ ເອກສ໌ໂປ ເປັນຕົ້ນ), ໂດຍແຕ່ລະປີ ແມ່ນໄດ້ມີການເຂົ້າຮ່ວມເພີ່ມຂຶ້ນ. ພ້ອມດຽວກັນນີ້ ກໍ່ໄດ້ສຳເລັດ ການສ້າງຕັ້ງຫ້ອງການສົ່ງເສີມຜະລິດຕະພັນລາວ ຢູ່ຫ້ອງການ ສຄອຊ ເພື່ອສົ່ງເສີມໂຄງການພັດທະນາຕ່ອງໂສ້ການຜະລິດຂອງສິນຄ້າ ທີ່ເປັນປາຍແຫລມ, ແທດເຫມາະກັບຄວາມຮຽກຮ້ອງ ຕ້ອງການຂອງຕະຫລາດ, ການຊອກຫາຕະຫລາດ, ການຫຸ້ມຫໍ່ ເປັນຕົ້ນ ໃນນັ້ນ ໄດ້ເນັ້ນໃນຜະລິດຕະພັນຈາກ ເຂົ້າ, ກາເຟ, ອາຫານ, ການທ່ອງທ່ຽວ, ລວມທັງການຢັ້ງຢືນການນຳໃຊ້ ກາໝາຍ Made In Laos , ການຢັ້ງຢືນມາດຕະຖານຄຸນນະພາບ ແລະ ແຫລ່ງກຳເນີດສິນຄ້າ ດັ່ງລາຍລະອຽດລຸ່ມນີ້:

- ການເຂົ້າຮ່ວມງານວາງສະແດງທັງພາຍໃນ ແລະ ຕ່າງປະເທດ **ປີ 2018** ລວມທັງໝົດມີ 33 ງານເຊັ່ນ: ງານວາງສະແດງຢູ່ປະເທດລາວ 03 ງານ, ຢູ່ປະເທດໄທ 05 ງານ, ຢູ່ປະເທດຈີນ 14 ງານ, ຢູ່ປະເທດເກົາຫຼີ 02 ງານ, ຢູ່

ປະເທດຫວຽດນາມ 03 ງານ, ຢູ່ປະເທດ ອິນເດຍ 02 ງານ, ຢູ່ປະເທດຟິລິບປິນ 02 ງານ, ຢູ່ປະເທດອິນໂດເນເຊຍ 01 ງານ ແລະ ຢູ່ປະເທດມາເລເຊຍ 01 ງານ.

- **ໃນປີ 2019** ມີງານວາງສະແດງທັງພາຍໃນແລະຕ່າງປະເທດລວມທັງໝົດ 72 ງານ, ພາຍໃນ 9 ງານ ແລະ ຕ່າງປະເທດ 63 ງານ ໃນນັ້ນງານຕ່າງປະເທດ ສາມາດລະດົມທະລະກິດເຂົ້າຮ່ວມ 22 ງານ ໂດຍມີລາຍລະອຽດດັ່ງນີ້: ປະເທດໄທ 6 ງານ, ປະເທດຈີນ 26 ງານ, ປະເທດຫວຽດນາມ 7 ງານ, ປະເທດອິນເດຍ 10 ງານ, ປະເທດມຽນມ້າ3 ງານ, ປະເທດກຳປູເຈ້ຍ 1 ງານ, ປະເທດອິນໂດເນເຊຍ 1 ງານ, ປະເທດເກົາຫຼີ 3 ງານ, ປະເທດຟິລິປິນ 2 ງານ, ປະເທດມາເລເຊຍ 1 ງານ, ປະເທດມົງໂກເລຍ 2 ງານ, ປະເທດກາຕ້າ 1 ງານ.

- **ປີ 2020 ແຕ່ ເດືອນ 01-08/ 2020** ມີງານວາງສະແດງທັງພາຍໃນ ແລະ ຕ່າງປະເທດທັງ ໝົດ 30 ງານ, ພາຍໃນ 3 ງານ ແລະ ຕ່າງປະເທດ 27 ງານ. ງານຕ່າງປະເທດ ( ໄທ 4 ງານ , ຈີນ 8 ງານ, ຫວຽດນາມ 5 ງານ, ຟີລິປິນ 1 ງານ, ເຄນຍາ 1 ງານ, ຍີປຸ່ນ 1 ງານ, ມາເລເຊຍ 1 ງານ, ສິງກະໂປ 1 ງານ ມ້ຽນມ້າ 1 ງານ, ອິນເດຍ 2 ງານ ແລະ ເກົາຫຼີໃຕ້ 2 ງານ, ງານວາງສະແດງ ຢູ່ຕ່າງ ປະເທດ ບໍ່ມີນັກທຸລະກິດ ເຂົ້າຮ່ວມ) ສຳຫັບງານ ພາຍໃນ ມີ 3 ງານ ແລະ ມີ 1 ງານທີ່ລະດົມບໍລິສັດເຂົ້າຮ່ວມ

2.5.2 **ວຽກງານ** CO **ແລະ ມາດຕະຖານ**

ໃຫ້ການບໍລິການແກ່ສະມາຊິກ, ການຢັ້ງຢືນມາດຕະຖານ ແລະ ແຫຼ່ງກຳເນີດສິນຄ້າ ແລະ ການສະໜອງຂໍ້ມູນຂ່າວສານດ້ານເສດຖະກິດ ໃຫ້ແກ່ສະມາຊິກ. ການສົ່ງອອກປີ 2017: ລວມຍອດການສົ່ງອອກຂອງປີ 2017 ມູນຄ່າສົ່ງອອກທັງໝົດ: 1,443,078,473.62 ໂດລາສະຫະລັດ. ປະເພດສິນຄ້າທີ່ສົ່ງອອກແມ່ນ ຕັດຫຍິບເຄື່ອງນຸ່ງຫົ່ມ, ເຄື່ອງຫັດຖະກຳ, ບໍ່ແຮ່,ເຄື່ອງປ່າຂອງດົງ(ຖ່ານຂາວ, ຂີ້ຄັ່ງ,ຍານ), ຜະລິດຕະພັນເຟີນີເຈີຕ່າງໆ. ປະເທດທີ່ສົ່ງສິນຄ້າອອກໄປແມ່ນ: ປະເທດໃນກຸ່ມຢູໂຣບ, ອາເມລິກາ ແລະ ອາຊີ. ການສົ່ງອອກປີ 2018: ລວມຍອດການສົ່ງອອກຂອງປີ2018 ມູນຄ່າສົ່ງອອກທັງໝົດ: 63,009,092.69 ໂດລາສະຫະລັດ. ປະເພດສິນຄ້າທີ່ສົ່ງອອກແມ່ນ:ຕັດຫຍິບເຄື່ອງນຸ່ງຫົ່ມ, ເຄື່ອງຫັດຖະກຳ, ບໍ່ແຮ່, ເຄື່ອງປ່າຂອງດົງ(ຖ່ານຂາວ, ຂີ້ຄັ່ງ,ຍານ), ຜະລິດຕະພັນເຟີນີເຈີຕ່າງໆ. ປະເທດທີ່ສົ່ງສິນຄ້າອອກໄປ ແມ່ນ:ປະເທດໃນກຸ່ມຢູໂຣບ, ອາເມລິກາ ແລະ ອາຊີ. ເຫັນວ່າການສົ່ງອອກໃນປີ 2018 ມີການຫຼຸດລົງ.

**ມູນຄ່າການສົ່ງອອກ ປີ 2019** : 97,273,376.31 ໂດລາ ປະເພດສິນຄ້າທີ່ສົ່ງອອກມີ: ເຄື່ອງຕັບຫິຍບ, ຖ່ານຂາວ, ໄມ້ຕັບ, ຜົງສັງກະສີອັອກຊາຍ, ເມັດຢາງ, ກົ່ວ, ຊື່ນ, ສະບູ່ໝາກຍໍ, ຈີວເວີລີ, ໝາກກ້ວຍ, ເກີບໜັງ, ຜັກບົ່ວແຫ້ງ, ໜໍ່ໄມ້ຝັຣງ ແລະ ເບຍລາວ, ຢາສູບ.

**ການອອກຟອມໃຫ້ແກ່ນັກທຸລະກິດ ໃນປີ 2019:**

- ຟອມ **AJ** : ສົ່ງໄປ ປະເທດ ຍີປຸ່ນ 143 ຟອມ ແລະ ສົ່ງໄປປະເທດໄທ 11 ຟອມ ລວມທັງໝົດ 154 ຟອມ
- ຟອມ **AANZ :** ສົ່ງໄປປະເທດ ອົດສະຕາເຣຍ 55 ຟອມ

- ຟອມ **E :** ຈຳນວນ 610 ຟອມ.
- ຟອມ **SPT :** ຈຳນວນ 01 ຟອມ.
- ຟອມ **AK :** ຈຳນວນ 64 ຟອມ,
- ຟອມ **CO KOREA :** ຈຳນວນ 130 ຟອມ

**ລວມທັງໝົດ 2019: 1,014 ຟອມ**

**ການອອກຟອມໃຫ້ພາກທຸລະກິດໃນ ເດືອນ 1-8 ປີ 2020**

**ລວມມູນຄ່າທີ່ສົ່ງອອກທັ້ງໝົດປີ 2020: 82,030,702.67 USD.**

- **ຟອມ AJ ( ສົ່ງໄປ ອາຊຽນ-ຍີປຸ່ນ)**

- ສົ່ງໄປ ປະເທດ ໄທ 5 ຟອມ. ມູນຄ່າການສົ່ງອອກ : 184,523.66 USD ( ສິນຄ້າທີ່ສົ່ງອອກມີ : ເບຍລາວ )
- ສົ່ງໄປ ປະເທດ ຍີປຸ່ນ 61 ຟອມ . ມູນຄ່າການສົ່ງອອກ: 3,544,420.30 USD ( ສິນຄ້າທີ່ສົ່ງອອກມີ: ຖ່ານຂາວ, ເຄື່ອງຕັດຫຍິບ, ໝາກເດືອຍ.

- **ຟອມ E ສົ່ງໄປຈີນ** 170 ຟອມ. ມູນຄ່າການສົ່ງອອກ: 20,138,887.52USD ( ສິນຄ້າທີ່ສົ່ງອອກມີ : ເມັດຢາງ, ກົ່ວ, ເກີບ) **AANZ ສົ່ງໄປ ປະເທດ ອັອດສະເຕເລຍ** 32 ຟອມ. ມູນຄ່າການສົ່ງອອກ 5,285,544,67 USD ( ສິນຄ້າທີ່ສົ່ງອອກ, ສິນຄ້າຕັດຫິບຍ, ເກີບ ແລະ ຈິວເວີລີ )
- **AK ສົ່ງໄປະເທດ ເກົາຫຼີໃຕ້** 21 ຟອມ. ມູນຄ່າການສົ່ງອອກ 158,185,24 USD ( ສິນຄ້າທີ່ສົ່ງອອກ : ໜໍ່ໄມ້ຝັຣງ, ເຫັດແຫ້ງ, ຖ່ານຂ່າວ, ເກີບໜັງ, ເຄື່ອງຕັດຫິຍບ, ໄມ້ຕັບ)
- **Co-Korea ສົ່ງໄປປະເທດ ເກົາຫຼີໃຕ້** 89 ຟອມ. ມູນຄ່າການສົ່ງອອກ 334,299.41 USD ( ສິນຄ້າທີ່ສົ່ງອອກ: ຖ່ານຂາວ)
- **SPT ສົ່ງໄປ ສປ ຈີນ**: 0 ຟອມ
- **CO**.W ສົ່ງໄປ ປະເທດ ສະຫະລັດອາເມລິການ, ຝັຣງ, ແຄນນາດາ, ຮົງກົງ, ເຢຍລະມັນນີ, ອາເຈັນຕິນາ, ປານາມາ **113 ຟອມ** ມູນຄ່າສົ່ງອອກ 49,669,881.74( ສົ່ງຄ້າທີ່ສົ່ງອອກ : ເບຍລາວດ ເຄື່ອງຕັດຫິຍບ, ເກີບ, ແຮ່ທາດ, ຫັດຖະກຳໄມ້, ຫັດຖະກຳຜ້າຝ້າ-ໃໝ່, ຫັດຖະກຳເຄື່ອງເງິນ)
- **CO**.Y ສົ່ງໄປປະເທດ ອັອດສະເຕເລຍ, ສະຫະລັດອາເມລິການ, ແຄນນາດາ, ຮົງກົງ, ຝຣັ່ງ, ເນີເທີແລນ, ແມັກຊີໂກ, ອິນເດຍ, ບາຊິວ, ເຊີເບຍ, ມົງໂກເລຍ **89 ຟອມ** . ມູນຄ່າສົ່ງອອກ 2,899,483.79 ( ສິນຄ້າສົ່ງອອກ : ເບຍລາວ, ເຄື່ອງຕັບຫິຍບ, ເກີບ 86 ຟອມ

ລວມ**ລວມທັງໝົດຕົ້ນປີ 2020: 666 ຟອມ**

## 2.6 ວຽກງານຖານຂໍ້ມູນວິສາຫະກິດ ແລະ ສະມາຊິກ

ສຄອຊ ໄດ້ມີການຈັດສັນລະດັບຂອງສາມະຊິກ ສຄອ ແຫ່ງຊາດລາວ ໂດຍຈະສັງລວມເອົາ ຫົວໜ່ວຍທຸລະກິດທີ່ມີການລົງທະ ບຽນ ຫຼາຍກວ່າ 400 ລ້ານຂຶ້ນໄປ ໃຫ້ເຂົ້າມາເປັນສະມາຊິກ ສຄອ ແຫ່ງຊາດລາວ ແລະ ໄດ້ລະດົມໃຫ້ບໍລິສັດ ທີມີທ່າແຮງເຂົ້າມາເປັນສະມາຊິກ ສະໜັບສະໜູນ VVIP (80,000 000 ກີບ) ຈຳນວນ 18 ບໍລິສັດ ແລະ ສະມາຊິກ VIP (24,000,000,000 ກີບ) ໄດ້ຈຳນວນ 16 ບໍລິສັດເຂົ້າມາເປັນສະມາຊິກ ແລະ ສະມາຊິກທົ່ວໄປຫຼາຍກວ່າ **500** ບໍລິສັດ. ໄດ້ຕິດຕັ້ງ - ປັບປຸງລະບົບເຄື່ອຂ່າຍ Internet ໃນຫ້ອງການ ສຄອ ແຫ່ງຊາດລາວ ແລະ ເຊື່ອມຕໍ່ກັບສຄອແຂວງ, ຈັດ ຕັ້ງການເຝິກອົບຮົມໃຫ້ພະນັກງານປະຈຳນຳໃຊ້ ລະບົບ ເວບໄຊ ເຂົ້າໃນການສື່ສານ, ການປະສານງານ, ລະບົບການລາຍງານຂໍ້ມູນຕ່າງໆກັບມະຫາພາກ, ສາກົນ ແລະ ທຸລະກິດ ແລະ ກະຈາຍຂໍ້ມູນທີ່ມີໃຫ້ແກ່ ສະມາຊິກ ໂດຍຜ່ານ ລະບົບ Web site, Facebook, mailing list, ຖານຂໍ້ມູນວິສາຫະກິດ, profile ຂອງບໍລິສັດ, profile ຂອງຄະນະບໍລິຫານງານ, ທີ່ປຶກສາ ແລະ ສະມາຊິກ VIP, VVIP ແລະ ປື້ມສະຖິຕິ ຕ່າງໆ. ໄດ້ສຳເລັດການສ້າງ ລະບົບຖານຂໍ້ມູນຂອງ ວິສາຫະກິດ ຂອງ ສຄອຊ ທີ່ປະກອບດ້ວຍຖານຂໍ້ມູນຂອງສະມາຊິກ, ເປົ້າໝາຍສະມາຊິກໃໝ່, ແຫຼ່ງການຮຽນຮູ້ຂອງທຸລະກິດ, ຫຼັກສູດການຝຶກອົບຮົມ, ການສຳຫຼວດ, ການຄົ້ນຄວ້າ, ນິຕິກຳ ແລະ ອື່ນໆ ທີ່ກ່ຽວຂ້ອງ ເພື່ອໃຫ້ສະາຊິກ ສາມາດເຂົ້າໄປນຳໃຊ້. ພ້ອມດຽວກັນນີ້ກໍ່ໄດ້ສຳເລັດ ການສ້າງ **Application** ຂອງ ສຄອຊ ເພື່ອສະດວກໃຫ້ແກ່ການນຳສົ່ງຂໍ້ມູນຂ່າວສານໄປຍັງ ສະມາຊິກ, ການເຂົ້າເປັນສະມາຊິກໃໝ່, ການຈ່າຍເງິນຄ່າສະມາຊິກ ແລະ ການຮັບເອົາຂໍ້ມູນຈາກສະມາຊິກ ເພື່ອມາປັບປຸງວຽກງານຂອງ ສຄອຊ ໃຫ້ດີຂຶ້ນ. ເຊິ່ງທ່ານ ສາມາດ ດາວໂລດ **LNCCI Application** ໄດ້ທີ **Play Store** ແລະ **App Store.**

## 2.7 ວຽກງານການເຊື່ອມໂຍງເສດຖະກິດອາຊຽນ ແລະ ພາກພື້ນ

### 2.7.1 ການພົວພັນຮ່ວມມືສາກົນ

ການຈັດຕັ້ງປະຕິບັດວຽກງານການພົວພັນຮ່ວມມືສາກົນແມ່ນລວມມີວຽກງານໃນກອບການຮ່ວມມືຕ່າງໆເປັນຕົ້ນແມ່ນວຽກງານ ASEAN, AEBC, ACMECS, GMS, WTO, ASEAN-Korea, ASEAN-China ນອກນັ້ນກໍ່ໄດ້ມີການຮ່ວມມືສອງຝ່າຍກັບປະເທດບັນດາປະເທດຕ່າງໆເພື່ອເສີມຂະຫຍາຍການຮ່ວມມືທາງດ້ານການຄ້າການລົງທຶນເຊັ່ນ ອິນເດຍ, ສປຈີນ, ໄທ, ສິງກະໂປ, ໃຕ້ຫວັນ, ມາເລເຊຍ, ອິນໂດເນເຊຍ ແລະປະເທດອື່ນໆ. ວຽກງານທີ່ມີການເຄື່ອນໄຫວ ແລະ ປະສານງານຢ່າງເປັນປົກກະຕິມີຄື:

**1) ວຽກງານອາຊຽນ ແລະ AEBC**: ໃນນາມທີ່ ສປປລາວ ເປັນປະເທດສະມາຊິກອາຊຽນ ແລະ ສຄອ ແຫ່ງຊາດລາວທີ່ເປັນຕົວແທນໃຫ້ພາກທຸລະກິດ ແລະເປັນສະມາຊິກ ASEAN BAC ແມ່ນໄດ້ມີການເຄື່ອນ ໄຫວຢ່າງເປັນປົກກະຕິໃນການເຂົ້າຮ່ວມກອງປະຊຸມຕາມແຜນການເຄື່ອນໄຫວທີ່ວາງໄວ້, ຈັດຕັ້ງກອງປະຊຸມ GMS-BF ທີ ສປປ ລາວ ເປັນປະທານ ມາຕັ້ງແຕ່ປີ 2018.

**2) ກອງປະຊຸມແລກປ່ຽນທຸລະກິດຢູ່ຕ່າງປະເທດ**

(1) ນຳພາທຸລະກິດ ເຂົ້າຮ່ວມເດີນທາງຢ້ຽມຢາມພົບປະ ແລະ ເຮັດວຽກຢູ່ ຮົງກົງ, (2) ນຳພາທຸລະກິດລົງຢ້ຽມຢາມພົບປະທຸລະກິດ ຂອງ ຮົງກາລີ ໃນການແລກປ່ຽນຂໍ້ມູນດ້ານການຄ້າ ແລະ ຊອກາຫາກາລະໂອກາດດ້ານການຄ້າ-ການລົງທຶນຮ່ວມກັນ, (3) ນຳພາຄະນະບໍລິຫານງານ ສຄອຊ ແລະ ນັກທຸລະກິດລາວ ເພື່ອເດີນທາງຕິດຕາມ ພະນະທ່ານນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ຢ້ຽມຢາມຢ່າງເປັນທາງການ ພ້ອມກັນນັ້ນຍັງໄດ້ມີການຈັດກອງປະຊຸມພົບ ແລະ ວາງສະແດງຕົວຢ່າງຜະລິດຕະພັນຂອງ ສອງປະເທດລາວ-ບູໄນ ທີ່ປະເທດບຣູໄນ, (4)ນຳພາທຸລະກິດ ເຂົ້າຮ່ວມກອງປະຊຸມ ແລະ ງານວາງສະແດງ India Telecom 2019-An Excutive international Business Expo ທີ່ ນິວເດລີ, ອິນເດຍ, (5) ນຳພານັກທຸລະກິດເຂົ້າຮ່ວມງານ The Logix India 2019 and International Buyer ທີ່ ນິວເດລີ, ອິນເດຍ, (6) ນຳພາ ນັກທຸລະກິດເຂົ້າຮ່ວມກອງປະຊຸມ ແລະ ງານວາງສະແດງ ໃນຫົວຂໍ້ The 4th India - ASEAN Expo and Summit - "Co-Creating the Future", ທີ່ Jawaharlal Nehru Stadium complex, New Delhi ປະເທດ ອິນເດຍ (7) ນຳພາຄະນະບໍລິຫານງານ ສຄອຊ ແລະ ຄະນະທຸລະກິດ The ASEAN Chamber of commerce and Industry Business Meeting ທີ່ ປະເທດອິນເດຍ , (8) ນຳພາທຸລະກິດເດີນທາງໄປຢ້ຽມຢາມ ສຄອ ເມືອງຄາວາຊາກິ, ປະເທດຍີ່ປຸ່ນ ເພື່ອເປັນການສົ່ງເສີມ ແລະ ຂະຫຍາຍການຮ່ວມມືທາງດ້ານການສຶກສາ, ການເງິນ, ການບັນຊີລາຍຮັບ-ລາຍຈ່າຍໃນອົງກອນ ແລະ ວິສາຫະກິດ ຕ່າງໆ, ການຄ້າ-ການລົງທຶນ, ແລກປ່ຽນດ້ານການຮ່ວມມືໃນຂະແໜງການທຸລະກິດຕ່າງໆ ລະຫວ່າງ ລາວ-ຍີ່ປຸ່ນ, (9) ເຂົ້າຮ່ວມກອງປະຊຸມເວທີປຶກສາຫາລື ໂປອາວເພື່ອອາຊີ ປະຈຳປີ 2019 (Boao Forum for Asia Annual Conference 2019) ໃນຫົວຂໍ້ "China-ASEAN Governors/Majors' Dialogue" ແລະ ໃນຫົວຂໍ້ "Emerging Economies: Resolving the Dilemma with New Wisdom" ແລະ ກອງປະຊຸມທີ່ກ່ຽວຂ້ອງຫລາຍຂະແໜງການເຊັ່ນ: WTO reform, Emerging Economic, Belt & Road Building, Women Roundtable, Asean China Mayors Dialogue ແລະ ກອງປະຊຸມອື່ນໆ ເຊິ່ງເຂົ້າຮ່ວມກອງປະຊຸມດັ່ງກ່າວມີນັກທຸລະກິດ, ນັກລົງທຶນ ຈາກພາກພື້ນອາຊີ, ເອີລົບ, ນັກຄົ້ນຄວ້າຄັງປັນຍາທີ່ມີຊື່ສຽງ ແລະ ອື່ນໆ ທີ່ ສປປຈີນ, (10) ນຳພາສະມາຊິກເພື່ອສະໝັກຝຶກອົບຮົມໃນຫົວຂໍ້ Young Entrepreneur Network Development Program at the Frontier (Yen-D Frontier) ທີ່ປະເທດ ໄທ, (11) ເຂົ້າຮ່ວມງານພົບປະແລກປ່ຽນນັກທຸລະກິດລາວ-ໄທ ທີ່ ແຂວງສິງຂາ ປະເທດໄທ, (12) ສົ່ງສະມາຊິກເຂົ້າຝຶກອົບຮົມໃນຫົວຂໍ້"International Certificate in Property Valuation (Real-Estate) ທີ່ ປະເທດ ມາເລເຊຍ, (13) ຮ່ວມກອງປະຊຸມສຸດ

ຍອດ ການຮ່ວມມືສາກົນ ໜຶ່ງແລວທາງ ໜຶ່ງເສັ້ນທາງ (One Belt One Road) ຄັ້ງທີ 2 ທີ່ ປັກກິ່ງ, ສ ປປຈີ , (14) ພາຄະນະທຸລະກິດລາວເຂົ້າຮ່ວມກອງປະຊຸມຮັບຕ້ອນຄະນະຜູ້ແທນ ແລະ ພົບປະທຸລະກິດ ຈາກ ສະຫະພັນອຸດສາຫະກຳ ແລະ ການຄ້າ ທົ່ວປະເທດຈີນ (All-China Federation of Industry and Commerce) ທີ່ ສຄອຊ, (15) ເຊີນເອົາສະມາຊິກເພື່ອສະໝັກງານຊີງລາງວັນ ASEAN PRIZE 2019 ທີ່ ປະເທດໄທ, (16) ໄດ້ລະດົມເອົາບໍລິສັດລາວເພື່ອສະໜັກເຂົ້າຮ່ວມຊີງລາງວັນທຸລະກິດ ອາຊຽນດີເດັ່ນປະຈຳປີ 2019 ທີ່ ປະເທດໄທ ເຊິ່ງມີບໍລິສັດຈາກລາວສະໝັກເຂົ້າຮ່ວມທັງຫມົດ 8 ບໍລິສັດ ໄດ້ຮັບລາງວັນຈຳນວນ 9 ລາງວັນ, (17) ນຳພາທຸລະກິດ ເດີນທາງຢ້ຽມຢາມພົບປະ ແລະ ເຮັດວຽກຢູ່ ຢ້ຽມຢາມ ປະເທດ ຮົງກາລີ ແລະ ທີ່ ບູດາເປສ , ຮົງກາລີ ເຊິ່ງໃນລະຫວ່າງການຢ້ຽມຢາມສອງ ສະພາການຄ້າ ລາວ ແລະ ຮົງກາລີ ໄດ້ມີການລົງນາມເຊັນ (MOU) ຮ່ວມກັນ ແລະ ຈັດກອງປະຊຸມພົບປະທຸລະກິດເພື່ອປຶກສາຫາລື ແລະ ແລກປ່ຽນດ້ານຄ້າ-ການລົງທຶນ, (18) ນຳພາ ສຄອ ແຂວງ ເດີນທາງເຂົ້າຮ່ວມກອງປະຊຸມລະຫວ່າງສະພາຫໍການຄ້າແຫ່ງປະເທດໄທ ກັບ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ແລະ ສຄອ ແຂວງ ທີ່ ມີຊາຍແດນຕິດກັບ ທີ່ ແຂວງມຸກດາຫານ ປະເທດ ໄທ, (19) ນຳພານັກທຸລະກິດ ເຂົ້າຮ່ວມກອງປະຊຸມ the 8th Asian business Summit ທີ່ ເຊອຸນ, ປະເທດເກົາຫຼີ, (20) ເຂົ້າຮ່ວມກອງປະຊຸມ The 12th China (Jinan) International Solar Energy Utilization Conference and Exhibition ທີ່ ແຂວງກວາງຕົ່ງ, ສປ ຈີນ, (21) ເຂົ້າຮ່ວມກອງປະຊຸມ The China-ASEAN Daily Chemical Industry Cooperation Meeting ທີ່ ກວາງຊູ, ສປ ຈີນ, (22) ນຳພາທຸລະກິດ ເຂົ້າຮ່ວມ ໂຄງການ YED-D Program season III ທີ່ ບາງກອກ, ປະເທດໄທ, (23) ເຂົ້າຮ່ວມງານ The Global Exhibition on Services of the India Opportunity ເມືອງ ນິວເດລີ, ອິນເດຍ, (24) ນຳພາຄະນະນັກທຸລະກິດ ເດີນທາງຕິດຕາມຄະນະທາງການຂອງ ທ່ານ ຮອງນາຍົກ ລັດຖະມົນຕີ ແຫ່ງ ສປປລາວ ໄປຢ້ຽມຢາມ ອິດສະຕາລີ, (25) ນຳພາຄະນະນັກທຸລະກິດເດີນທາງຕິດຕາມ ພະນະທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ເດີນທາງຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດສິງກະໂປ ຢ່າງເປັນທາງການ ໃນເດືອນ 2 ປີ 2017, (26) ນຳພາຄະນະນັກທຸລະກິດເດີນທາງຕິດຕາມພະນະທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ເດີນທາງຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດມາເລເຊຍ ຢ່າງເປັນທາງການ ໃນເດືອນ 05/2017 ກົວລາລຳເປີ, ມາເລເຊຍ, (27) ນຳພາຄະນະນັກທຸລະກິດຕິດຕາມພະນະທ່ານນາຍົກ ລັດຖະມົນຕີແຫ່ງ ສປປ ລາວ ເດີນທາງຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດ ຣັດເຊຍ ຢ່າງເປັນທາງການ ໃນເດືອນ 09/2017 ມົດສະກູ, ປະເທດຣັດເຊຍ,(28) ນຳພາຄະນະນັກທຸລະກິດເດີນທາງຕິດຕາມ ພະນະທ່ານນາຍົກລັດຖະມົນຕີແຫ່ງ ສປປ ລາວ ເດີນທາງຢ້ຽມຢາມ ແລະ ເຮັດວຽກ ຢູ່ປະເທດອິນໂດເນເຊຍ ຢ່າງເປັນທາງການ ໃນເດືອນ 11/2017 ທີ່ຈາກາຕ້າ , ອິນໂດເນເຊຍ, (29) ນຳພາຄະນະນັກທຸລະກິດລາວເຂົ້າຮ່ວມຮັບລາງວັນທຸລະກິດອາຊຽນດີເດັ່ນປະຈຳປີ 2017 (ASEAN Business Awards 2017) ໃນເດືອ11/2017 ກຸງມານີລາ, ຟີລິບປິດ, (30) ນຳພາທຸລະກິດ

ເຂົ້າຮ່ວມສາມະນາ ແລະ ແລະ ພົບປະທຸລະກິດລາວ-ເກົາຫຼີ ໃນເດືອນ 3/ 2017ທີ່ກຸງໂຊ, ປະເທດເກົາຫຼີ, (31) ເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "Workshop for Greater Mekong Sub region (GMS) Cross-Border E-commerce ໃນເດືອນ ສິງຫາ 2017 ເຊອູນ, ສ. ເກົາຫລີ, (32) ເຂົ້າຮ່ວມກອງປະຊຸມ "Brainstorming Meeting to develop the ASEAN Competition Business Perception Index" 19-20 ກໍລະກົດ 2017 ບາລີ, ອິນໂດເນເຊຍ, (33) ເຂົ້າຮ່ວມກອງປະຊຸມ "Advantage Assam the Global Investor's Summit 2018", 3-4 ກຸມພາ 2017 ລັດອັດຊຳ, ອິນເດຍ, (34) ເຂົ້າຮ່ວມກອງປະຊຸມ ASEAN-India Connectivity Summit 11-12 ທັນວາ 2017 ທີ່ ນິວເດລີ, ປະເທດອິນເດຍ, (35) ເຂົ້າຮ່ວມງານເຈະລຈາທຸລະກິດ ແລະ ວາງສະແດງ ອາຊຽນ-ອິນເດຍ ໃນເດືອນ ສິງຫາ 2017 ສູນວາງສະແດງ ສິລິກິດ, ບາງກອກ, ປະເທດໄທ, (36) ເຂົ້າຮ່ວມເປັນ Buyer & Visitor ໃນງານວາງສະແດງ ແລະ ເຈລະຈາທຸລະກິດ India International Hand-Woven Fair (IIHF) 2017 ໃນເດືອນ ມີນາ 2017 ເມືອງ ເຊີນໄນ, ອິນເດຍ,(37) ນຳພານັກທຸລະກິດເຂົ້າຮ່ວມກອງປະຊຸມໃນຫົວຂໍ້ The 1st India-ASEAN Youth Summit ໃນເດືອນ ພຶດສະພາ 2017 ເມືອງ ນິວເດລີ, ອິນເດຍ, (38) ເຂົ້າຮ່ວມກອງປະຊຸມສຳມະນາ ໃນຫົວຂໍ້ "Workshop on Implementation of IAI Workplan III ໃນເດືອນ ສິງຫາ 2017ທີ່ ກຸງຈາກາຕ້າ ປະເທດ ອິນໂດເນເຊຍ, (39) ເຂົ້າຮ່ວມກອງປະຊຸມ "The BMAM EXPO Asia 2017 Green Building & Retrofits Expo Asia 2017 ໃນເດືອນ ກັນຍາ 2017, ທີ່ບາງກອກ, ປະເທດໄທ, (40) ເຂົ້າຮ່ວມກອງປະຊຸມ Lao Business joined the seminar on "Industrial Technical Tutor Training Program on Automation Intelligence and Solar Energy" ໃນເດືອນ ພະຈິກ 2017 ທີ່ໄທເປ, ໄຕ້ຫວັນ, (41) ເຂົ້າຮ່ວມກອງປະຊຸມ "The CLMVT Executive Program for New Economy" ໃນເດືອນ June 2017, ທີ່ບາງກອງ, ປະເທດໄທ, (42) ເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "Raising Public Awareness for Safe Food Consumption" ໃນເດືອນ ກໍລະກົດ 2017 ທີ່ຂອນແກ່ປະເທດໄທ, (43) ເຂົ້າຮ່ວມງານ The Thailand Energy Efficiency Week 2017 ທີ່ບາງກອກ, ປະເທດໄທ, (44) ເຂົ້າຮ່ວມກອງປະຊຸມ China-ASEAN Construction & Cold-Chain Energy Efficiency Technology Cooperation Conference and Second Meeting of China-ASEAN Logistics Industry Cooperation Committee ໃນເດືອເມສາ ປີ 2018, ທີ ປັກກິ່ງ ປະເທດຈີນ, (45) Intermat ASEAN and CONCRETE Asia 2018 Trade Fair ທີ ບາງກອກ, ປະເທດໄທ, ເຂົ້າຮ່ວມ ກອງປະຊຸມ Selangor International Business Summit 2018 ທີ່

ເຂດປົກຄອງພິເສດ ຊີລັງງໍ, ມາເລເຊຍ, (46) the 15th China-ASEAN Business and Investment Summit ໃນເດືອນ ມີນາ 2018 ທີ່ແຂວງກວາງຊີ, ປະເທດຈີນ, (47) ເຂົ້າຮ່ວມ the 2018 Lancang-Mekong Cooperation Expo 2018/11/22-27 ທີ່ ຄູນໝີງ, ປະເທດຈີນ,(48) ຈັດຕັ້ງກອງປະຊຸມພົບປະທຸລະກິດ ລາວ- ສິງກະໂປ 5. ໃນໂອກາດ ພະນະທ່ານ ບຸນຍັງ ວໍລະຈິດ, ປະທານ ປະເທດແຫ່ງ ສປປ ລາວ ໄປຢ້ຽມຢາມທາງລັດຖະກິດຢູ່ປະເທດສິງກະໂປຢ່າງເປັນທາງການ ໃນເດືອນ 05/2018 ທີ່ສະຫະພັນທຸລະກິດສິງກະໂປ, ປະເທດສິງກະໂປ, (49) ນໍາພາຄະນະນັກທຸລະກິດ ເຂົ້າຮ່ວມກອງປະຊຸມ ເວທີພົບປະນັກທຸລະກິດ ACMECS ແລະ ເວທີພົບປະລະຫວ່າງຜູ້ນໍາ ACMECS ແລະ CLMV ໃນເດືອນ 06/2018 ບາງກອກ, ປະເທດໄທ, (50) ນໍາພາທຸລະກິດເຂົ້າຮ່ວມປະຊຸມທຸລະກິດ India-CLMV the Partnership Summit 2018 ໃນເດືອນ 05/2018 ພະນົມເປັນ, ກໍາປູເຈຍ, (51) ເຂົ້າຮ່ວມກອງປະຊຸມ ABIS ແລະ ABA 2018 ທີ່ປະເທດສິງກະໂປ ຈັດໂດຍ ASEAN-BAC ສິງກະໂປ, (52) ນໍາພານັກທຸລະກິດລາວເຂົ້າຮ່ວມຊີລາງວັນ ASEAN-Prize ປະຈໍາປີ 2018 ທ້າຍປີ 2018 ທີ່ ສິງກະໂປ, (53) ນໍາພານັກທຸລະກິດລາວເຂົ້າຮ່ວມຊີງລາງວັນ ດີເດັ່ນສໍາລັບວິສາຫະກິດຂອງຈີນທີ່ລົງທຶນຢູ່ອາຊຽນຄັ້ງທີ 8 ແລະ ວິສາຫະກິດຂອງອາຊຽນທີ່ລົງທຶນຢູ່ລາວຄັ້ງທີ 7 “Awards for ASEAN Enterprises Entering China ໃນເດືອນ 12/2018 ທີ່ປັກກິ່ງ, ປະເທດຈີນ, (54) ນໍາພາທຸລະກິດເຂົ້າຮ່ວມ ກອງປະຊຸມ Lao-Czech Business Forum & Networking ໃນເດືອນ 10/2018 ທີ່ກຸງ ປຣາກມ ສ. ເຊັກ ຈັດໂດຍ ສຄອຊ ແລະ ສະພາການຄ້າ ສ. ເຊັກ,(55) ເຂົ້າຮ່ວມກອງປະຊຸມ The 8th Liaison Officials’ Meeting of China-ASEAN Mining Cooperation ໃນເດືອນ ກໍລະກົດ 2018 ບາງກອກ, ປະເທດໄທ , (56) ເຂົ້າຮ່ວມ Training Program for Chamber of Commerce of Lancang-Mekong Countries” ໃນເດືອນ ກໍລະກົດ 2018 ທີແຂວງກວາງຊີ, ສປຈີນ, (57) ເຂົ້າຮ່ວມ ກອງປະຊຸມ 1st International Conference on GMS Logistics Thailand 2018 ໃນເດືອນ ກັນຍາ 2018 ທີບາງກອກ, ປະເທດໄທ, (58) ເຂົ້າຮ່ວມ ງານ “ASEAN Enterprises Entering into China” ໃນເດືອນ ທັນວາ 2018, ທີ ປັກກິ່ງ, ສປຈີນ, (59) ເຂົ້າຮ່ວມ The 2nd Tsinghua Belt and Road Forum for International Cooperation & 10th Tus Innovation Forum ໃນເດືອນ ພະຈິກ 2018 ແຂວງກວາງຊີ, ສປ ຈີນ, (60) ເຂົ້າຮ່ວມກອງປະຊຸມ The 32nd CACCI Conference 23-24 ພະຈິກ 2018 ທີອິດສະຕັນບູ, ປະເທດຕຸລາກີ, (61) ນໍາພາທຸລະກິດ ເຂົ້າຮ່ວມກອງປະຊຸມ ພະລັງງານແສງອາທິດ ທີແຂວງ ຈຸງຈີໂອວັກ, ປະເທດເກົາຫຼີ, (62) ເຂົ້າຮ່ວມກອງປະຊຸມ the ASEAN Business Delegation ໃນເດືອນ ພະຈິກ 2018 ຊີອູນ, ສ. ເກົາຫລີ , (63) ເຂົ້າຮ່ວມກອງປະຊຸມ ASEAN-Korea Business Forum ໃນເດືອນ ສິງຫາ 2018 ທີ່ປະເທດສິງກະໂປ, (64) ເຂົ້າຮ່ວມກອງປະຊຸມ Korea

Mekong Forum ໃນເດືອນ ທັນວາ 2018 ຊີອູນ, ສ. ເກົາຫລີ, (65) ເຂົ້າຮ່ວມກອງປະຊຸມ (The 10th China International Marine Industry Expo ໃນເດືອນ ກັນຍາ 2018, ທີໄຮນານ, ສປ ຈີນ, (66) ຈັດສົ່ງທຸລະກິດສະມັກຄັດເລືອກທຶນຝຶກອົບຮົມ '' Smart machinery '' ໃນເດືອນ 11/2018 ທີໄທເປ, ໄຕ້ຫວັນ, (67) ເຂົ້າຮ່ວມເປັນ Visitor/Buyer ໃນງານວາງສະແດງ intermit ASEAN and Concrete Asia 2018 Trade fairs ໃນເດືອນ ສິງຫາ 2018 ບາງກອກ, ປະເທດໄທ, (68) ເຂົ້າຮ່ວມກອງປະຊຸມ ASEAN-India Business and Investment Meet & Expo ໃນເດືອນ January 2018 ທີ່ ນິວເດລີ, ປະເທດອິນເດຍ, (69) ເຂົ້າຮ່ວມຝຶກອົບຮົມໃນຫົວຂໍ້ "Quality Infrastructure Development in support of World Trade" ໃນເດືອນ ມັງກອນ ຫາ 16 ກຸມພາ 2018 ທີ່ ປະເທດ ສະວິເດັ່ນ, (70) ເຂົ້າຮ່ວມກອງປະຊຸມສຳມະນາ Webinar with APTA ໃນເດືອນ 7/2020 (for Bangkok/Lao), (71) ເຂົ້າຮ່ວມກອງປະຊຸມວີດີໂອທາງໄກ Video Conference Federation of chamber of commerce and industry pf Sri Lanka ກັບ ສະພາການຄ້າ ສີລັງກາ, (72) ເຂົ້າຮ່ວມກອງປະຊຸມທາງໄກສະໄໝພິເສເຂອງລັດຖະມົນຕີເສດຖະກິດເອຊຽນກ່ຽວກັບຮັບມືກັບ ໂຄວິດ-19 ແລະ ສະເໜີກະກຽມບົດປະກອບຄຳເຫັນໃນວາລະທີ່ຕິດພັນກັບສະພາທີ່ປຶກສາທຸລະກິດເອຊຽນ, (73)ເຂົ້າຮ່ວມກອງປະຊຸມທາງໄກ Notice on APTA CCI on line meeting wesinar (APTA CCI) 2020, (73) ເຂົ້າຮ່ວມກອງປະຊຸມທາງໄກ Mekong-ROIC Business Council member MKBC Working group meeting ໃສນເດືອນ 07/2020 ຮ່ວມກັບ ສະມາຄົມນຳເຂົ້າສິນຄ້າຂອງ ສ ເກົາຫຼີ (KITA), (74) ເຂົ້າຮ່ວມກອງປະຊຸມທາງໄກ 1st INDO ASEAN OCBANIC Business summit & EXPO: Collaborating for Regional Economic Development ໃນເດືອນ 08/2020 ຮ່ວມກັບ Confederation of Indian Industry, (75) ເຂົ້າຮ່ວມກອງປະຊຸມທາງໄກ Letter Jointly Proposing the Cooperation Initiative on Prevention and Control the Novel Coronavirus (COVID-19) for China-ASEAN Business Community ໃນເດືອນ ກຸມພາ 2020 ຮ່ວມກັບ CABC, (76) ເຊີນນັກທຸລະກິດ ເຂົ້າຮ່ວມກອງປະຊຸມທາງໄກ " Chian ( yantai ) - ASEAN Investment and Business Matching Conference" , ໃນວັນທີ່ 17 ກໍລະກົດ 2020 ໂດຍຜ່ານ ວີດີໂອກັບ ສະພາການຄ້າ ຈີນ-ອາຊຽນ, (77) ເຊີນນັກທຸລະກິດລາວ ເຂົ້າຮ່ວມກອງປະຊຸມທາງໄກ The 3th Mekong-japan industry and Government Dialogue and the 1st Meeting 2020 AMEICC working Group meeting on west-east corridor Development ( Video-Conference ), ໃນວັນທີ່ 17 ກໍລະກົດ 2020, ຢູ່ ທີ່ ສຄອຊ 17/7/2020 (Video-

Conference) ສຄອຊ AEM-AMTI , (78) ເຂົ້າຮ່ວມກອງປະຊຸມທາງໄກກ່ຽວກັບການຮ່ວມມືດ້ານການລົງທຶນ (ຊານຊີ ) ຈີນ-ອາຊຽນ " Invitation for attending video conference china ( Shanxi)-Asean investment cooperation " ໃນເດືອນ ສິງຫາ 2020, ທີ່ ສຄອຊ(Video-Conference) 2020/05/08 (Video-Conference) ສຄອຊ ຮ່ວມກັບ ສະພາການຄ້າ ຈີນ-ອາຊຽນ,

**3) ວຽກງານກອງປະຊຸມ ແລະ ແລກປ່ຽນທຸລະກິດ ພາຍໃນ**

ໄດ້ມີການເຄື່ອນໄຫວປົກກະຕິໃນການເຂົ້າຮ່ວມກອງປະຊຸມສຳມະນາຕາມການເຊື້ອເຊີນຈາກບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ໂດຍສະເພາະວຽກງານອຳນວຍຄວາມສະດວກທາງດ້ານການຄ້າ, ວຽກງານອາຊຽນ, WTO, GMS. ນອກນັ້ນກໍມີການພົບປະກັບແຂກພາຍໃນ ແລະ ຕ່າງປະເທດທີ່ໄດ້ມາຢ້ຽມຢາມສະພາການຄ້າ ເຊັ່ນ: ອົງຈັດຕັ້ງສາກົນ, ອົງການ NGO, ສະພາສົ່ງເສີມການຄ້າ ລວມເຖິງໜ່ວຍງານຈາກພາກລັດຖະບານ ຂອງບັນດາປະເທດຕ່າງໆ ເພື່ອມາເກັບກຳ , ແລກປ່ຽນຂໍ້ມູນ, ເສີມຂະຫຍາຍການຮ່ວມມື ແລະ ຊອກຫາຊ່ອງທາງດ້ານທຸລະກິດກັບ ສຄອຊ ເປັນຕົ້ນແມ່ນ: (1) ກອງປະຊຸມພົບປະ ລະຫວ່າງ ສຄອຊ ກັບ ມະຫາວິທຍາໄລເພື່ອການຄົ້ນຄ້ວາ ຂອງ ແຂວງ ຢຸນນານ ສປ ຈີນ, (2) ຈັດຕັ້ງງານ Wine tasting ຮ່ວມກັບ ຖະທູດອັບຟຣິກາໃຕ້ ປະຈຳໄທ ທີ່ ໂຮງແຮມລາວ ພຣາຊ່າ ວຽງຈັນ, (3) ຈັດກອງປະຊຸມ ໃນຫົວຂໍ້ “Top Executive Meeting 2019” ທີ່ ໂຮງແຮມ ຄາວພາຊາ, (4) ລະດົມເອົານັກທຸລະກິດເຂົ້າຮ່ວມງານການທູດເສດຖະກິດ ໃນວັນທີ 09 ທັນວາ 2019 ທີ່ ສູນ ICTC, (5) ຈັດຕັ້ງການສຳມະນາຫົວຂໍ້ The Seminar on Industry 4.0 Conference within DAAD Practice Partnership Programme "Teching and Research close to Practice" ທີ ສຄອຊ, ນະຄອນຫຼວງວຽງຈັນ, (6) ຈັດຕັ້ງກອງປະຊຸມ Transforming Trends in the ASEAN Economic Community (ACE) ທີ່ໂຮງແຮມແລນມາກ ຮ່ວມ ກັບ ສຄອ ອີຢູປະຈຳລາວ, (7) ຈັດຕັ້ງກອງປະຊຸມທຸລະກິດລາວ-ໄທ ທີ່ ໂຮງແຮມແລນມາກ ຮ່ວມກັບ ສະຖານເອກອັກຄະລັດຖະທູດໄທ ປະຈຳລາວ, (8) ຈັດກອງປະຊຸມພົບປະກັບຄະນະຜູ້ແທນຈາສະຫະພັນສົ່ງອອກຊີ້ນຈາກ ສະຫະລັດອາເມລິກາ ສາຂາປະເທດສິງກະໂປ ທີ ສຄອຊ, (9) ຈັດຕັ້ງ ກອງປະຊຸມສົ່ງເສີມການຮ່ວມມືເສດຖະກິດການຄ້າ ແລະ ການລົງທຶນລາວ-ຈີນ ທີ່ ສຄອຊ, (10) ຈັດກອງປະຊຸມພົບປະທຸລະກິດລາວ-ສິງກະໂປ ທີ່ ສຄອຊ ຮ່ວມກັບ ສະຫະພັນອຸດສາຫະກຳ ແລະ ການຄ້າ ສິງກະໂປ, (11) ຈັດກອງປະຊຸມ Lao-China Worldwide Business Culture Exchange Center Meeting ທີ່ ສຄອຊ ຮ່ວມກັບ Lao-China Worldwide Business Culture Exchange Center, (12) ຈັດຕັ້ງກອງປະຊຸມ ພົບປະທຸລະກິດລາວ-ໄທ ທີ່ ສຄອຊ ຮ່ວມກັບ ຫໍການຄ້າແຫ່ງປະເທດໄທ, (13) ເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືດ້ານວິສາຫະກິດ (SMEs) ລະຫວ່າງ ລາວ-ໄທ ໃນຊ່ວງການຈັດກອງປະຊຸມຄູ່ຮ່ວມຍຸດທະສາດການຮ່ວມມືລາວ-ໄທ ເພື່ອຕ້ອນຮັບການເດີນທາງມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ຂອງ ພະນະທ່ານ ສົມຄິດ ຈະຕຸສີພິທັກ ຮອງນາຍົກລັດຖະມົນຕີ ແຫ່ງຣາຊອານາຈັກໄທ ທີ່ ສຄອ ແຫ່ງຊາດລາວ ຈັດໂດຍ ສຄອ ແຫ່ງຊາດລາວ ແລະ

ສະຫະພັນອຸດສາຫະກຳ ແຫ່ງຣາຊອານາຈັກໄທ, (14) ຈັດກອງປະຊຸມໃນຫົວຂໍ້ "One Belt One Road International Cooperation to Laos" ທີ່ ຫໍປະຊຸມແຫ່ງຊາດ ຫລັກ 6 ຈັດໂດຍ ສຄອ ແຫ່ງຊາດລາວ ແລະ CCPIT ສປ ຈີນ, (15) ຈັດງານລ້ຽງສ້າງສັນສ້າງເຄືອຄ່າຍທຸລະກິດ ກັບ ສະພາພັດທະນາທຸລະກິດຮອງກົງ ໃນຫົວຂໍ້ "Hong Kong: Your Partner in International Trade" ທີ່ ໂຮງແຮມລາວພຣາຊາ ຮ່ວມກັບ Hong Kong Trade Development Council, (16) ຈັດກອງປະຊຸມພົບປະທຸລະກິດ ລາວ-ຫວຽດ ທີ່ ໂຮງແຮມ ເມືອງແທັງ, ນະຄອນຫຼວງວຽງຈັນ ຮ່ວມກັບ ກົມແຜນການ ແລະ ການຮ່ວມມື, ກະຊວງ ອຄ, (17) ຈັດຕັ້ງ ກອງປະຊຸມທຸລະກິດ ລາວ-ສະໂລວາກີ ທີ່ ສຄອຊ ຈັດໂດຍ ສຄອຊ Slovak Investment and Trade Development agency ທີ່ ຮັດເຊຍ, (18) ຈັດຕັ້ງກອງປະຊຸມ "Boao Forum for Asia Vientiane Conference" ພາຍໃຕ້ຫົວຂໍ້ Seeking Common Development and Win-Win: A joint Endeavor to Bring the China-Laos Economic Cooperation and Trade in to An New Era ທີ່ ໂຮງແຮມແລນມາກ ຮ່ວມກັບ ກອງເລຂາ Boao Forum for Asia, (19) ຈັດງານລ້ຽງມອບລາງວັນ ASEAN business Award Lao 2018 ທີໂຮງແຮມຄາວພາຊາ ຮ່ວມກັບ ໂຄງການ RELATED, GIZ, (20) ຈັດກອງປະຊຸມພົບປະການຄ້າ-ການລົງທຶນ ລາວ-ສະໂລວັກ ທີ່ສຄອຊ ຮ່ວມກັບ ຫ້ອງການຜູ້ຕາງໜ້າການຄ້າ-ການລົງທຶນ (Slovak Investment and Trade Development agency), (21) ຈັດກອງປະຊຸມພົບປະທຸລະກິດ ລາວ-ຈີນ ທີ່ ສຄອຊ ຮ່ວມກັບ ຫ້ອງການຕາງຫນ້າການລົງທຶນ ແຂວງຊື, (22) ຈັດພົບປະທຸລະກິດລາວ-ຈີນ ໃນຂະແໜງອາຫານ ແລະອຸດສາຫະກຳ ທີ່ ສຄອຊ ຮ່ວມກັບ ຫ້ອງການຕາງຫນ້າການລົງທຶນ ແຂວຢຸນໜານ, (23) ຈັດກອງປະຊຸມ Lao-Korea Workshop on Power Development ທີ່ ສຄອຊ ຮ່ວມກັບ EDL, (24) ຈັດກອງປະຊຸມພົບປະທຸລະກິດ ລາວ-ຈີນ ເຈົ້ຈ່ຽງ ຮ່ວມກັບ ສະພາສົ່ງເສີມການຄ້າ ແຂວງ ເຈົ້ຈ່ຽງ, (25) ກອງປະຊຸມສ້າງເຄືອຄ່າຍທຸລະກິດ ແລະ ເຈລະຈາທຸລະກິດ ລາວ-ສິງກະໂປ ທີ່ ສຄອຊ ຮ່ວມກັບ ສະຫະພັນອຸດສາຫະກຳ ແລະ ການຄ້າ ສິງກະໂປ, (26) ຈັດກອງປະຊຸມພົບປະກັບຄະນະຜູ້ແທນ ແລະ ນັກທຸລະກິດ ຈາກກອງເລຂາການຮ່ວມມືທຸລະກິດຂະແໜງບໍ່ແຮ່ ຈີນ ແລະ ອາຊຽນ (China-ASEAN Mining Cooperation Forum Secretariat) ທີ່ ສຄອຊ ຮ່ວມກັບ China-ASEAN Mining Cooperation Forum Secretariat, (27) ຈັດງານສຳມະນາກ່ຽວກັບໂອກາດທາງທຸລະກິດດ້ານອາຫານ, ເຄື່ອງດື່ມ ແລະ ກະສິກຳໃນລາວ ທີ່ ໂຮງແຮມຄຣາພາຊາ ຈັດໂດຍ ສຄອຊ + ທະນາຄານ ເອເອັນແຊັດລາວ, (28) ຈັດຕັ້ງກອງປະຊຸມ The Confederation of Asia-Pasific Chamber of Commerce and Industry (CACCI) ທີ່ ສຄອຊ ຮ່ວມກັບ CACCI, (29) ຈັດກອງປະຊຸມພົບປະ ລະຫວ່າງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ກັບ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງ ຣາຊອານາຈັກ ກຳປູເຈຍ ທີ່ ໂຮງແຮມ ເມີກຽວ, (30) ຈັດຕັ້ງກອງປະຊຸມ ພົບປະ ທ່ານ Mark McKay

ອະທິການບໍດີ, ສະມາຄົມໂຮງຮຽນບໍລິຫານທຸລະກິດມະຫາວິທະຍາໄລຫິນນິຕີ້ ປະເທດການາດາ ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປ ລາວ ທີ່ ສຄອຊ,ຮ່ວມກັລ Saysetha SEZ ແລະ ມະຫາວິທະຍາໄລຫິນນິຕີ້ ປະເທດການາດາ, (31) ຈັດກອງປະຊຸມແລກປ່ຽນບົດຮຽນກ່ຽວກັບການດໍາເນີນທຸລະກິດລະຫວ່າງນັກທຸລະກິດສະພາການຄ້າລາວ ແລະ ສ.ເຊັກ ທີ່ ສຄອຊ, (32) ຂັດຕັ້ງກອງປະຊຸມພົບປະທຸລະກິດ ລາວ-ຍີປຸ່ນ ທີໂຮງແຮມຄຫຼາວພຣາຊາ ຮ່ວມກັບອົງການໄຈກາປະຈໍາລາວ, (33) ຈັດກອງປະຊຸມພົບປະງານລ້ຽງອາຫານຄໍ່າ ຮ່ວມກັບຄະນະຈາກ ສະຖານ ທູດ ອາຟຣິກາໃຕ້ '' Meeting Dinner buffet '',ໃນວັນທີ 26 ກຸມພາ 2020, ທີ່ ໂຮງແຮມລາວພາຊ່າ ໃສນເດືອນ 2/2020ໂຮງແຮມ ລາວພາຊ່າ ຮ່ວມກັບ ສະຖານທູດ ອາຟຼິກາໃຕ້ປະຈໍາບາງກອກ, ປະເທດໄທ,

**4) ວຽກງານໃນກອບການຮ່ວມມືທີ່ໄດ້ມີການເຊັນບົດບັນທຶກຄວາມເຂົ້າໃຈ**: ແມ່ນໄດ້ມີການສືບຕໍ່ການຮ່ວມມືຊຶ່ງກັນ ແລະ ກັນໃນການແລກປ່ຽນຂໍ້ມູນ ແລະ ສົ່ງເສີມການຮ່ວມມືທາງດ້ານການຄ້າ-ການລົງທຶນ ໄດ້ມີການຈັດພົບປະທຸລະກິດ, ການໃຫ້ທຶນການສຶກສາ ແລະ ການເຂົ້າຮ່ວມປະຊຸມສໍາມະນາຕ່າງໆ ຊຶ່ງປະຈຸບັນແມ່ນກໍາລັງຈັດຕັ້ງປະຕິບັດການຮ່ວມມືກັບ ສປ ຈີນ, ສຄອ ຄາວາຊາກີ, ບຣູໄນ, ໄທ ໃນການນໍາພາທຸລະກິດ ໄປຮ່ວມສໍາມະນາພົບປະທຸລະກິດ ແລະ ກິດຈໍາກໍາດ້ານອື່ນໆ. ພ້ອມດຽວກັນນີ້ກໍ່ໄດ້ມີການເຊັນ MOU ກັບພາກສ່ວນຕ່າງເຊັ່ນ: (1) ຄະນະກໍາມະການຕະຫຼາດຫຼັກຊັບລາວ, (2) ທະນາຄານພັດທະນາລາວ, (3) ທະນາຄານ ເອັກຊິມແບ້ງປະເທດໄທ, (4) CCPIT ສປ ຈີນ, KOTRA , ສປ ເກົາຫຼີ, G TecF ປະທດໄທ, ບັນດາທະນາຄານທຸລະກິດຢູ່ ສປປ ລາວ ຫຼາຍກວ່າ 10 ແຫ່ງ ແລະ ອື່ນໆ. ພ້ອມດຽວກັນນີ້ກໍ່ໄດ້ເຊັນ MOU ກັບ ບັນດາ ສຄອ ຕ່າງປະເທດ, ອົງການຈັດຕັ້ງສາກົນ, ພ້ອມທັງນໍາພານັກທຸລະກິດ ເຂົ້າຮ່ວມເຈລະຈາການຄ້າ, ການລົງທຶນ, ພົບປະທຸລະກິດ, ເຂົ້າຮ່ວມງານວາງສະແດງ, ງານຕະຫຼາດນັດ, ໂຊສິນຄ້າ ເພື່ອສ້າງໂອກາດທາງການຕະຫຼາດໃຫ້ແກ່ ສະມາຊິກ.

**5) ວຽກຮ່ວມມືກັບອົງການຈັດຕັ້ງສາກົນ**

ສຄອຊ ໄດ້ຮ່ວມກັບບັນດາໂຄງການຕ່າງໆເພື່ອພັດທະນາພາກທຸລະກິດລາວ ເປັນຕົ້ນແມ່ນຮ່ວມມືກັບ ໂຄງພັດທະນາການຄ້າໄລຍະ 2 (TDF II), ໂຄງການສົ່ງເສີມຄວາມສາມາດໃນການແຂ່ງຂັນ ແລະ ການຄ້າ (LCT)ໃນການສ້າງຄສາມເຂັ້ມແຂງໃຫ້ແກ່ກອງປະຊຸມປຶກສາຫາລື ພາກລັດ ແລະ ພາກທຸລະກິດລາວ ໂດຍຜ່ານກອງປະຊຸມທຸລະກິດລາວ Lao Business Forum; ຮ່ວມມືກັບໂຄງການການພັດທະນາການຄ້າແບບຍືນຍົງຢູ່ ສປປ ລາວ (ITC-T4SD Hub Laos) ໃນການສົ່ງເສີມ ສິນຄ້າລາວ ສົ່ງອອກໄປສາຫະພາບເອີລົບ; ຮ່ວມມືກັບໂຄງການເຊື່ອມໂຍງເສດຖະກິດລາວສູ່ອາຊຽນ, ການພັດທະນາທຸລະກິດ ແລະ ການຄ້າ (Related-GIZ) ເພື່ອສົ່ງເສີມໃຫ້ພາກທຸລະກິດລາວ ສາມາດເຊື່ອມໂຍງປະຊາຄົມເສດຖະກິດກັບອາຊຽນ(AEC); ຮ່ວມມືກັບໂຄງການພັດທະນາວຽກງານອາຊີວະສຶກສາຂອງລາວ (VELA II-GIZ) ເພື່ອສ້າງສູນບໍລິການອາຊີວະສຶກສາແບບຄວບຄູ່ (DCT Service Centre); ຮ່ວມມືກັບອົງການ ILO ແລະ AOTS/HIDA ເພື່ອຈັດເຝິກອົບຮົມດ້ານບໍລິຫານບຸກຄະລາ

ກອນ, ຝຶກສີມືແຮງງານ; ຮ່ວມມືກັບUNDP ເພື່ອຈັດຕັ້ງໂຄງການພັດທະຜະລິດຕະພັນຍີ່ຫໍ້ລາວ ແລະ ສົ່ງອອກໄປຕະຫຼາດເອີລົບ, ຮ່ວມມືກັບ ໂຄງການສະໜັບສະໜູນ ສປປ ລາວ ໃນການເຊື່ອມໂຍງພາກພື້ນຈາກສາຫະພາບເອີລົບ (ARISE Plus-Laos) , ໂຄງການສະໜັບສະໜູນການອຳນວຍຄວາມສະດວກທາງດ້ານການຄ້າແລະ ການເຊື່ອມໂຍງເສດຖະກິດໃນໄລຍະ2 (LUNA II) ເພື່ອ ພັດທະນາທັກສະຂອງພະນັກງານ, ສັງລວມບັນດາກົດໝາຍ ແລະ ເຝິກອົບຮົມວຽກງານກົດໝາຍໃຫ້ພະນັກງານຫ້ອງການສຄອ ແຫ່ງຊາດ, ສຄອ ແຂວງ, ສາ ມະຄົມ ແລະ ກຸ່ມທຸລະກິດ; ຮ່ວມກັບສະພາການຄ້າເມືອງຄາວາສະກິດ ແລະ ກະຊວງການເງິນຍີປຸ່ນ ຈັດຕັ້ງໂຄງການສ້າງຄວາມເຂັ້ມແຂງດ້ານການຈົດກ່າຍບັນຊີ (Book Keeping); ຮ່ວມມືກັບ World Education ເພື່ອສ້າງວິຊາຊີບໃຫ້ກັບເອື້ອຍນ້ອງຍິງ, ຮ່ວມຮ່ວມມືກັບ ອົງການ JICA ໂດຍມີຊ່ຽວຊານມາປະຈຳເພື່ອມາຊ່ວຍໃນການປັບປຸງຫຼັກສູດ, ຄູ່ມື ແລະ ຈັດຕັ້ງການເຝິກອົບຮົມ ການສ້າງຄວາມເຂັ້ມແຂງແກ່ທຸລະກິດຂະໜາດນ້ອຍ ແລະ ກາງ, ຮ່ວມມືກັບອົງການ KOICA ເພື່ອສົ່ງທີ່ປຶກສາ ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງມາປະຈຳຢູ່ ສຄອ ແຫ່ງຊາດລາວ ແລະ ອື່ນໆ ເພື່ອສ້າງຄວາມເຂັ້ມແຂງໃຫ້ກັບ ສຄອຊ ແລະ ພາກທຸລກິດລາວ ປະສົບຜົນສຳເລັດຕາມວັດຖຸປະສົງເປັນຢ່າງດີ. ຮ່ວມມືກັບໂຄງການ LUNA ເພື່ອ ພັດທະນາທັກສະຂອງພະນັກງານ, ສັງລວມບັນດາກົດໝາຍ ແລະ ເຝິກອົບຮົມວຽກງານກົດໝາຍໃຫ້ພະນັກງານຫ້ອງການສຄອ ແຫ່ງຊາດ, ສຄອ ແຂວງ, ສາ ມະຄົມ ແລະ ກຸ່ມທຸລະກິດ, ຮ່ວມມືກັບສະຖາບັນ MBI ເພື່ອສະໜັບສະໜູນທຸລະກິດ Start Up.

**ສະຫລຸບການເຂົ້າຮ່ວມງານກອງປະຊຸມ, ສຳມານາ ແລະງານຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ ໃນສົກປີ 2017-2020 ຈຳນວນ 236 ຄັ້ງ ດັ່ງນີ້:**

**ກອງປະຊຸມພົບປະຢູ່ພາຍໃນ:**

- ປີ 2017: 33 ຄັ້ງ
- ປີ 2018 33 ຄັ້ງ
- ປີ 2019: 20 ຄັ້ງ
- ປີ 2020 45 ຄັ້ງ

**ສະຫລຸບການເຂົ້າຮ່ວມງານ (ຕ່າງປະເທດ)**

- ປີ 2017: 29 ຄັ້ງ
- ປີ 2018: 27 ຄັ້ງ
- ປີ 2019 38 ຄັ້ງ
- ປີ 2020 11 ຄັ້ງ

*ເຊິ່ງບໍ່ໄດ້ນັບເອົາບັນດາການເຂົ້າຮ່ວມກອງປະຊຸມ, ການສຳມະນາ ແລະ ພົບປະທຸລະກິດ ທີ່ບັນດາກະຊວງ, ຂະແໜງການຈັດຂຶ້ນ ຢູ່ ສປປ ລາວ (ອີກຫຼາຍຮ້ອຍຄັ້ງ)*

## 2.8 ວຽກງານບໍລິຫານ

ເພື່ອໃຫ້ສະຖານທີ່ເຮັດວຽກ ແລະ ຫ້ອງປະຊຸມ ໃຫ້ມີຄວາມສະດວກ, ສຄອ ແຫ່ງຊາດລາວ ໄດ້ມີການປັບປຸງຫ້ອງປະຊຸມ, ຫ້ອງເຮັດວຽກ, ຫ້ອງນ້ຳ ແລະ ສ້ອມແປງຫຼັງຄາຄືນໃໝ່ເຊັ່ນ: ປັບປຸງຫ້ອງປະຊຸມຂະໜ້ອຍ, ຂະໜາດກາງ ບັນຈຸໄດ້ 40 ຄົນ, ຫ້ອງປະຊຸມໃຫຍ່ ບັນຈຸໄດ້ 80 ຄົນ, ຫ້ອງສະມຸດ, ຕູ້ວາງສະແດງສິນຄ້າ, ຈັດຊື້ອຸປະກອນຮັບໃຊ້ຫ້ອງປະຊຸມ(ໂຕະ, ຕັ່ງ, ເຄື່ອງສຽງ, ແອເຢັນ), ສ້າງຫ້ອງກາເຟ, ຫ້ອງການຂອງສູນພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ, ຫ້ອງການສົ່ງເສີມການຕະຫຼາດ ແລະ ຜະລິດຕະພັນລາວ, ໂຄງຫຼັງຄາ, ຫ້ອງນ້ຳ 12 ຫ້ອງ, ປັບປຸງເສັ້ນທາງປູຢາງອາດສະຟານອ້ອມຕຶກຫ້ອງການ, ເຮັດຮົ້ວ, ປຸກດອກໄມ້, ຕົ້ນໄມ້ອ້ອມຮົ້ວ ໃນລະດັບມາດຕະຖານ ເຊິ່ງມີມູນຄ່າການກໍ່ສ້າງເກືອບ 1.6 ຕື້ ກີບ. ພ້ອມດຽວກັນນີ້ກໍ່ໄດ້ມີການຈັດສັນສະຖານທີ່ເຮັດວຽກຂອງພະນັກງານໃຫ້ເປັນລະບົບ ແລະ ມີຄວາມສະດວກສະບາຍຂຶ້ນກວ່າເກົ່າ.

## 2.9 ວຽກງານການຂະຫຍາຍສະມາຊິກ ແລະ ສຄອ ແຂວງ, ສະມາຄົມ ແລະ ກຸ່ມທຸລະກິດ

ສຄອຊ ໄດ້ປັບປຸງໂຄງສ້າງຂອງໜ່ວຍງານພາຍໃນໃຫ້ເໝາະສົມກັບໜ້າວຽກທີ່ຈຳເປັນ, ປຸກລະດົມໃຫ້ ສາມະຄົມ-ກຸ່ມທຸລະກິດ ປັບປຸງທະບຽນຄືນໃໝ່ໃຫ້ສອດຄ່ອງກັນກັບດຳລັດ 316 ແລະ ໄດ້ສ້າງຕັ້ງ ສຄອ ແຂວງ ໄຊສົມບູນ ໄດ້ສຳເລັດໃນປີ 2017. ປັດຈຸບັນ ສຄອ ແຂວງ ລວມທັງໝົດມີ 17 ສຄອ ແຂວງ ເຊັ່ນ: (1) ສຄອ ແຂວງ ອຸດົມໄຊ, (2) ແຂວງບໍ່ແກ້ວ, (3) ແຂວງຜົ້ງສາລີ, (4) ແຂວງຫົວພັນ, (5) ແຂວງ ຊຽງຂວາງ, (6) ແຂວງ ຫຼວງພະບາງ, (7) ແຂວງ ຫຼວງນ້ຳທາ, (8) ແຂວງ ວຽງຈັນ, (9) ແຂວງ ໄຊຍະບູລີ, (10) ແຂວງ ບໍລິຄຳໄຊ, (11) ແຂວງ ຄຳມ່ວນ, (12) ແຂວງ ສະຫັວນນາເຂດ, (13) ແຂວງ ຈຳປາສັກ, (14) ແຂວງ ສາລະວັນ, (15) ແຂວງ ເຊກອງ, (16) ອັດຕະປື ແລະ (17) ນະຄອນຫຼວງວຽງຈັນ ແລະ (18) ແຂວງໄຊສົມບູນ.

ປະກອບມີ 09 ກຸ່ມທຸລະກິດເຊັ່ນ: (1)ກຸ່ມ ທຸລະກິດການຢາ, (2) ກຸ່ມ ເກືອ, (3) ກຸ່ມ ອຸດສາຫະກຳປຸງແຕ່ງ, (4) ກຸ່ມ ຜູ້ຜະລິດຊີມັງ, (5) ກຸ່ມ ກໍ່ສ້າງ ແລະ ຕິດຕັ້ງໄຟຟ້າ, (6) ກຸ່ມ ສະບຽງອາຫານ ແລະ ເຄື່ອງໃຊ້ສອຍ, (7) ກຸ່ມທຸລະກິດກໍ່ສ້າງ, (8) ກຸ່ມວັດສະດຸກໍ່ສ້າງ, (9) ກຸ່ມ ຜະລິດເຫຼັກ ເສັ້ນ ສປປລາວ ແລະ ມີ 20 ສະມາຄົມເຊັ່ນ: (1) ສະມາຄົມທຸລະກິດທ່ອງທ່ຽວລາວ, (2) ສະມາຄົມ ຜູ້ສົ່ງອອກກາເຟລາວ, (3) ສະມາຄົມ ຫັດຖະກຳລາວ, (4) ສະມາຄົມອຸດສາຫະກຳຕັດຫຍິບລາວ, (5) ສະມາຄົມ ໂຮງແຮມ ແລະ ຮ້ານອາຫານ, (6) ສະມາຄົມ ເຟີນີເຈີ້ລາວ, (7) ສະມາຄົມ ຜູ້ຈັດສົ່ງສິນຄ້າລະຫ່ວາງປະເທດ ຂອງ ສປປລາວ, (8) ສະມາຄົມນັກທຸລະກິດໜຸ່ມ, (9) ສະມາຄົມນັກທຸລະກິດຍິງ, (10) ສະມາຄົມຊາວຄ້າຂາຍອັນຍະມະນີ ແລະ ເຄື່ອງປະດັບລາວ, (11) ສະມາຄົມ ICT ລາວ, (12) ສະມາຄົມອຸດສາຫະກຳປຸງແຕ່ງໄມ້ສຳເລັດຮູບແຫ່ງຊາດລາວ, (13) ສະມາຄົມອຸດສາຫະກຳຍານພະຫະນະລາວ, (14) ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກ໊ສ, (15) ສະມາຄົມ ຜະລິດ ແລະ ປຸງແຕ່ງກະສິກຳລາວ, (16) ສະມາຄົມ ຜູ້ປະກອບການສິນຄ້າຊັ້ນສູງ, (17) ສະມາຄົມ ກໍ່ສ້າງ-ຊົນລະປະທານ ແລະ ເຄຫາສະຖານ, (18) ສະມາຄົມບໍລິສັດທີປຶກສາ, (19) ສະມາຄົມ ນັກທຸລະກິດປູກໄມ້ ແລະ ພືດອຸດສາຫະກຳ, (20) ສະມາຄົມ ຜູ້ຜະລິດ ແລະ ຈຳໜ່າຍຜະລິດສິນດ້ວຍພາບ ແລະ ສຽງ.

- **ວຽກງານ ສຄອ ຕ່າງປະເທດ ປະຈໍາລາວ**

ສະພາການຄ້າຕ່າງປະເທດປະຈໍາ ສປປລາວ ທີ່ໄດ້ຮັບການສ້າງຕັ້ງໂດຍການສະເໜີຈາກພາກທຸລະກິດຕ່າງປະເທດໃນລາວ ໂດຍຜ່ານ ການຄົ້ນຄວ້າຂອງ ສຄອຊ ຕາມລະບຽບຫັລກການທີ່ກະຊວງກໍານົດ ແລະ ຍື່ນຕໍ່ເພື່ອຂໍອະນຸມັດການສ້າງຕັ້ງ ຈາກກະຊວງການຕ່າງປະເທດໃນເມື່ອກ່ອນ ຊຶ່ງໃນປະຈຸບັນແມ່ນອະນຸມັດໂດຍກະຊວງອຸດສາ ຫະກໍາ ແລະ ການຄ້າ ມີທັງ ໝົດ 12 ປະເທດຄື: (1) ສະພາການຄ້າຈີນ ປະຈໍາ ສປປລາວ ຊຶ່ງມີສາຂາຍ່ອຍ ຈໍານວນ 8 ສາຂາ, (2) ສະພາການຄ້າ ແລະອຸດສາຫະກໍາອີຢູ ປະຈໍາ ສປປລາວ, (3) ສະພາການຄ້າອີສຕາລີ ປະຈໍາ ສປປ ລາວ, (4) ສະມາຄົມນັກທຸລະກິດ ຫວຽດນາມຮ່ວມມື ແລະລົງທຶນໃນ ສປປລາວ, (5) ສະມາຄົມທຸລະກິດ ອາເມລິກາ ປະຈໍາ ສປປລາວ, (6) ສະພາການ ຄ້າອິນເດຍປະຈໍາລາວ, (7) ສະພາການຄ້າເກົາຫລີໃຕ້ປະຈໍາລາວ, (8) ສະພາການຄ້າ ແລະອຸດສາຫະກໍາຍີ່ປຸ່ນ ປະຈໍາ ສປປລາວ, (9) ສະມາຄົມນັກທຸລະກິດໄທ ປະຈໍາ ສປປລາວ, (10) ກຸ່ມນັກທຸລະກິດອັງກິດ ປະຈໍາລາວ, (11) ສະມາຄົມ ນັກທຸລະກິດສິງກະໂປປະຈໍາລາວ, (12) ສະພາການຄ້າ ແລະ ອຸດສາຫະກໍາມາເລເຊຍ ປະຈໍາລາວ. ບັນດາສະພາການຄ້າ ດັ່ງກ່າວຈໍານວນໜຶ່ງແມ່ນມີການເຄື່ອນໄຫວ ແລະ ລາຍງານຢ່າງເປັນປົກກະຕິ, ບາງຈໍານວນກໍ່ບໍ່ໄດ້ມີການເຄື່ອນໄຫວເປັນ ປົກກະຕິ ແລະ ບໍ່ມີການລາຍງານເປັນປະຈໍາຕາມລະບຽບການ.

## 2.10 ວຽກງານການພັດທະນາຊັບພະຍາກອນມະນຸດ

ສຄອ ແຫ່ງຊາດລາວ ກໍຍັງມີນະໂຍບາຍຢ່າງຊັດເຈນຕໍ່ກັບການພັດທະນາຊັບພະຍາກອນມະນຸດທັງພາຍໃນ ແລະ ສຄອ ແຂວງ, ສະມາຄົມ ແລະ ກຸ່ມທຸລະກິດອື່ນໆ,ເຊິ່ງສັງລວມໄດ້ຄື:

- ຈັດສົ່ງພະນັກງານໄປເຝິກອົບຮົມໄລຍະສັ້ນຢູ່ພາຍໃນ ແລະ ຕ່າງປະເທດປົກກະຕິ.
- ພະຍາຍາມນໍາໃຊ້ທ່າແຮງທີ່ມີຈັດການເຝິກອົບຮົມສາຂາວິຊາຕ່າງໆ ໂດຍມີຊ່ຽວຊານຈາກປະເທດ ຍີ່ປຸ່ນມາຊ່ວຍ ປະຈໍາໃນການປັບປຸງຫຼັກສູ, ຄູ່ມື ແລະ ວິທີການ.
- ຈັດກິດຈະກໍາເຝິກອົບຮົມໃຫ້ແກ່ຄູເຝິກທີ່ສັງກັດຢູ່ໃນໂຮງງານແລະບໍລິສັດຢ່າງຕໍ່ເນື່ອງ, ເຝິກອົບຮົມພະນັກ ງານ ຂອງບໍລິສັດຕ່າງໆຕາມການສະເໜີຮ່ວມກັບໂຄງການ ICT ສ້າງຄູເຝິກ TOT ແລະ ທີ່ເປີກສາ TOC.
- ໄດ້ນໍາສົ່ງ ນັກສຶກໄປຮຽນຕໍ່ ຢູ່ ສປປຈີນ ໃນນາມທຶນການສຶກສາຂອງ ສຄອ ແຫ່ງຊາດລາວ ໃຫ້ກັບສະມາຊິກ ໄປສຶກສາຕໍ່ ຢູ່ແຂວງຢູນານ ສປ ຈີນ ຈໍານວນ 50 ທຶນໃນ 05 ປີ ທີ່ຜ່ານມາ.
- ໄດ້ສ້າງແຜນພັດທະນາ ບຸກຄະລະກອນ ຂອງ ສຄອຊ ປີ 2019-2020

## 2.11 ວຽກງານເສດຖະກິດ ແລະ ການເງິນ

ສຄອແຫ່ງຊາດໄດ້ພະຍາຍາມກຸ້ມຕົນເອງແລະຊອກແຫຼ່ງລາຍຮັບໄດ້ມີຜົນສໍາເລັດ...

- ລາຍຮັບປີ 2017: 3,455,863,706 ກີບ, ລາຍຈ່າຍ: 3,249,232,791 ກີບ
- ລາຍຮັບປີ 2018: 4,284,321,132 ກີບ, ລາຍຈ່າຍ: 4,007,666,874 ກີບ
- ລາຍຮັບ**2019 : 5,222,979,245** ກີບ, ລາຍຈ່າຍ: 4,674,938,637ກີບ
- ລາຍຮັບ 06 ເດືອນຕົ້ນປີ 2020: 2,505,233,694ກີບ, ລາຍຈ່າຍ: 1,980,821,662ກີບ

**(ລາຍລະອຽດທາງການເງິນຈະ ລາຍງານສະເພາະ)**

**2.12 ຂໍ້ສະເໜີ ຂອງ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ກ່ຽວກັບຜົນກະທົບຂອງ ການແຜ່ລະບາດຂອງພະຍາດໂຄວິດ-19.**

ເພື່ອເປັນການເອື້ອອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ ແລະ ຫຼຸດຜ່ອນຜົນກະທົບຈາກການແຜ່ ລະບາດຂອງພະຍາດໂຄວິດ- 19 ສຄອຊ ໄດ້ນຳສະເໜີບັນຫາຕ່າງ ເພື່ອໃຫ້ລັດຖະບານພິຈາລະນາດັ່ງນີ້:

1. ສະເໜີກະຊວງການເງິນ ໃຫ້ເລື່ອນເວລາຊຳລະອາກອນຂອງປີ 2019 ໄປອີກ ສອງງວດ
2. **ສະເໜີກະຊວງແຮງງານ ແລະ ສະຫວັດດີການສັງຄົມ** ພິຈາລະນາ: (1) ໂຄສະນາ ເຜີຍແຜ່ ນະໂຍບາຍ ການອຸດໜູນວ່າງງານໃຫ້ແກ່ຜູ້ປະກອບການ ແລະ ຜູ້ອອກແຮງງານ ຢ່າງເລິກເຊິ່ງ ແລະ ກວ້າງຂວາງ, ພ້ອມທັງ ພິຈາລະນາການຮ້ອງຂໍການອຸດໜູນວ່າງວຽກ ພາຍໃນ 30 ວັນ ຕາມທີ່ໄດ້ລະບຸໃນມາດຕາ 95 ຂອງກົດໝາຍ ປະກັນສັງຄົມ ເພື່ອຊ່ວຍເຫຼືອຜູ້ວ່າງງານ ໃນຊ່ວງວິກິດຂອງການລະບາດຂອງເຊື້ອໄວຣັສ ໂຄວິດ-19; (2) ພິຈາລະນາ ການໃຫ້ເງິນອຸດໜູນ ແກ່ພະນັກງານ ກໍລະນີທີ່ຖືກ ພັກງານຊົ່ວຄາວ ໃນໄລຍະ ການແຜ່ລະບາດຂອງ ເຊື້ອໄວຣັສ COVID-19; (3) ພິຈາລະນາເລື່ອນເວລາຊຳລະການປະກອບເງິນສົມທົບເຂົ້າກອງທຶນປະກັນ ສັງຄົມແບບບັງຄັບ ຂອງປີ 2020 ດ້ວຍ, ເພື່ອຫຼຸດຜ່ອນພາລະຂອງຜູ້ປະກອບການ ໃນຊ່ວງການລະບາດຂອງ ເຊື້ອໄວຣັສ ໂຄວິດ-19,
3. **ສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາ: (1)** ຮ່ວມປຶກສາຫາລື ກັບ ບັນດາທະນາຄານທຸລະ ກິດ ແລະ ສະຖາບັນການເງິນຈຸນລະພາກ ເພື່ອ ພິຈາລະນາ ຄວາມເປັນໄປໄດ້ ໃນການກຳນົດບາງມາດຕະການ ໃນການໃຫ້ຄວາມຊ່ວຍເຫຼືອລູກໜີ້ ໃນໄລຍະການແຜ່ລະບາດຂອງເຊື້ອໄວຣັສ COVID-19 ເຊັ່ນ: ການເລື່ອນ ຫຼື ຜ່ອນຊຳລະດອກເບ້ຍທະນາຄານ, ແລະ ອື່ນໆ, (2) ສະເໜີໃຫ້ ທະນາຄານ ແຫ່ງ ສປປ ລາວ ພິຈາລະນາ ຫຼຸດຜ່ອນຂໍ້ກຳນົດໃນການຈັດຊັ້ນໜີ້ ແລະ ຂໍ້ກຳນົດການຊຳລະໜີ້ຂອງລູກຄ້າສິນເຊື່ອຂອງສະຖາບັນການເງິນ ຈຸນລະພາກ ຊົ່ວຄາວ, ເພື່ອຫຼຸດຜ່ອນຜົນກະທົບຕໍ່ລູກຄ້າສິນເຊື່ອ ແລະ (3) ພິຈາລະນາ ເພີ່ມສະພາບຄ່ອງໃນ ລະບົບທະນາຄານ ເພື່ອໃຫ້ພາກທຸລະກິດສາມາດເຂົ້າຫາເງິນກູ້ໄດ້ຫຼາຍຂຶ້ນ ເຊັ່ນ ຄົ້ນຄວ້າຄວາມເປັນໄປໄດ້ໃນ ການຫຼຸດອັດຕາເງິນຄ້ຳປະກັນເງິນຝາກຂອງທະນາຄານທຸລະກິດ, ທີ່ກຳນົດໂດຍ ທະນາຄານແຫ່ງ ສປປ ລາວ, ເພື່ອເຮັດໃຫ້ມີເງິນໝູນວຽນໃນລະບົບ ຫຼາຍຂຶ້ນ.
4. **ສະເໜີໃຫ້ ກັບກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງ ສາທາລະນະສຸກ ແລະ ກະຊວງ ການເງິນ:** (1) ອຳນວຍຄວາມສະດວກໃຫ້ແກ່ການນຳເຂົ້າ ແລະ ສົ່ງອອກ ສິນຄ້າ ໂດຍສະເພາະ ແມ່ນ ຫຼຸດຜ່ອນ ຂອດຂັ້ນ, ຄ່າທຳນຽມ, ຄ່າພາສີ ທີ່ຕິດພັນກັບການນຳເຂົ້າສິນຄ້າປະເພດໜ້າກາກ, ເຈວລ້າງມື, ຢາປົວພະຍາດ ແລະ ເຄື່ອງອຸປະກອນການແພດອື່ນໆ ພ້ອມທັງພິຈາລະນາລົບລ້າງການກຳນົດລາຄາຂອງສິນຄ້າປະເພດດັ່ງກ່າວ, ເນື່ອງຈາກການກຳນົດລາຄາ ອາດເປັນສາເຫດທີ່ເຮັດໃຫ້ຜູ້ປະກອບການບໍ່ສາມາດນຳເອົາສິນຄ້າປະເພດດັ່ງກ່າວ

ມາຈຳໜ່າຍໄດ້ ຈຶ່ງເຮັດໃຫ້ສິນຄ້າຂາດຕະຫຼາດຢ່າງຮຸນແຮງ,(2) ສະເໜີໃຫ້ຫຼຸດຜ່ອນຂອດຂັ້ນ, ຄ່າທຳນຽມ, ທີ່ຕິດພັນກັບການນຳເຂົ້າວັດຖຸດິບມາຜະລິດ ແລະ ການ ສົ່ງອອກສິນຄ້າທີ່ຜະລິດພາຍໃນປະເທດ ແລະ (3) ສະເໜີໃຫ້ຂະແໜງການກ່ຽວຂ້ອງຂອງພາກລັດ ພິຈາລະນາ ຫຼຸດຂອດຂັ້ນ ການເຂົ້າຫາແຫຼ່ງທຶນ ຂອງວິສາຫະກິດ ຂະໜາດນ້ອຍ ແລະ ກາງ ໃຫ້ສະດວກ ແລະ ວ່ອງໄວ ຍິ່ງຂຶ້ນ.

5. **ສະເໜີໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່:** ພິຈາລະນາ ຫຼຸດອັດຕາຄ່າໄຟຟ້າ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ-19.
6. **ສະເໜີໃຫ້ ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ລັດວິສາຫະກິດ ນ້ຳປະປາ** ພິຈາລະນາ ຫຼຸດອັດຕາຄ່າ ນ້ຳປະປາ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ-19.
7. **ສະເໜີກະຊວງໄປສະນີ, ໂທລະຄົມ ແລະ ການສື່ສານ** ພິຈາລະນາ ຫຼຸດອັດຕາຄ່າ ອິນເຕີເນັດ ໃຫ້ແກ່ທຸລະກິດທຸກໆຂະແໜງການ ໃນຊ່ວງໄລຍະການແຜ່ລະບາດຂອງພະຍາດໂຄວິດ-19.
8. **ສະເໜີໃຫ້ ສຳນັກງານນາຍົກລັດຖະມົນຕີ:** (1) ພິຈາລະນາ ຕັ້ງກອງທຶນສະເພາະເພື່ອບັນເທົາຜົນກະທົບຈາກການລະບາດຂອງ **COVID**-19 ຫຼື ນຳໃຊ້ກອງທຶນທີ່ມີຢູ່ ເຊັ່ນ ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ເພື່ອຊ່ວຍຜູ້ປະກອບການ ຊຳລະດອກເບ້ຍທະນາຄານ ໃນໄລຍະນີ້, ດ້ວຍການກຳນົດ ກຸ່ມທຸລະກິດເປົ້າໝາຍ ທີ່ມີຜົນກະທົບຕໍ່ເສດຖະກິດ ແລະ ການຈ້າງງານຫຼາຍທີ່ສຸດ ເຊັ່ນ ທຸລະກິດ ປະເພດ ໂຮງແຮມ, ແລະ ໂຮງຈັກໂຮງງານ ເປັນຕົ້ນ ໃນການໃຫ້ການຊ່ວຍເຫຼືອດັ່ງກ່າວ, (2) ພິຈາລະນາ ເພີ່ມການໃຊ້ຈ່າຍຂອງພາກລັດ ໃນການກໍ່ສ້າງໂຄງລ່າງພື້ນຖານ, ການຄວບຄຸມການລະບາດຂອງພະຍາດໂຄວິກ 19 ແລະ ການຈັດຕັ້ງປະຕິບັດໂຄງການຕ່າງໆ, ນຳໃຊ້ ກອງທຶນບັນເທົາໄພພິບັດ, ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ກອງທຶນອື່ນໆ ທີ່ມີຢູ່ ຫຼື ລະດົມທຶນຈາກອົງກອນພັດທະນາສາກົນ ເພື່ອຮັບໃຊ້ມາດຕະການກະຕຸ້ນເສດຖະກິດ.
9. ສະເໜີໃຫ້ ລັດຖະບານ ພິຈາລະນາທຸກໆຄຳຮ້ອງຂອງ ບັນດາຫົວໜ່ວຍວິສາຫະກິດ,ໂດຍສະເພາະແມ່ນໂຮງງານອຸດສາຫະກຳປຸງແຕ່ງ, ບັນດາໂຮງງານປີ່ນອ້ອມ ຂະແໜງການຜະລິດ,ໂຮງງານຕັດຫຍິບ, ຮ້ານອາຫານ ແລະ ຮ້ານຄ້າ ຕ່າງໆ ລວມເຖິງໂຄງການທີ່ຢູ່ ໃນ ເຂດ ຫຼື ນອກເຂດເສດຖະກິດພິເສດແລະເຂດເສດຖະກິດສະເພາະ ທີ່ມີເງື່ອນໄຂໄດ້ມາດຕະຖານ ໃນການ ປ້ອງກັນການແຜ່ລະບາດຂອງພະຍາດ **COVID**-19 ຕາມ ຄຳແນະນຳຂອງພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະແມ່ນເຂດທີ່ບໍ່ມີການແຜ່ລະບາດຂອງພະຍາດດັ່ງກ່າວໃຫ້ສາມາດດຳເນີນການຜະລິດ ແລະ ການບໍລິການຂອງຕົນໄດ້ໂດຍໄວ.
10. ສະເໜີໃຫ້ລັດຖະບານພິຈາລະນາແກ້ໄຂສະພາບການກີດຂວາງລົດບັນທຸກສິນຄ້າທີ່ບໍ່ໃຫ້ຜ່ານດ່ານຂອງເມືອງ ແລະແຂວງຢ່າງຮີບດ່ວນເຊັ່ນ: ສະເໜີໃຫ້ລັດຖະບານ ໂດຍສະເພາະກະຊວງໂຍທາທິການ ແລະ ຂົນສົ່ງແກ້ໄຂແຈ້ງການ ເລກທີ 266 ທີ່ຫ້າມ ຄົນຈີນຂັບລົດເຂົ້າມາເກັບສິນຄ້າກະສິກຳທີ່ຢູ່ໃນໄລຍະເວລາເກັບກ່ຽວຜົນລະປູກເພື່ອສົ່ງອອກ ສປ ຈີນ ເຊັ່ນ:ໝາກຖົ່ວ,ໝາກໂມ, ອ້ອຍ, ແລະ ອື່ນໆ, ໂດຍໃຫ້ແກ່ຍາວເວລາການ

ປະຕິບັດແຈ້ງການດັ່ງກ່າວ ໄປອີກ 2 ເດືອນ ເພື່ອໃຫ້ຄືນຂັບລົດຈີນທີ່ມີເງື່ອນໄຂສາມາດຂັບລົດເຂົ້າມາກັບສິນຄ້າຈາກຝ່າຍລາວໄດ້, ເຊິ່ງຜູ້ປະກອບການຝ່າຍລາວມີຄວາມຫຍຸ້ງຍາກສົມຄວນແລະໃຊ້ເວລາຂ້ອນຂ້າງດົນໃນການຂໍເຊົ່າລົດຂົນສົ່ງນຳຝ່າຍຈີນແລະການ ປະກອບເອກະສານກ່ຽວຂ້ອງຕ່າງໆ.

11. ສະເໜີໃຫ້ ລັດຖະບານ ພິຈາລະນາວາງ ອອກນະໂຍບາຍຊ່ວຍເຫຼືອສະໜັບສະໜູນ ເງິນອຸດໜູນໃຫ້ແກ່ແຮງງານທີ່ບໍ່ຢູ່ໃນລະບົບປະກັນສັງຄົມ ກໍ່ສາມາດໄດ້ຮັບເງິນສະໜັບສະໜູນຈາກລັດຖະ ບານ ໃຫ້ໃກ້ຄຽງກັບແຮງງານທີ່ຢູ່ໃນລະບົບປະກັນສັງຄົມ ໂດຍອີງຕາມສັນຍາການວ່າຈ້າງງານ ລະຫວ່າງ ນາຍຈ້າງ ແລະ ຜູ່ອອກແຮງງານ ຫຼື ເອກະສານການຮັບເງິນເປັນການຍັ້ງຢືນ. ພ້ອມດຽວກັນນັ້ນ, ຂໍສະ ເໜີໃຫ້ອອກແຈ້ງການ ໂດຍໄວກ່ຽວກັບຈຳນວນເງິນອຸດໜູນທີ່ຈະໄດ້ຮັບ ຂອງແຮງງານທີ່ຢູ່ໃນລະບົບປະ ກັນສັງຄົມ ໃນໄລຍະການແຜ່ລະບາດເຊື້ອພະຍາດດັ່ງກ່າວ.

12. ໃນໄລຍະການລະບາດຂອງເຊື້ອພະຍາດດັ່ງກ່າວ, ສະເໜີໃຫ້ລັດຖະບານພິຈາລະນາອອກຄຳສັ່ງເຖິງ ທະນາຄານໃຫ້ເລື່ອນການຊຳລະໜີ້ທີ່ເປັນຕົ້ນທຶນ ແລະ/ຫຼື ດອກເບ້ຍຂອງລູກຄ້າ ທີ່ເປັນຜູ້ປະກອບການ ຫຼື ເປັນຜູ້ອອກແຮງງານ ໃນໄລຍະ 3 ເດືອນຫຼື 6 ເດືອນ ຕາມຄວາມເໝາະສົມ ເປັນເອກະພາບທົ່ວລະບົບ, ພ້ອມດຽວກັນນັ້ນ ສະເໜີໃຫ້ພິຈາລະນາ ໃຫ້ບັນດາສະຖາບັນການເງິນຈຸລະພາກ (ສກຈ) ປະຕິບັດ ຂໍ້ຕົກລົງຂອງ ທຫລ ສະ ບັບເລກທີ 238/ທຫລ ຕາມຄວາມເໝາະສົມກັບສະພາບການຂອງ ສະຖາບັນ.

13. ສະເໜີລັດຖະບານພິຈາລະນາອອກແຈ້ງການ ຫຼື ຂໍ້ຕົກລົງໃຫ້ ສະຖາບັນການເງິນຈຸລະພາກ (ສກຈ) ປ່ອຍເງິນກູ້ສຸກເສີນ ທີ່ມີ ດອກເບ້ຍພິເສດຕໍ່າສຸດ ໃນວົງເງິນທີ່ເໝາະສົມ ແລະ ມີໄລຍະເວລາການກູ້ເງິນ 6 ເດືອນ ຫາ 12 ເດືອນ, ພ້ອມດຽວກັນນັ້ນ ສະເໜີພິຈາລະນາໃຫ້ເລື່ອນການຊຳລະອາກອນກຳໄລລ່ວງໜ້າ ຂອງ ສະຖາບັນການເງິນຈຸລະພາກ ສຳລັບໄຕມາດທີ 1 ແລະ ໄຕມາດທີ 2 (ສຳລັບອົງກອນທີ່ມີກຳໄລ) ໄປທ້າຍປີເພື່ອສ້າງເງື່ອນໄຂໃຫ້ ສະຖາບັນການເງິນຈຸລະພາກ ສາມາດປ່ອຍກູ້ເງິນດັ່ງກ່າວໃຫ້ແກ່ຜູ້ປະ ກອບການໄດ້ໂດຍໄວ.

14. ເພື່ອເປັນການສະໜັບສະໜູນຊ່ວຍເຫຼືອໃນການຫຼຸດຜ່ອນຄ່າໃຊ້ຈ່າຍໃຫ້ແກ່ຜູ້ປະ ກອບການ ແລະ ແຮງງານ ສະເໜີໃຫ້ ລັດຖະບານ ພິຈາລະນາອອກແຈ້ງການຍົກເວັ້ນອາກອນຄ່າເຊົ່າທີ່ດິນ,ຕຶກອາຄານ, ທີ່ພັກພາອາໃສ ແລະ ອື່ນໆ ແລະແຈ້ງເຖິງເຈົ້າຂອງກິດຈະການດັ່ງກ່າວໃຫ້ຍົກເວັ້ນຫຼືຫຼຸດຜ່ອນຄ່າເຊົ່າຕາມ ຄວາມເໝາະສົມ

15. ສະເໜີ ລຖບ ພິຈາລະນາ ອອກນະໂຍບາຍຜ່ອນຜັນ ເພື່ອ ກຳນົດ ອັດຕາ ພາສີ~ອາກອນ ລວມທັງ ຄ່າເຊົ່າທີ່ດິນ ແລະ ສະຖານທີ່ປະກອບການ ເຮັດໃຫ້ຕົ້ນທຶນທຸລະກິດຕໍ່າລົງ ໃນຊ່ວງໄລຍະ 6ເດືອນ ທັງນີ້ເພື່ອເຮັດໃຫ້ຜູ້ປະກອບການໂດຍສະເພາະ **SME** ແລະແຮງງານທີ່ມີລາຍຮັບຕໍ່າເຂົ້າເຖິງໄດ້ງ່າຍຂຶ້ນ.

16. ສະເໜີ ລຖບ ອອກແຈ້ງການ ແລະ ເອກະສານແນະນຳຕ່າງໆ ທີ່ກ່ຽວພັນເຖິງການເຄື່ອນໄຫວທຸລະກິດ ໃຫ້ມີຄວາມຊັດເຈນ ແລະ ເອກະພາບ ລະຫ່ວາງ ສູນກາງແລະທ້ອງຖິ່ນ ລວມເຖິງ ຂະແໜງການຕ່າງໆ ທີ່ຕິດພັນກັບພາກທຸລະກິດ ເພື່ອປ້ອງກັນ ແລະ ຫຼີກລ້ຽງ ບໍ່ໃຫ້ເປັນຊ່ອງວ່າງ ຂອງກົນໄກຈັດຕັ້ງປະຕິບັດ.

17. ສະເໜີໃຫ້ ພິຈາລະນາຄືນ ການຫຼຸດຜ່ອນ ເງື່ອນໄຂໃນຄຳແນະນຳສະບັບເລກທີ 031/ສພກ ໃນຂໍ້ I.3 ສຳລັບພາກທຸລະກິດທີ່ຈະເປີດດຳເນີນກິດຈະການຕ້ອງມີຫໍພັກຂອງພະນັກງານ ກຳມະກອນ ທີ່ບໍ່ແອອັດ ແລະ

ຮັບປະກັນໄລຍະຫ່າງ 1 ແມັດ. ໃນສະພາບຕົວຈິງ ຫຼາຍຫົວໜ່ວຍທຸລະກິດບໍ່ມີຫໍພັກສະເພາະສໍາລັບພະນັກງານ ແລະ ກໍາມະກອນ. ພະນັກງານດັ່ງກ່າວ ແມ່ນມີທີ່ພັກອາໄສ ແລະ ສາມາດຄຸ້ມຄອງໂດຍອໍານາດການປົກຄອງທ້ອງຖິ່ນຂັ້ນບ້ານ ແລະ ຂັ້ນເມືອງໄດ້ຢ່າງເຂັ້ມງວດ ຈຶ່ງສະເໜີໃຫ້ພິຈາລະນາຜ່ອນຜັນໃຫ້ສາມາດດໍາເນີນທຸລະກິດຂອງໂຮງງານ ແລະ ທຸລະກິດດັ່ງກ່າວ,

18. ສະເໜີພິຈາລະນາຜ່ອນຜັນ ໂດຍອະນຸມັດໃຫ້ ໂຮງງານ ແລະ ທຸລະກິດສາມາດດໍາເນີນກິດຈະການໄດ້ ໂດຍໃຫ້ຢັ້ງຢືນຕົນເອງວ່າ ຈະປະຕິບັດລະບຽບກົດໝາຍຢ່າງເຂັ້ມງວດ ເພື່ອປ້ອງກັນການລະບາດຂອງພະຍາດໂຄວິດຕາມບົດຮຽນຂອງປະເທດອື່ນ. ຖ້າໂຮງງານ ແລະ ທຸລະກິດໃດ ທີ່ມີຄວາມສ່ຽງ, ພາກລັດທີ່ກ່ຽວຂ້ອງຈຶ່ງລົງກວດກາ, ຕັກເຕືອນ, ປັບໄໝ ແລະ ໃຫ້ຢຸດຕິການດໍາເນີນການ

19. ສະເໜີໃຫ້ພິຈາລະນາກໍານົດເຂດຄວາມສ່ຽງການແຜ່ລະບາດຂອງເຊື້ອພະຍາດໂຄວິດ 19 ຕາມມະຕິຕົກລົງສະບັບເລກທີ 05/ລບ ຢ່າງຮີບດ່ວນ ແລະ ມີມາດຕະການຈັດຕັ້ງປະຕິບັດຢ່າງສົມເຫດສົມຜົນ ເພື່ອໃຫ້ບັນດາຫົວໜ່ວຍທຸລະກິດທີ່ມີເງື່ອນໄຂໃນການປ້ອງກັນການແຜ່ລະບາດຂອງເຊື້ອພະຍາດດັ່ງກ່າວໃຫ້ສາມາດດໍາເນີນທຸລະກິດໄດ້ໃນເຂດດັ່ງກ່າວ

20. ສະເໜີພິຈາລະນາຜ່ອນຜັນການອະນຸມັດໃຫ້ເຈົ້າຂອງທຸລະກິດແລະຊ່ຽວຊານທີ່ເປັນຊາວຕ່າງປະເທດທີ່ມີຄວາມຈໍາເປັນ ເຂົ້າມາເຮັດວຽກໃນ ສປປ ລາວ.

***ລັດຖະບານກໍ່ໄດ້ເອົາໃຈໃສ່ແກ້ໄຂບັນຫາທີ່ ສຄອຊ ສະເໜີເປັນຢ່າງດີ, ເຖິງແມ່ນວ່າມີບາງບັນຫາຈະມີການຫຼ້າຊ້າອອກໄປກໍ່ຕາມ. ລັດຖະບານໄດ້ພະຍາຍາມສືບຕໍ່ແກ້ໄຂບັນຫາ ແລະ ຜົນກະທົບຂອງໂຄວິດ 19 ຕໍ່ໄປ.***

### 2.13 ວຽກງານການເຄື່ອນໄຫວກິດຈະກໍາທາງສັງຄົມ:

ທັງສາມອົງການຈັດຕັ້ງມະຫາຊົນ ເຊັ່ນ: ໜ່ວຍພັກ, ກໍາມະບານ, ຊາວໜຸ່ມ, ແມ່ຍິງ ພາຍໃຕ້ການນໍາພາຂອງ ໜ່ວຍພັກ ສຄອຊ ໄດ້ມີການເຄື່ອນຈັດຕັ້ງກິດຈະກໍາທາງສັງຄົມຫຼາຍຄັ້ງ ເປັນຕົ້ນແມ່ນ ການຈັດຕັ້ງ ກິລາບານເຕະ ຍິງ, ຊາຍ, ກິລາເປຕັງ, ກ໋ອບ ເພື່ອສ້າງສາຍສໍາພັນກັບອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ ເຊັ່ນ:ເຕະບານສາມມັກຄີກັບກະຊວງການຄ້າ, ຈໍານວນ 06 ຄັ້ງ, ກະຊວງການຕ່າງປະເທດຈໍານວນ.02 ຄັງ, ກະຊວງແຜນການ ແລະ ການລົງທຶນ ຈໍານວນ 02 ຄັ້ງ, ສະມາຊິກ ຈໍານວນ 10 ຄັ້ງ. ຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກ ເຄື່ອນເຊປຽນ-ເຊນໍ້ານ້ອຍແຕກ, ແລະ ນໍ້າຖ້ວມຢູ່ແຂວງຕ່າງໆ ມູນຄ່າ 500 ລ້ານກວ່າກີບ. ພ້ອມດຽວກັນນີ້ກໍ່ຍັງໄດ້ອຸປະຖໍາປຶ້ມແບບຮຽນ, ອຸປະກອນການຮຽນໃຫ້ກັບໂຮງຮຽນທີທຸກຍາກ, ຈັດງານລ້ຽງ ແລະ ບໍລິຈາກ ໃຫ້ ເດັກນ້ອຍພິການຕາ ຈໍານວນຫຼາຍຄັ້ງ ແລະ ຫຼາຍ 10 ລ້ານຕື່ມອີກ.

## III. ສະດວກ,ຂໍ້ຫຍຸ້ງຍາກແລະບົດຮຽນທີ່ຖອດຖອນໄດ້

ຜ່ານການຈັດຕັ້ງວຽກງານຕົວຈິງໃນໄລຍະເກີບ 04 ປີທີ່ຜ່ານມາ ສາມາດສະຫຼຸບຕີລາຄາໄດ້ດັ່ງນີ້:

### 3.1 ຂໍ້ສະດວກ:

- ສຄອຊ ມີດໍາລັດ 316/ນຍ ແລະ ດໍາລັດ 237/ນຍ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຂອງຕົນ.

- ມີແຜນຍຸດທະສາດ, ແຜນປະຕິບັດງານ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານ, ການພົວພັນກັບພາຍໃນ ແລະ ພາຍນອກ.
- ພາກລັດໃນທຸກລະດັບນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເຫັນໄດ້ເຖິງພາລະບົດບາດ,ຄວາມສຳຄັນຂອງ ສຄອຊ, ສຄອ ແຂວງ ແລະ ໄດ້ພະຍາຍາມຊຸກຍູ້ສົ່ງເສີມ ໃຫ້ອົງກອນດັ່ງກ່າວນີ້ມີຄວາມເຂັ້ມແຂງເທື່ອລະກ້າວ.
- ຄະນະບໍລິຫານງານ, ທີ່ປຶກສາ, ມີຄວາມເສຍສະຫຼະສູງ ທັງສັບສິນ, ຄວາມຮູ້, ຄວາມສາມາດ ແລະ ເວລາສ່ວນຕົວປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃຫ້ກັບ ພາກທຸລະກິດ ກໍ່ຄືການສ້າງຄວາມເຂັ້ມແຂງໃຫ້ ສຄອ ໃນແຕ່ລະຂັ້ນ.
- ຄະນະປະຈຳ ມີການແບ່ງໜ້າທີ່ຮັບຜິດຊອບ, ອຳນາດການຕັດສິນໃຈຢ່າງຈະແຈ້ງ ເຮັດໃຫ້ການຊີ້ນຳວຽກງານສະດວກ ແລະ ມີປະສິດທິພາບສູງ.
- ສຄອ ແຂວງ, ສະມາຄົມ, ກຸ່ມທຸລະກິດ, ສຄອ ຕ່າງປະເທດທີ່ຕັ້ງຢູ່ ສປປລາວ ແລະ ສະມາຊິກ ໃຫ້ການສະໜັບສະໜູນ ຢ່າງຫ້າວຫັນ.
- ພະນັກງານ ມີຄວາມຫ້າວຫັນ,ມີຄວາມກະຕືລືລົ້ນ ທີ່ຈະປະຕິບັດໜ້າທີ່ຕາມທີ່ໄດ້ໝອບໝາຍຈາກຄະນະບໍລິຫານງານ

## 3.2 ຂໍ້ຫຍຸ້ງຍາກ:

- ລະບົບໂຄງສ້າງຂອງອົງກອນຍັງບໍ່ສາມາດໃຫ້ການບໍລິການໄດ້ຢ່າງວ່ອງໄວ ເຮັດໃຫ້ບາງກິດຈະກຳບໍ່ໄດ້ຮັບການຈັດຕັ້ງປະຕິບັດ ຕາມພາລະບົດບາດ ແລະ ໜ້າທີ່.
- ຍັງບໍ່ທັນໄດ້ໃຫ້ ການບໍລິການ ໂດຍກົງແກ່ສະມາຊິກ, ການບໍລິການສ່ວນໃຫ່ຍ ເປັນພຽງແຕ່ການຝຶກອົບຮົມ, ສຳມະນາ ແລະ ສ່ວນໃຫ່ຍແມ່ນຢູ່ແຕ່ນະຄອນຫຼວງວຽງຈັນ.
- ອົງການຈັດຕັ້ງພາກລັດບາງພາກສ່ວນໂດຍສະເພາະແມ່ນຢູ່ຂັ້ນທ່ອງຖິ່ນ ຍັງບໍ່ທັນໄດ້ໃຫ້ການສະໜັບສະໜູນ ສຄອໃນແຕ່ລະຂັ້ນຢ່າງພຽງພໍ,
- ວຽກການບໍລິຫານ ແລະ ການບໍລິການ ຂອງສະມາຄົມ ແລະ ກຸ່ມທຸລະກິດ, ສຄອ ແຂວງບໍ່ທັນເປັນປົກກະຕິ ແລະ ຕໍ່ເນື່ອງ.
- ສຄອ ບໍ່ທັນມີລາຍຮັບທີ່ໝັ້ນຄົງ, ເຊິ່ງສົ່ງຜົນກະທົບຕໍ່ການດຳເນີນວຽກງານ.
- ການແຈ້ງຂໍ້ມູນຂ່າວສານ, ຂໍ້ມູນການຄ້າ ແລະການລົງທຶນ ໃຫ້ແກ່ສະມາຊິກບໍ່ກວ້າງຂວາງ ແລະບໍ່ຕໍ່ເນື່ອງ.
- ພະນັກງານປະຈຳຍັງມີຄວາມຈຳກັດທັງດ້ານ ປະລິມານ ແລະ ຄຸນນະພາບ

## 3.3 ບົດຮຽນທີ່ຖອດຖອນໄດ້

- ສຄອຊ ຄວນໄດ້ຮັບການຊ່ວຍເຫຼືອ ແລະ ການສະໜັບສະໜູນຈາກພາກລັດ ດ້ານນະໂຍບາຍ, ແຫຼ່ງທຶນ ແລະບຸລິມະສິດຕ່າງໆ ຈຶ່ງຈະສາມາດເຄື່ອນໄຫວວຽກງານໄດ້ຕາມເປົ້າໝາຍຫຼາຍຂຶ້ນ,

- ແຜນຍຸດທະສາດ ແລະ ນະໂຍບາຍ ຂອງ ສຄອຊ ຕ້ອງໄດ້ຮັບການປັບປຸງຢ່າງຕໍ່ເນື່ອງ, ເພື່ອໃຫ້ເໝາະສົມກັບ ພາລະບົດບາດທີ່ຫຼາຍຂຶ້ນ, ການຂະຫຍາຍຕົວຂອງເສດຖະກິດ ແລະ ການເຕົ້າໂຮມເອົາບັນດາຫົວໜ່ວຍທຸລະກິດ ໃນແຕ່ລະໄລຍະ.
- ພະນັກງານປະຈຳຈະຕ້ອງໄດ້ຮັບພັດທະນາວິຊາການສະເພາະກ່ຽວກັບວຽກງານ ສຄອ ຢ່າງຕໍ່ເນື່ອງເພື່ອຮອງຮັບ ການບໍລິການແກ່ ສະມາຊິກ, ສະມາຄົມ / ກຸ່ມ ແລະ ສຄອ ແຂວງ, ສຄອ ເມືອງ ທັງໄລຍະສັ້ນ ແລະ ໄລຍະຍາວ.
- ສຄອຊ ຕ້ອງຊອກແຫຼ່ງລາຍຮັບທີ່ແນ່ນອນເພື່ອສ້າງທ່າແຮງໃຫ້ແກ່ການເຄື່ອນໄຫວວຽກງານຂອງຕົນ
- ຍາດແຍ່ງເອົາການຊ່ວຍເຫຼືອ ແລະ ການຮ່ວມມືກັບຕ່າງປະເທດ, ອີງການຈັດຕັ້ງສາກົນຕ່າງໆ
- ສຄອ ແຫ່ງຊາດ ຕ້ອງລົງຊ່ວຍເຫຼືອ ແລະ ຊຸກຍູ້ຂະບວນການພັດທະນາ ສຄອ ແຂວງ, ສຄອ ເມືອງ, ສາມະຄົມ / ກຸ່ມ ຕ່າງໆໃຫ້ຫຼາຍຂຶ້ນ.

## 3.4 ຂໍ້ສະເໜີ

- ສະເໜີໃຫ້ລັດຖະບານສະໜັບສະໜູນການຈັດຕັ້ງປະຕິບັດດຳລັດ 237/ນຍ ໃຫ້ໄດ້ຮັບຜົນດີ.
- ຂໍໃຫ້ອຳນາດການປົກຄອງຢູ່ທ້ອງຖິ່ນຊຸກຍູ້ສົ່ງເສີມວຽກງານທຸລະກິດ ໃຫ້ມີຄວາມເຂັ້ມແຂງ ແລະ ຊ່ວຍໃຫ້ການຊີ້ນຳສະໜັບສະໜູນວຽກງານປັບປຸງ ສຄອ ແຂວງ, ສະມາຄົມ, ກຸ່ມ ທຸລະກິດທ້ອງຖິ່ນໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ.
- ສະເໜີໃຫ້ ລັດຖະບານ ໄດ້ພິຈາລະນາແກ້ໄຂ ບັນຫາຕ່າງໆທີ່ເປັນອຸປະສັກຕໍ່ການດຳເນີນທຸລະກິດ ທີ່ພາກທຸລະກິດຍົກຂຶ້ນ ນັບທັງສູນກາງ ແລະ ທ່ອງຖິ່ນໃຫ້ທັນກັບສະພາບການເພື່ອສາມາດດຶງດູດການລົງທຶນໃຫ້ຫຼາຍຂຶ້ນ.

# IV. ແຜນການເຄື່ອນໄຫວໃນຕໍ່ໜ້າ

## 4.1 ແຜນຍຸດທະສາດການພັດທະນາພາກທຸລະກິດປີ 2021-2025.

ເພື່ອເປັນທິດໃນການພັດທະນາພາກທຸລະກິດ ຫຼື ພາກເອກະຊົນຢູ່ໃນ ສປປ ລາວ, ສຄອຊ ໄດ້ສ້າງແຜນຍຸດທະສາດສໍາລັບຊຸມປີ 2021-2025 ຂຶ້ນໂດຍອີງໃສ່ ກ).ບັນດາວຽກງານ ແລະ ບົດຮຽນທີ່ໄດ້ປະຕິບັດ ແລະ ຖອດຖອນໄດ້ໃນໄລຍະຜ່ານມາ, ຂ). ສະພາບເສດຖະກິດມະຫາພາກຂອງ ສປປ ລາວ ໃນປັດຈຸບັນ, ຄ). ທິດຊີ້ນໍາແຜນພັດທະນາເສດຖະກິດສັງຄົມຄັ້ງທີ່ 9, 2021-2025 ຂອງລັດຖະບານ ແລະ ງ).ສະພາບການຜົນກະທົບ ແລະ ການຟື້ນຟູເສດ ຖະກິດ ຈາກການລະບາດຂອງພະຍາດ COVID-19.

ຍຸດທະສາດການພັດທະນາພາກທຸລະກິດສໍາລັບປີ 2021-2025 ແມ່ນຈັດຕັ້ງປະຕິບັດໜ້າທີ່ວຽກງານໃຫມ່ຂອງ ສຄອຊ ທີ່ໄດ້ຖືກມອບໝາຍຈາກລັດຖະບານໂດຍດໍາລັດເລກທີ່ 237/ນຍ ລົງວັນທີ18 ພຶດສະພາ 2020 ໃຫ້ປະກົດຜົນເປັນຈິງ.

ມູມມອງໃນອານາຄົດ (Vision) ຂອງ ສຄອຊ ແມ່ນ “ໃຫ້ ສປປ ລາວ ມີສະພາບແວດລ້ອມໃນການດໍາເນີນທຸລະກິດ ທີ່ເອື້ອອໍານວຍ ແລະ ທີ່ມີທັດຊະນະແຂ່ງຂັນທີ່ດີ ພ້ອມທັງມີພາກທຸລະກິດທີ່ເຂັ້ມແຂງ ທີ່ປະກອບສ່ວຍຢ່າງຫຼວງຫຼາຍຕໍ່ການຂະຫຍາຍຕົວຂອງເສດຖະກິດຂອງປະເທດແບບຍືນຍົງ”.

ພາລະກິດ (Mission) ຂອງ ສຄອຊ ແມ່ນ: “ ເສີມສ້າງຄວາມເຂັ້ມແຂງຂອງພາກທຸລະກິດໂດຍການພົບປະກັບລັດຖະບານ, ການບໍລິການໃຫ້ MSME/SME, ການພັດທະນາຜະລິດຕະພັນຜະລິດຕະພັນລາວ ແລະ ໂດຍການຊ່ວຍເຫຼືອທຸລະກິດລາວໃນການເຊື່ອມໂຍງກັບເສດຖະກິດພາກພື້ນໂດຍການລົງທຶນແບບຍືນຍົງ”.

ຜ່ານການວິເຄາະແວດລ້ອມ ແລະ ສະພາບເສດຖະກິດທີ່ກ່າວມາຂ້າງເທິງນີ້, ສຄອຊ ໄດ້ ກໍານົດ ແຜນຍຸດທະສາດທີ່ມີ 6 ເສົາຄໍ້າທີ່ເປັນບູລິມະສິດ ແລະ ມີວຽກງານທີ່ກ່ຽວພັນກັບຫຼາຍຂະແໜງການ ເພື່ອຮັບປະກັນລາຍຮັບດ້ານການເງິນໃຫ້ຍືນຍົງ ແລະ ເສີມສ້າງຄວາມສາມາດຂອງສະພາການຄ້າ ແລະ ອຸດສາຫະກໍາ ແຂວງ ແລະ ສາມະຄົມທຸລະກິດຕ່າງໆ.

ແຜນຍຸດທະສາດການພັດທະນາພາກທຸລະກິດປີ 2021-2025 ລວມມີ 6ເສົາຄໍ້າ ປະກອບດ້ວຍ:

1) **<u>ເສົາຄໍ້າທີ1:</u>** ການພົບປະລະຫວ່າງລັດ-ທຸລະກິດເພື່ອປັບປຸງແວດລ້ອມການດໍາເນີນທຸລະກິດປະກອບມີ: ການຈັດຕັ້ງປະຕິບັດກອງປະຊຸມລາວ (Lao Business Forum-LBF) ແລະ ເນື້ອໃນຂອງດໍາລັດເລກທີ່ 02/ນຍ ວ່າດ້ວຍການອໍານວຍຄວາມສະດວກໃຫ້ແກ່ທຸລະກິດ (Ease of Doing Business-EDB). ຢູ່ລະດັບສູນກາງ ແລະ ລະດັບແຂວງ.

- ການສ້າງຄວາມສາມາດໃຫ້ ສຄອຊ, ສຄອ ແຂວງ ແລະ ສະມາຄົມທຸລະກິດໃນການປະກອບຄໍາເຫັນຕໍ່ຮ່າງກົດໝາຍ ແລະ ນິຕິກໍາທີ່ກ່ຽວພັນກັບເສດຖະກິດ.
- ການສ້າງສູນໄກ່ເກ່ຍຂໍ້ຂັດແຍ້ງທຸລະກິດຢູ່ ສຄອຊ.

2). **<u>ເສົາຄໍ້າທີ່2</u>**: ການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ໂດຍຜ່ານສູນບໍລິການ SME(SSC).

- ເສີມສ້າງຄວາມສາມາດຂອງສູນບໍລິການ SME ທີ່ມີແລ້ວຢູ່ ສຄອຊ ແລະ ສ້າງສູນບໍລິການ SME ໃຫມ່ຢູ່ແຂວງ ແລະ ຢູ່ ສະມາຄົມທຸລະກິດທີ່ມີເງື່ອນໄຂ.
- ຈັດຕັ້ງ ແລະ ບໍລິການຝຶກອົບຮົມ ແລະ ສະຖານທີ່ເຮັດວຽກໃຫ້ SME.
- ຊ່ວຍເຫຼືອ SME ເຂົ້າຫາແຫຼ່ງທຶນ.
- ຈັດຕັ້ງ ແລະ ບໍລິການລະບົບເກັບກໍາຂໍ້ມູນໃຫ້ SME.

3). **<u>ເສົາຄໍ້າທີ່3:</u>** ການສົ່ງເສີມຕະຫຼາດຜະລິດຕະພັນລາວທີ່ປະກອບມີ.

- ການສົ່ງເສີມຕ່ອງໂສ້ການຜະລິດຂອງຜະລິດພັນລາວ
- ການສ້າງຄວາມສາມາດໃຫ້ຜູ້ປະກອບການໃນການເຂົ້າຮ່ວມງານວາງສະແດງພາຍໃນ ແລະ ຕ່າງປະເທດແບບມືອາຊີບ.
- ການສົ່ງເສີມການຊື້ຂາຍຜ່ານສື່ອອນລາຍ (e-commerce)
- ການຊ່ວຍຜູ້ປະກອບການໃນການຢັ້ງຢືນແຫຼ່ງກໍາເນີດຄຸນນະພາບຂອງຜະລິດຕະພັນ ແລະ ການໝາຍ Barcode

4). **<u>ເສົາຄໍ້າທີ່4:</u>** ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການສົ່ງເສີມການລົງທຶນທີ່ຍືນຍົງ ທີ່ປະກອບມີ:

- ການສົ່ງເສີມການເຊື່ອມໂຍງເສດຖະກິດພາກພື້ນອາຊຽນ, ລຸ່ມແມ່ນໍ້າຂອງ (GMS) ແລະ ອື່ນໆ
- ການພັດທະນາການຄ້າສາຍແດນ
- ການສົ່ງເສີມການລົງທຶນທີ່ມີຄຸນນະພາບ.

5). **<u>ເສົາຄໍ້າທີ່ 5:</u>** ການພັດທະນາຜູ້ປະກອບການ ແລະ ກິດຈະກໍາຜູ້ໃຊ້ແຮງງານທີ່ປະກອບມີ:

- ການເຂົ້າຮ່ວມວຽກງານ ເຈລະຈາ 3 ຝ່າຍດ້ານແຮງງານແບບມືອາຊີບ.
- ການສົ່ງເສີມວຽກງານອາຊີວະສຶກສາ ແລະ ການຮຽນແບບຄວບຄູ່ (TVET/DCT).
- ການປັບປຸງລະບົບຕະຫຼາດແຮງງານ.
- ການພັດທະນາຄວາມສາມາດຂອງຜູ້ປະກອບການ/ຜູ້ໃຊ້ແຮງງານ.

6). **<u>ເສົາຄໍ້າທີ່ 6:</u>** ຂໍ້ມູນຂ່າວສານ, ການພົວພັນມວນຊົນ ແລະ ການບໍລິການໃຫ້ສະມາຊິກທີ່ປະກອບດ້ວຍ:

- ການຊຸກຍູ້ຊ່ວຍເຫຼືອການຈັດຕັ້ງ ແລະ ການຄຸ້ມຄອງຂອງສະພາການຄ້າ ແລະ ອຸດສາຫະກໍາແຂວງ ແລະ ທ້ອງຖິ່ນ ແລະ ສະມາຄົມທຸລະກິດ.
- ການສ້າງ ແລະ ນໍາໃຊ້ລະບົບຂໍ້ສັງລວມ ແລະ ເຜີຍແຜ່ຂໍ້ມູນດ້ານທຸລະກິດ.

- ການພັດທະນາສື່ ເພື່ອເຜີຍແຜ່ຂໍ້ມູນ.
- ການພັດທະນາລະບົບເກັບກຳ ແລະ ສັງລວມເກັບຂໍ້ມູນ



## 4.2. ເສົາຄ້ຳຍຸດທະສາດ ແລະ ໂຄງຮ່າງການຈັດຕັ້ງໃໝ່

ຮູບພາບທີ1: 6ເສົາຄ້ຳຍຸດທະສາດແຜນການພັດທະນາຂອງ ສຄອຊ ໃນປີ 2021-2025



### 4.3. ແຜນລະອຽດເພື່ອປະຕິບັດຍຸດທະສາດພັດທະນາພາກທຸລະກິດໃນ ສປປ ລາວ2021-2023 (3ປີ).

#### 4.3.1. ການພັດທະນາການພົບປະລະຫວ່າງພາກລະລັດ-ພາກທຸລະກິດເພື່ອແວດລ້ອມທຸລະກິດທີ່ດີຂຶ້ນ.

ສະພາບແວດລ້ອມໃນການດຳເນີນທຸລະກິດໃນ ສປປ ລາວ ແມ່ນບໍ່ເອື້ອອຳນວຍຢ່າງທີ່ຄວນ. ຍັງມີຫຼາຍຂັ້ນຕອນ, ລະບຽບການໃນຫຼາຍລະດັບ. ທະນາຄານໂລກໄດ້ຈັດອັນດັບໃນການອຳນວຍຄວາມສະດວກໃຫ້ທຸລະກິດໃນ ສປປ ລາວ ເປັນທີ່ 154 ທຽບໃສ່ 190 ປະເທດ. ນອກຈາກນີ້ຍັງມີຫຼາຍດັດສະນີຫຼາຍດ້ານເສດຖະກິດທີ່ ສປປ ລາວ ແມ່ນຢູ່ໃນ ອັນດັບຕໍ່າສຸດ ແລະ ມີຄວາມຕ້ອງການໃຫ້ລັດຖະບານໄດ້ເອົາໃຈໃສ່ແກ້ໄຂ ແລະ ປັບປຸງ.

ສຄອຊ ໄດ້ຖືກມອບໝາຍໃຫ້ເປັນກອງເລຂາຂອງເວທີທຸລະກິດລາວ (LBF) ຮ່ວມກັບກະຊວງອຸດສາຫະກຳ ແລະ ການຄ້າແຕ່ປີ 2016 ເປັນຕົ້ນມາ ແລະ ໄດ້ດຳເນີນການພົບປະລະຫວ່າງພາກລັດ ແລະ ພາກທຸລະກິດ ຢ່າງເປັນລະບົບ ແລະ ໄດ້ແກ້ໄຂຫຼາຍບັນຫາທີ່ສະກັດກັ້ນການດຳເນີນທຸລະກິດຢູ່ ສປປ ລາວ. ຢ່າງໃດກໍ່ຕາມບັນຫາທີ່ຍັງຄົງຂ້າງແມ່ນຍັງມີຫຼາຍ ແລະ ອັນດັບໃນການອຳນວຍຄວາມສະດວກໃຫ້ທຸລະກິດແມ່ນຍັງຕໍ່າຫຼາຍ ສຳນັກງານນາຍົກລັດຖະມົນຕີກໍ່ໄດ້ອອກຄຳສັ່ງເລກທີ່ 02/ນຍ ລົງວັນທີ່ 1 ກຸມພາ 2018 ເພື່ອໃຫ້ອົງການຈັດຕັ້ງຂອງລັດຖະບານທີ່ກ່ຽວຂ້ອງໄດ້ເອົາໃຈໃສ່ແກ້ໄຂສິ່ງຂີດຂວາງຕ່າງໆໃນການດຳເນີນທຸລະກິດ. ມາເຖິງປັດຈຸບັນ ສຄອຊ ໄດ້ປະສານກັບກະຊວງແຜນການ ແລະ ການລົງທຶນ ເພື່ອມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຄຳສັ່ງເລກທີ່ 02/ນຍ ຮ່ວມກັບຝ່າຍລັດ, ກິດຈະກຳຂອງເວທີທຸລະກິດລາວ ແລະ ການຈັດຕັ້ງປະຕິບັດຄຳສັ່ງເລກທີ່ 02/ນຍ ຈະເປັນກິດຈະກຳຫຼັກຂອງເສົາຄ້ຳທີ່1. ນອກຈາກນັ້ນ, ເສົາຄ້ຳທີ1 ຂອງ ສຄອຊ ຍັງມີການປັບປຸງລະບຽບກົດໝາຍໃຫ້ແທດເໝາະ ໂດຍການປະກອບຄຳເຫັນຕໍ່ຮ່າງກົດໝາຍ ແລະ ນິຕິກຳຕ່າງໆທີ່ຮ່າງຈາກຝ່າຍລັດຖະບານ, ການເອື້ອອຳນວຍໃຫ້ແກ່ແວດລ້ອມທຸລະກິດຍັງມີວຽກງານການໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງທຸລະກິດທີ່ເໝາະສົມ ແລະ ຖືກຕ້ອງກົດຈະການດັ່ງກ່າວແມ່ນຈະຢູ່ໃນເສົາຄ້ຳທີ່1ນີ້.

ເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍ ການພັດທະນາການພົບປະລະຫວ່າງພາກລະລັດ-ພາກທຸລະກິດເພື່ອແວດລ້ອມທຸລະກິດທີ່ດີຂຶ້ນ ເຊິ່ງລວມມີ 3 ຈຸດປະສົງດັ່ງລຸ່ມນີ້:

1). ເພື່ອຮັບປະກັນໃຫ້ມີລະບົບ ແລະ ກົນໄກການພົບປະລະຫວ່າງພາກລັດ ແລະ ພາກທຸລະກິດທີ່ມີປະສິດທິຜົນໃນລະດັບສູນກາງ ແລະ ທ້ອງຖິ່ນ ໂດຍມີສ່ວນຮ່ວມຂອງທຸກໆພາກສ່ວນ ແລະ ກຸ່ມເປົ້າໝາຍທີ່ກ່ຽວຂ້ອງ.

2). ເພື່ອຮັບປະກັນໃຫ້ ສຄອຊ, ສຄອ ແຂວງ ແລະ ສະມາຄົມທຸລະກິດມີຄວາມສາມາດ ແລະ ມີກົນໄກໃນການປະກອບຄຳເຫັນຕໍ່ຮ່າງນິຕິກຳຕ່າງໆພ້ອມທັງໃຫ້ຄຳແນະນຳຕໍ່ມະຫາພາກ.

3). ເພື່ອຮັບປະກັນໃຫ້ມີລະບົບ ແລະ ກົນໄກການແກ້ໄຂຂໍ້ຂັດແຍ້ງຂອງທຸລະກິດຢູ່ ສຄອຊ ທີ່ມີປະສິດທິຜົນ.

ຕາຕາລາງທີ1: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກໍາໃນການພັດທະນາການພົບປະລະຫວ່າງພາກລະລັດ-ພາກທຸລະກິດເພື່ອແວດລ້ອມທຸລະກິດທີ່ດີຂຶ້ນ.

| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກໍາ |
|---|---|---|---|
| 1 | ເພື່ອຮັບປະກັນໃຫ້ມີລະບົບ ແລະ ກົນໄກການພົບປະລະຫວ່າງພາກລັດ ແລະ ພາກທຸລະກິດທີ່ມີປະສິດທິຜົນໃນລະດັບສູນກາງ ແລະ ທ້ອງຖິ່ນ ໂດຍມີສ່ວນຮ່ວມຂອງທຸກໆພາກສ່ວນ ແລະ ກຸ່ມເປົ້າໝາຍທີ່ກ່ຽວຂ້ອງ. | a) ສະພາການຄ້າ ແລະ ອຸດສາຫະກໍາແຂວງ 10 ແຫ່ງ ລວມເຖິງບໍລິສັດທີ່ກ່ຽວຂ້ອງຈໍານວນໜຶ່ງໄດ້ຮັບການຝຶກອົບຮົມກ່ຽວກັບວຽກກ່ຽວກັບການຍົກບັນຫາເຖິງກອງປະຊຸມທຸລະກິດລາວ;70% ຂອງບັນຫາທີ່ໄດ້ຮັບບູລິມະສິດທີ່ຍົກຂຶ້ນໃນກອງປະຊຸມທຸລະກິດລາວແມ່ນໄດ້ຮັບການແກ້ໄຂ;.<br>b) ມີການເກັບກໍາ ແລະ ລາຍງານຂໍ້ມູນກ່ຽວກັບກອງປະຊຸມສົນທະນາພາກລັດ ແລະ ເອກະຊົນຂັ້ນແຂວງ ທຸກແຂວງເປັນປະຈໍາທຸກປີ ແລະ ການຍ້ອງຍໍສໍາລັບການ ສໍາຫລວດການສ້າງສິ່ງອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ແມ່ນມອບໃຫ້ບັນດາແຂວງທີ່ດີທີ່ສຸດ;<br>c) ຕົວຊີ້ວັດຄວາມງ່າຍໃນການດໍາເນີນທຸລະກິດຂອງທະນາຄານໂລກສໍາລັບປະເທດລາວແມ່ນຢູ່ໃນສອງຕົວເລກໃນປີ 2025. | i. ຝຶກອົບຮົມວຽກໃຫ້ແກ່ ສຄອ ແຂວງ, ມີຫົວໜ້າຜູ້ນໍາສະເໜີບັນຫາ ແລະ ຜູ້ຕາງໜ້າບໍລິສັດເພື່ອກະກຽມ ແລະ ນໍາສະ   ເໜີຂໍ້ສະເໜີທີ່ອີງໃສ່ຂໍ້ເທັດຈິງສໍາລັບກອງປະຊຸມທຸລະກິດລາວ;<br>ii. ກອງປະຊຸມປຶກສາຫາລື ແລະ ກອງປະຊຸມທຸລະກິດລາວແມ່ນຈັດຂຶ້ນທຸກໆປີ;<br>iii. ຕິດຕາມກົນໄກກ່ຽວກັບການແກ້ໄຂບັນຫາຂອງກອປະຊຸມທຸລະກິດລາວທີ່ມີຢູ່ໃນປະຈຸບັນ ແລະ ບັນຫາທີ່ຍັງບໍ່ທັນໄດ້ຮັບການແກ້ໄຂແມ່ນຈະໄດ້ຖືກລາຍງານເປັນປະຈໍາໄຕມາດຕໍ່ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ;<br>iv. ການຈັດຕັ້ງປະຕິບັດ ແລະ ການພິມເຜີຍແຜ່ ProFIT ປະຈໍາປີ;<br>v. ການຍ້ອງຍໍສໍາລັບການ ສໍາຫລວດການສ້າງສິ່ງອໍານວຍຄວາມສະດວກທາງດ້ານການຄ້າ ແລະ ການລົງທຶນຂັ້ນແຂວງ (ProFIT) ແມ່ນໄດ້ຖືກມອບໃຫ້ທຸກໆປີ ພ້ອມການກັບງານມອບລາງວັນຂອງ ສຄອຊ;<br>vi. ການປັບການຈັດຕັ້ງກອງເລຂາກອງປະຊຸມທຸລະກິດລາວເພື່ອປະສານງານກິດຈະກໍາຂອງກອງປະຊຸມທຸລະກິດລາວ ແລະຄະນະສະເພາະກິດ EoDB; |

| | | | |
|---|---|---|---|
| | | | vii. ຄະນະສະເພາະກິດ EoDB ປະເມີນສະຖານະການໃນແຕ່ລະຕົວຊີ້ວັດ, ວາງແຜນປັບປຸງ, ຈັດຕັ້ງປະຕິບັດ ແລະ ລາຍງານເປັນປະຈຳໄຕມາດຕໍ່ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, |
| 2 | ເພື່ອຮັບປະກັນໃຫ້ ສຄອຊ, ສຄອ ແຂວງ ແລະ ສະມາຄົມທຸລະກິດມີຄວາມສາມາດ ແລະ ມີກົນໄກໃນການປະກອບຄຳເຫັນຕໍ່ຮ່າງນິຕິກຳຕ່າງໆພ້ອມທັງໃຫ້ຄຳແນະນຳຕໍ່ມະຫາພາກ. | a) ສຄອຊ ສາມາດທົບທວນຄືນບັນດານິຕິກຳທີ່ກ່ຽວຂ້ອງກັບເສດຖະກິດທີ່ມີຢູ່ ແລະ ທີ່ກຳລັງຈະເກີດຂຶ້ນທັງຫມົດ, ໃຫ້ ຄຳແນະນຳທີ່ມີຄຸນນະພາບສູງ ແລະຢ່າງ ໜ້ອຍ 60% ຂອງຄຳແນະນຳຖືກປະຕິບັດ;<br>b) ການຈັດກຸ່ມຜູ້ຊ່ຽວຊານຕາມປະເດັນ (ກຸ່ມຜູ້ຊ່ຽວຊານຄັງຄວາມຄິດ) ຖືກສ້າງຂຶ້ນ ແລະ ສ້າງເອກະສານແນະນຳ ກ່ຽວກັບບັນຫາຮີບດ່ວນ ແລະ ນຶ່ງບັນຫາຕໍ່ປີ ກ່ຽວກັບບັນຫາໄລຍະຍາວທີ່ກະທົບຕໍ່ພາກເອກະຊົນ;<br>c) ການປະເມີນຜົນກະທົບຂອງການໝົດອາຍຸສິດທິພິເສດການເຂົ້າຕະຫລາດ (ເຊັ່ນ: ສະຫະພາບເອີຣົບ, ອາເມລິກາ) ກ່ຽວກັບການຄ້າ ແລະ ການລົງທຶນໄດ້ສຳເລັດໃນທ້າຍປີ 2021;<br>d) ຄຳແນະນຳສຳລັບການເຈລະຈາກັບບັນດາຄູ່ຄ້າລາຍໃຫຍ່ໃນອະນາຄົດ ໄດ້ຖືກມອບໃຫ້ລັດຖະບານໃນຕົ້ນປີ 2022. | i. ສ້າງກົນໄກໃນການເກັບກຳຂໍ້ມູນກ່ຽວກັບນິຕິກຳທີ່ກຳລັງຈະເກີດຂຶ້ນ;<br>ii. ຂະຫຍາຍເຄືອຄ່າຍທີ່ປຶກສາດ້ານກົດໝາຍເສດຖະກິດ;<br>iii. ສ້າງຄຳແນະນຳກ່ຽວກັບນິຕິກຳທີ່ກຳລັງຈະເກີດຂຶ້ນ ແລະ ກອງປະຊຸມກັບພາກລັດຖະບານ;<br>iv. ກຸ່ມຜູ້ຊ່ຽວຊານ ສຄອຊ (ຄັງຄວາມຄິດ)) ໄດ້ຖືກສ້າງຕັ້ງຂຶ້ນພາຍໃຕ້ກອງປະຊຸມທຸລະກິດລາວ ແລະ ສ້າງເອກະສານແນະນຳກ່ຽວກັບບັນຫາເສດຖະກິດທີ່ຮີບດ່ວນທີ່ເກີດຂຶ້ນ;<br>v. ສ້າງຂໍ້ສະເໜີສຳລັບຍຸດທະສາດການຫຼຸດຜ່ອນການສູນເສຍສິດທິທີ່ກ່ຽວຂ້ອງກັບສະຖານະພາບປະເທດດ້ອຍພັດທະນາ ແລະ ບັນຫາທີ່ອາດຈະເກີດຂຶ້ນຕື່ມ;<br>vi. ວິເຄາະການພັດທະນາການຄ້າ ແລະ ປະລິມານການຄ້າທີ່ໄດ້ຮັບຜົນກະທົບໃນຜະລິດຕະພັນຕ່າງໆ. |
| 3 | ເພື່ອຮັບປະກັນໃຫ້ມີລະບົບ ແລະ ກົນໄກການແກ້ໄຂຂໍ້ຂັດແຍ້ງຂອງທຸລະກິດຢູ່ ສຄອຊ ທີ່ມີປະສິດທິຜົນ. | a) ສູນໄກ່ເກ່ຍກ່ຽວກັບຂໍ້ຂັດແຍ່ງດ້ານການລົງທຶນຖືກສ້າງຕັ້ງຂຶ້ນໂດຍການຮ່ວມມືກັບສະພາທະນາຍຄວາມຂອງລາວ ແລະ ດຳເນີນງານຢູ່ໃນ ສຄອຊ; | i. ມີຂໍ້ຕົກລົງຮ່ວມກັບສະມາຄົມທະນາຍຄວາມລາວເພື່ອຮ່ວມກັນປະຕິບັດງານສູນໄກ່ເກ່ຍ ແລະ ຕັດສິນໃນ ສຄອຊ;<br>ii. ສ້າງໜ່ວຍໄກ່ເກ່ຍ ແລະ ຕັດສິນໂດຍມີກອງເລຂາ; |

| | | | |
|---|---|---|---|
| | | b) ກົນໄກການຕັດສິນ ແລະ ການໄກ່ເກ່ຍສາກົນຖືກສ້າງຕັ້ງຂຶ້ນ ແລະ ດຳເນີນງານຢູ່ໃນ ສຄອຊ (ບັນຫາທີ່ກ່ຽວຂ້ອງກັບການຄ້າສາກົນ: INCOTERMS, ສົນທິສັນຍາ ICC). | iii. ການໂຄສະນາສົ່ງເສີມໜ່ວຍງານການໄກ່ເກ່ຍ ແລະ ຕັດສິນ<br>iv. ຮ່ວມມືກັບສູນໄກ່ເກ່ຍ ແລະ ຕັດສິນໃນພາກພື້ນ (ອາຊຽນ +)<br>v. ກອງປະຊຸມ / ສຳມະນາກ່ຽວກັບກົນໄກການແກ້ໄຂຂໍ້ຂັດແຍ່ງລະຫວ່າງປະເທດແລະພາຍໃນປະເທດ |

### 4.3.2. ການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ແລະ ສູນບໍລິການ (SSC).

ທຸລະກິດຂະໜາດນ້ອຍ ແລະ ກາງ (SME) ແມ່ນກວມເອົາ 99% ຂອງຈຳນວນທຸລະກິດທີ່ຈົດທະບຽນ ແລະ ໄດ້ກວມເອົາ 82% ຂອງຈຳນວນແຮງງານຢູ່ ສປປ ລາວ. SME ຈຶ່ງມີຄວາມສຳຄັນຫຼາຍຕໍ່ຊີວິດການເປັນຢູ່ຂອງປະຊາຊົນລາວ, ເຖິງຢ່າງໃດກໍ່ຕາມ SME ຢູ່ ສປປ ລາວ ແມ່ນປະກອບພຽງແຕ່ 20% ຂອງ GDP ເປັນອັດຕາຕໍ່າສຸດຢູ່ໃນພາກພື້ນ.

ທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງແມ່ນມີບັນຫາ ແລະ ຂໍ້ຫຍຸ້ງຍາກໃນການດຳເນີນທຸລະກິດຢ່າງເປັນທາງການ ເຂົາເຈົ້າເຄື່ອນໄຫວນອກລະບົບ ຫຼື ເຄິ່ງໃນລະບົບ ໂດຍບໍ່ມີການຈົດລະບຽນຖືກຕ້ອງ, ບໍ່ມີການບັນຊີ ແລະ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ ແລະ ວັນນະກຳໃໝ່ ໂດຍສະເພາະໃນຍຸກສະໄໝອຸດສາຫະກຳ 4.0.

ໃນປັດຈະບັນການສົ່ງເສີມ SME ຈາກອົງກອນຕ່າງໆແມ່ນມີຈຳກັດ ຫຼື ເກືອບບໍ່ມີເລີຍ, ລະບົບການສົ່ງເສີມທີ່ມີຢູ່ແມ່ນເນັ້ນໃສ່ການຫຼຸດພົ້ນຈາກຄວາມທຸກຍາກດ້ວຍການຄຸ້ມຄອງດ້ານສະບຽງອາຫານ ແຕ່ຍັງບໍ່ໄດ້ສົ່ງເສີມການຜະລິດຊຸມຊົນໃຫ້ໄປຕາມກົນໄກຕະຫຼາດຢ່າງແທ້ຈິງ.

ຍຸດທະສາດການພັດທະນາ SME 2016-2020 ຂອງລັດຖະບານໄດ້ວາງກອບໃນການພັດທະນາ ແລະ ໄດ້ມອບໝາຍໜ້າທີ່ໃຫ້ ສຄອຊ ແລະ ສະມາຄົມທຸລະກິດໃນການຊຸກຍູ້ຊ່ວຍເຫຼືອ ແລະ ສົ່ງເສີມ SME ຢູ່ ສປປ ລາວ. ເພື່ອຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ສຄອຊ ໄດ້ກຳນົດ ເສົາຄ້ຳທີ 2 ໃນການພັດທະນາປັບປຸງ ແລະ ຊຸກຍູ້ຊ່ວຍເຫຼືອ SME ໂດຍຜ່ານສູນ ບໍລິການ SME(SSC) ທີ່ຈະສະໜອງການຝຶກອົບຮົມສະເພາະ, ການຊ່ວຍເຫຼືອໃຫ້ເຂົ້າເຖິງແຫຼ່ງທຶນ ແລະ ການປະກອບຂໍ້ມູນຂ່າວສານໃຫ້ເຂົ້າເຈົ້າສາມາດປັບປຸງທຸລະກິດຂອງເຂົາເຈົ້າ.

ສຄອຊ ມີແຜນຈະປັບປຸງສູນ SME ທີ່ມີຢູ່ ນະຄອນຫຼວງວຽງຈັນ, ຫຼວງພະບາງ ແລະ ຈຳປາສັກ ແລະ ຈະສ້າງສູນ SSC ໃໝ່ໃນບັນດາແຂວງ ທີ່ມີເງື່ອນໄຂ ເພື່ອສາມາດບັນລຸວຽກງານນີ້ ສຄອຊ ໄດ້ວາງຈຸດປະສົງເປົ້າໝາຍດັ່ງລຸ່ມນີ້:

1). ພັດທະນາຄວາມສາມາດ ແລະ ສະຖານທີ່ຂອງສູນ SSC, ຊ່ວຍເຫຼືອການລິເລີ່ມສ້າງວິສາຫະກິດ (Start up), ນາວັດຕະກຳໃຫມ່ ແລະ ຂະຫຍາຍໂຄງສ້າງການຊ່ວຍເຫຼືອໃຫ້ແກ່ SME.

2). ສູນ SSC ໄດ້ສະໜອງການຝຶກອົບຮົມທີ່ຈຳເປັນຢ່າງເປັນປະຈຳ.

3). ສຄອຊ ໄດ້ມີລະບົບ ແລະ ກົນໄກຊ່ວຍເຫຼືອ SME ໃຫ້ເຂົ້າເຖິງແຫຼ່ງທຶນ.

4). ສູນ SSC ໄດ້ມີແຫຼ່ງຂໍ້ມູນຂ່າວສານທີ່ຖືກນໍາໃຊ້ ແລະ ເປັນທີ່ນິຍົມຈາກ SME.

| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກຳ |
|---|---|---|---|
| 1 | ພັດທະນາຄວາມສາມາດ ແລະ ສະຖານທີ່ຂອງສູນ SSC, ຊ່ວຍເຫຼືອການລິເລີ່ມສ້າງວິສາຫະກິດ (Start up), ນາວັດຕະກຳໃໝ່ ແລະ ຂະຫຍາຍໂຄງສ້າງການຊ່ວຍເຫຼືອໃຫ້ແກ່ SME. | a) ສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ ດຳເນີນງານ ແລະ ໃຫ້ບໍລິການຢູ່ 6 ແຂວງ (ສຄອຊ, ຫຼວງພະບາງ, ຈຳປາສັກ, ແຂວງວຽງຈັນ, ສະຫວັນນະເຂດ, ຫຼວງນ້ຳທາ);<br>b) ສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ ດຳເນີນງານ ແລະ ໃຫ້ບໍລິການໃນ 4 ສະມາຄົມທຸລະກິດ;<br>c) ທຸລະກິດລິເລີ່ມ ແລະ ການໃຫ້ບໍລິການກໍ່ສ້າງຜູ້ປະກອບການ (incubation) (ເຄືອຂ່າຍການໃຫ້ຄຳປຶກສາ, ການເຂົ້າຫາແຫລ່ງທຶນ, ການເຂົ້າເຖິງຕະຫຼາດ, ການຝຶກອົບຮົມດ້ານການບໍລິຫານ ແລະອື່ນໆ) ໄດ້ຖືກສ້າງຕັ້ງຂຶ້ນ ແລະ ນຳໃຊ້ໂດຍ 50 ບໍລິສັດຕໍ່ປີ;<br>d) ຢ່າງ ໜ້ອຍ 70% ຂອງ SME ທີ່ໄດ້ຮັບການບໍລິການຈາກ ສບວ ແລະ ຄີຣນິກ SME ເພິ່ງພໍໃຈກັບການບໍລິການທີ່ໄດ້ຮັບ;<br>e) ພື້ນທີ່ເຮັດວຽກຮ່ວມກັນ (co-working space)ທີ່ ສຄອຊ ແມ່ນຖືກນຳໃຊ້ໂດຍສະເລ່ຍ 20 ບໍລິສັດຕໍ່ປີ,<br>f) 50 SME ໄດ້ນຳສະເໜີນະວັດຕະກຳເຂົ້າໃນທຸລະກິດຂອງພວກເຂົາ;<br>g) ປະຕູການຄ້າອາຊຽນ-SME ຖືກສ້າງຕັ້ງຂຶ້ນ ແລະ ດຳເນີນງານ. | i. ສ້າງຕັ້ງຄລີນິກ SME ເພື່ອໃຫ້ບໍລິການໃຫ້ຄຳປຶກສາເປັນປົກກະຕິແກ່ SME;<br>ii. ກະກຽມ ແລະ ສ້າງຂີດຄວາມສາມາດໃຫ້ 6 ສະພາການຄ້າ ແລະ ອຸດສາຫະກຳແຂວງໃນການສ້າງຕັ້ງ ສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (ສບວ) ຕາມມາດຖານເງື່ອນໄຂຂອງ ສຄອຊ;<br>iii. ກະກຽມ ແລະ ສ້າງຂີດຄວາມສາມາດໃຫ້ 4-5 ສະມາຄົມທຸລະກິດ ໃນຂະແໜງກະສິກຳ, ອຸດສາຫະກຳປຸງແຕ່ງ, ການຂົນສົ່ງ ແລະການຂົນສົ່ງ, ການຕ້ອນຮັບ, ການຄ້າ ເພື່ອຕັ້ງ ສູນບໍລິການວິສາຫະກິດຂະໜາດນ້ອຍ ແລະ ກາງ (ສບວ) ຕາມມາດຖານເງື່ອນໄຂຂອງ ສຄອຊ;<br>iv. ພັດທະນາແມ່ແບບ ຫລື ພິມສີຟ້າ ສຳລັບອີງການຈັດຕັ້ງພ້ອມທັງການຝຶກອົບຮົມ, ສຳມະນາ ແລະກິດຈະກຳອື່ນໆໃນລະບົບຂອງ ສບວ ແລະ ເຜີຍແຜ່ໃຫ້ ສຄອ ແຂວງ ແລະ ສະມາຄົມທຸລະກິດ, ສບວ;<br>v. ຈັດຕັ້ງປະຕິບັດກິດຈະກຳທົດລອງໃນແຂວງ , ສະມາຄົມທຸລະກິດ ແລະ ສບວ ເພື່ອສ້າງແຫຼ່ງທຶນ,ຢ່າງໜ້ອຍພະນັກງານ ໜຶ່ງຄົນ ແລະ ເລີ່ມຕົ້ນດຳເນີນກິດຈະກຳ;<br>vi. ລາຍງານປະຈຳປີຂອງ ສບວ ໃຫ້ແກ່ ສຄອຊ; ຕິດຕາມໂດຍ ສຄອຊ;<br>vi. ການພັດທະນາແນວຄວາມຄິດໃນການສ້າງລະບົບ incubation eco-system ໃນລາວ ແລະການການເກັບພື້ນຖານໂຄງລ່າງທີ່ມີຢູ່ພ້ອມ |

| | | | |
|---|---|---|---|
| | | | ທັງຄວາມເປັນໄປໄດ້ໃນການຮ່ວມມື, ການພັດທະນາໂຄງການໃຫ້ຄໍາປຶກສາ;<br>viii. ສ້າງຕັ້ງສູນທຸລະກິດລິເລີ້ມ ແລະ ສູນກໍ່ສ້າງຜູ້ປະກອບການ/ ການບໍລິການ ໂດຍອາດຮ່ວມກັບຄູ່ຮ່ວມງານພາຍນອກ<br>ix. ດໍາເນີນການຝຶກອົບຮົມກ່ຽວກັບການແນະນໍາ ແລະ ການຄຸ້ມຄອງບໍລິຫານນະວັດຕະກໍາ;<br>x. ການພັດທະນາ ແລະ ການຈັດຕັ້ງປະຕິບັດໂຄງການ SME (ເຊັ່ນ: plastic free, smart farms, gender or youth related projects);<br>xi. ພັດທະນາ ແລະ ຈັດຕັ້ງປະຕິບັດລາງວັນ SME;<br>xii. ມີພື້ນທີ່ເຮັດວຽກຮ່ວມກັນ (co-working space) ໃຫ້ບໍລິການ ແລະ ມີການພັດທະນາວິທີການໃຊ້ງານ;<br>xiii. ຜະລິດສື່ການໂຄສະນາ ແລະ ກິດຈະກໍາສົ່ງເສີມ (ເຊັ່ນ: ໜັງ ສືພິມຂ່າວສານ, ການຮັກສາເວບໄຊທ໌); |
| 2 | ສູນ SSC ໄດ້ສະໜອງການຝຶກອົບຮົມທີ່ຈໍາເປັນຢ່າງເປັນປະຈໍາ. | ກ) ຫລາຍກວ່າ 1,000 ບໍລິສັດໄດ້ຜ່ານການຝຶກອົບຮົມ, ການສໍາມະນາ ແລະອື່ນໆ;<br>b) ຢ່າງໜ້ອຍ 70% ຂອງຜູ້ເຂົ້າຮ່ວມການຝຶກອົບຮົມ, ການສໍາມະນາ ແລະອື່ນໆ ສະແດງໃຫ້ເຫັນວ່າມີຄວາມເພິ່ງພໍໃຈກັບການບໍລິການທີ່ໄດ້ຮັບ. | i. ສະໜອງການຝຶກອົບຮົມໃຫ້ແກ່ SME ໃນຂະແໜງ ການຕ່າງໆ (ເຊັ່ນ: ການບໍລິຫານຄຸ້ມຄອງ, ການບັນຊີແລະອື່ນໆ);<br>ii. ກິດຈະກໍາການສົ່ງເສີມສໍາລັບ SME, ເຊັ່ນ: ການໂອ້ລົມທຸລະກິດຂອງ ສບວ, ວັນຜູ້ປະກອບການ;<br>iii. ສະໜັບສະໜູນ digitalisation ຂອງບໍລິສັດຕ່າງໆ. |

| | | | |
|---|---|---|---|
| 3 | ສຄອຊ ໄດ້ມີລະບົບ ແລະ ກົນໄກຊ່ວຍເຫຼືອ SME ໃຫ້ເຂົ້າເຖິງແຫຼ່ງທຶນ. | ການເຂົ້າເຖິງແຫລ່ງທຶນທີ່ມີບັນຫາເລື້ອຍໆ - ດ້ວຍວິທີການທີ່ຫຼາກຫຼາຍ: ອໍານວຍຄວາມສະດວກໃຫ້ SME ໃນການເຂົ້າເຖິງໂຄງການເງິນກູ້ ທີ່ດໍາເນີນງານໂດຍທະນາຄານໂດຍການຮ່ວມມືກັບທະນາຄານ ແລະ ໂດຍຜ່ານຄູຝຶກຈາກພາຍນອກ ໂດຍສະໜອງການຝຶກອົບຮົມຄວາມຮູ້ດ້ານການເງິນໃຫ້ແກ່ SME ແລະ ຈະດໍາເນີນກອງທຶນນາງຟ້າ ຂອງຕົນເອງເພື່ອປ່ອຍເງິນກູ້ຂະໜາດນ້ອຍໂດຍກົງ. ເນື່ອງຈາກວ່າເງິນກູ້ໃນສປປລາວປົກກະຕິແລ້ວຕ້ອງໃຊ້ຊັບສິນຄໍ້າປະກັນໃນຮູບແບບອະສັງຫາລິມະສັບ ຊຶ່ງອາດບໍ່ສະດວກໃຫ້ກັບ SME ສະເຫມີໄປ ຈຶ່ງມີແຜນຈັດໂຄງການຂອງຕົນເພື່ອສະໜອງເງິນກູ້ທີ່ບໍ່ມີຊັບສິນຄໍ້າປະກັນ.<br>a) ຢ່າງ ໜ້ອຍ 100 SME ທີ່ໄດ້ຮັບປຶກສາ ຈາກບົດລາຍງານຂອງ ສບວ ໄດ້ເຂົ້າເຖິງແຫລ່ງທຶນປະສົບຜົນສໍາເລັດໃນປີ 2025;<br>b) ກອງທຶນນາງຟ້າແມ່ນດໍາເນີນງານໂດຍ ສຄອຊ ແລະ ສະໜອງທຶນໃຫ້ແກ່ 50 ບໍລິສັດ;<br>c) ສ້າງຕັ້ງກົນໄກເພື່ອສະໜອງເງິນກູ້ທີ່ບໍ່ແມ່ນຊັບສິນຄໍ້າປະກັນໃຫ້ແກ່ SME. | i. ສ້າງແຜນການ / ໂຄງສ້າງການດໍາເນີນງານກອງທຶນ SME;<br>ii. ສ້າງຕັ້ງເຄືອຂ່າຍຂອງທະນາຄານທີ່ເຂົ້າຮ່ວມໂຄງການໃຫ້ກູ້;<br>iii. ສ້າງເຄືອຂ່າຍຜູ້ໃຫ້ບໍລິການດ້ານການພັດທະນາທຸລະກິດ (BDS) ແລະຄູຝຶກເພື່ອສະໜັບສະໜູນບໍລິສັດໃຫ້ເຂົ້າເຖິງກອງທຶນ SME;<br>iv. ການຝຶກອົບຮົມ ແລະ ການຝຶກສອນຂອງບໍລິສັດ (ລວມທັງການຍັ່ງຢືນ) ສໍາລັບການເຂົ້າເຖິງກອງທຶນ SME;<br>v. ປະຕິບັດງານກອງທຶນນາງຟ້າ ແລະໄດ້ຮັບລູກຄ້າ;<br>vi. ສ້າງລະບຽບການຄໍ້າປະກັນເງິນກູ້ MSME;<br>vii. ລົງທະບຽນ ສຄອຊ ເພື່ອເປັນຫລັກປະກັນເງິນກູ້. |
| 4 | ສູນ SSC ໄດ້ມີແຫຼ່ງຂໍ້ມູນຂ່າວສານທີ່ຖືກນໍາໃຊ້ ແລະ ເປັນທີ່ນິຍົມຈາກ SME. | a) ຖານຂໍ້ມູນຂ່າວສານຖືກສ້າງຕັ້ງຂຶ້ນ ແລະ ປັບປຸງເປັນປະຈໍາ,<br>b) ມີການມອບລາງວັນ SME ເປັນປະຈໍາທຸກປີ;<br>c) ໂຄງການທົດລອງຂະໜາດນ້ອຍທີ່ສາມາດປັບຂະໜາດ ແລະ ທົດລອງໄດ້ສໍາເລັດຜົນ. | i. ພັດທະນາແນວຄວາມຄິດສໍາລັບຖານຂໍ້ມູນ SME, ຈັດຕັ້ງປະຕິບັດ ແລະ ປັບປຸງຢູ່ສະເໝີ;<br>ii. ພັດທະນາຄູ່ມືໃນການໃຫ້ລາງວັນ SME ແລະ ບໍລິສັດທີ່ໄດ້ຮັບລາງວັນເປັນປະຈໍາທຸກປີ;<br>iii. ກໍານົດແນວຄວາມຄິດ, ພັດທະນາ ແລະຈັດຕັ້ງປະຕິບັດໂຄງການທົດລອງທີ່ສາມາດປັບຂະໜາດ ແລະ ສາມາດເຮັດຄືນໄດ້. |

ຕາຕາລາງທີ 2: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກໍາໃນການພັດທະນາສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ (SME) ແລະ ສູນບໍລິການ (SSC)

**4.3.3. ການສົ່ງເສີມ ແລະ ການຕະຫຼາດຂອງຜະລິດຕະພັນລາວ.**

ຜະລິດຕະພັນລາວໂດຍສະເພາະກຸ່ມທີ່ນຳໃຊ້ວັດຖຸດິບກະສິກຳປ່າໄມ້ແມ່ນມີຄວາມຫຍຸ້ງຍາກໃນການເຂົ້າຫາຕະຫຼາດພາຍໃນ ແລະ ຕ່າງປະເທດ. ເປົ້າໝາຍຂອງເສົາຄ້ຳທີ 3 ແມ່ນການປັບປຸງລະບົບການສົ່ງເສີມການຕະຫຼາດຂອງຜະລິດຕະພັນລາວຕາມລະບົບສົ່ງເສີມຕ່ອງໂສ້ການຜະລິດ ແລະ ການຈຳໜ່າຍຄົບວົງຈອນ.

ສຄອຊ ຈະສ້າງສູນບໍລິການສົ່ງເສີມຕະຫຼາດຜະລິດຕະພັນລາວເພື່ອຊຸກຍູ້ຊ່ວຍເຫຼືອໃຫ້ຜະລິດຕະພັນທີ່ເປັນແຫຼມ ແລະ ມີເງື່ອນໄຂພັດທະນາເຂົ້າສູ່ຕະຫຼາດທັງພາຍໃນ ແລະ ຕ່າງປະເທດ. ສູນບໍລິການສົ່ງເສີມຕະຫຼາດຈະໄດ້ຄັດເລືອກເອົາກຸ່ມຜະລິດຕະພັນທີ່ເປັນແຊມປຽນ, ທຳການວິເຄາະສະພາບການຜະລິດ ແລະ ຈໍລະຈອນຈຳໜ່າຍຕາມຕ່ອງໂສ້ການຜະລິດຂອງແຕ່ລະຜະລິດຕະພັນ, ເຝິກອົບຮົມຜູ້ຜະລິດ ແລະ ຜູ້ຈຳໜ່າຍ, ຢັ້ງຢືນຄຸນະພາບແຫຼ່ງກຳເນີດສິນຄ້າ ແລະ ອື່ນໆຕາມຄວາມຕ້ອງການຂອງຕະຫຼາດ ແລ້ວສ້າງຍີ່ຫໍ້ຜະລິດຕະພັນລາວພ້ອມທັງຊ່ວຍເຫຼືອໃນການສົ່ງອອກຜະລິດຕະພັນດັ່ງກ່າວໃນຕ່າງປະເທດ ຫຼື ເຂົ້າສູ່ຕະຫຼາດພາຍໃນ. ການເຝິກອົບຮົມທີ່ຈັດຢູ່ໃນເສົາຄ້ຳທີ່ 3 ແມ່ນຈະມີຈຸດສຸມໃສ່ຂະແໜງການຜະລິດຕະພັນອຸດສາຫະກຳທີ່ຕິດພັນກັບຜະລິດຕະພັນ ແລະ ຈະແມ່ນການເຝິກອົບຮົມແບບທົ່ວໄປຂອງບັນດາຮູບບໍລິການ SME ທີ່ລະບຸໄວ້ໃນເສົາຄ້ຳທີ 2.

ການຫັນເປັນອາຊີບໃນການໂຄສະນາການຕະຫຼາດຂອງຜະລິດຕະພັນດ້ວຍການເຝິກອົບຮົມສົມທົບກັບການເຮັດຕົວຈິງຈະເປັນກິດຈະກຳໜຶ່ງຂອງສູນບໍລິການສົ່ງເສີມການຕະຫຼາດໂດຍສະເພາະໃນການສົ່ງເສີມສິນຄ້າໂອດ໋ອບ (ODOP) ໃຫ້ແກ່ການທ່ອງທ່ຽວ ແລະ ຕະຫຼາດພາຍໃນ ແລະ ຕ່າງປະເທດພ້ອມທັງການຊ່ວຍເຫຼືອສ້າງຄວາມສາມາດໃຫ້ຜູ້ປະກອບການໄດ້ສະເໜີຜະລິດຕະພັນຂອງຕົນແບບມືອາຊີບໃນງານວາງສະແດງພາຍໃນກໍ່ຄື: ງານວາງສະແດງຜະລິດຕະພັນຍີ່ຫໍ້ລາວ (Made in Lao) ແລະ ງານວາງສະແດງອື່ນໆຢູ່ຕ່າງປະເທດ ແລະ ໃນລະບົບການຄ້າຜ່ານອິນເຕີເນັດ (e-commerce). ສຄອຊ ຈະເປັນຜູ້ຢັ້ງຢືນຜະລິດຕະພັນລາວໂດຍຜ່ານລະບົບ Barcode.

**ເພື່ອບັນລຸເປົ້າໝາຍໃນການສະໜັບສະໜູນດ້ານການຕະຫຼາດ ສຄອຊ ໄດ້ກຳນົດຈຸດປະສົງດັ່ງຕໍ່ໄປນີ້:**

1). ຜະລິດຕະພັນລາວຖືກສົ່ງເສີມຢ່າງມືອາຊີບ;

2). ເປັນມືອາຊີບໃນການເຂົ້າຮ່ວມ ແລະ ການຈັດຕັ້ງງານວາງສະແດງ;

3). ການສົ່ງເສີມທຸລະກິດການຄ້າທາງອີເລັກໂທຣນິກ ແລະ ທຸລະກິດດີຈີຕອນ;

4). ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ຕົວຊີ້ວັດຜະລິດຕະພັນ

| ຕາຕາລາງທີ3: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກຳໃນການສົ່ງເສີມ ແລະ ການຕະຫຼາດຂອງຜະລິດຕະພັນລາວ. | | | |
|---|---|---|---|
| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກຳ |
| 1 | ຜະລິດຕະພັນລາວຖືກສົ່ງເສີມຢ່າງມືອາຊີບ; | a) ສູນບໍລິການສົ່ງເສີມຜະລິດຕະພັນຖືກສ້າງຕັ້ງຂຶ້ນທີ່ ສຄອຊ ແລະໄດ້ພັດທະນາການບໍລິການສະເພາະ ຕົວຢ່າງ: ມາດຕະ ຖານ, ການເຂົ້າເຖິງຕະຫຼາດ;<br>b) ລະບົບການສ້າງຍີ່ຫໍ້ ແລະ ການຕະຫລາດ ແລະ ຂໍ້ມູນ ຂ່າວສານ (Brand Laos) ທີ່ສົ່ງເສີມຜະລິດຕະພັນທີ່ມີ ຄຸນນະພາບສູງຕໍ່ຜູ້ບໍລິໂພກ, ໄດ້ຮັບການພັດທະນາ ເຊິ່ງນຳໄປສູ່ການເພີ່ມມູນຄ່າການສົ່ງອອກ ຜະລິດຕະ ພັນແຊ້ມປຽ້ນທີ່ໄດ້ຮັບການຄັດເລືອກ ໂດຍສະເລ່ຍ 10% ຕໍ່ປີ;<br>c) ຢ່າງໜ້ອຍ 200 ບໍລິສັດໄດ້ຮັບການບໍລິການຈາກ PPSC ແລະ ຢ່າງໜ້ອຍ 70% ຂອງຈຳນວນດັ່ງກ່າວ ເພິ່ງພໍໃຈກັບການບໍລິການທີ່ໄດ້ຮັບ;<br>d) ຮູບແບບຈຳລອງມາດຕະຖານສຳລັບຕ່ອງໂສ້ການສະໜ ອງ ແລະ ຂໍ້ກຳນົດ (ຜະລິດຕະພັນສຳເລັດຮູບ ແລະ ສຳເລັດຮູບເຄິ່ງສຳເລັດຮູບ) ໄດ້ຮັບການພັດທະນາຢ່າງ ໜ້ອຍສຳລັບ 6 ຜະລິດຕະພັນ ແລະ ການທ່ອງທ່ຽວ ແຊ້ມປ້ຽນຂອງລາວເປັນໂຄງການທົດລອງ);<br>e) ມີຂໍ້ມູນອັບເດດກ່ຽວກັບສະຖານະການດ້ານການ ຕະຫຼາດຂອງຜະລິດຕະພັນແຊ້ມປ້ຽນຢ່າງນ້ອຍ 3 ຜະລິດຕະພັນໃນແຕ່ລະແຂວງ. | i. ພັດທະນາແນວຄວາມຄິດ ແລະ ສ້າງຄວາມສາມາດໃຫ້ກັບ PPSC (ການວິເຄາະຕ່ອງໂສ້ມູນຄ່າ, ການສະ ໜອງ ການ ບໍລິການ, ເຊັ່ນ: ການສະໜັບສະໜູນດ້ານການຕະຫຼາດ, ການສະໜັບສະໜູນການຍັ້ງຍືນ ແລະ ອື່ນໆ);<br>ii. ການດັດແປງຫລັກສູດ ແລະ ມາດຕະຖານການຝຶກອົບຮົມ ສາກົນໃຫ້ເໝາະສົມກັບເງື່ອນໄຂຂອງລາວ ແລະ ເລີ່ມການ ຝຶກອົບຮົມ / ຝຶກອົບຮົມດ້ວຍສອງຫລັກສູດ, ເພີ່ມໜຶ່ງ ຫລັກສູດໃນແຕ່ລະປີ;<br>iii. ສ້າງແຜນທີ່, ວິນິດໄສ ແລະ ປັບປຸງຕ່ອງໂສ້ມູນຄ່າທີ່ມີຢູ່ຢ່າງ ໜ້ອຍ 6 ຜະລິດຕະພັນແຊ້ມລາວໂດຍໄດ້ຮັບການສະ ໜັບ ສະໜູນຈາກກຸ່ມສົ່ງອອກ (ທ່າແຮງ, ສິ່ງທ້າທາຍ, ອຸປະສັກ, ການເຊື່ອມໂຍງລະບົບຕ່ອງໂສ້ມູນຄ່າ) ແລະສ້າງຕ່ອງໂສ້ມູນ ຄ່າຕົວແບບ;<br>iv. ພັດທະນາໂປແກຼມການຕະຫຼາດແບບຍືນຍົງໂດຍອີງໃສ່ຕ່ອງ ໂສ້ການສະໜອງສິນຄ້າຢ່າງໜ້ອຍ 6 ຜະລິດຕະພັນແຊ້ມ ລາວ;<br>v. ສ້າງແຜນສົ່ງເສີມຜະລິດຕະພັນ ແລະ ການຕະຫລາດ ເພື່ອໃຫ້ ຄຳແນະນຳແກ່ຜູ້ສົ່ງອອກຂອງລາວທີ່ມີທ່າແຮງ;<br>vi. ສ້າງ ແລະ ຈັດຕັ້ງປະຕິບັດແຜນການຕະຫລາດການທ່ອງທ່ຽວ ແລະ ການໂຄສະນາຕະຫລາດພາຍໃນປະເທດ (ໂຄສະພາ |

| | | | |
|---|---|---|---|
| | | | ເຜີຍແຜ່ ລາວທ່ຽວລາວ) ແລະ ສໍາລັບຕະຫລາດທ່ອງທ່ຽວສາກົນທີ່ເລືອກ;<br><br>vii. ພັດທະນາລະບົບຂໍ້ມູນຂ່າວສານດ້ານການຕະຫລາດ, ລວມເອົາ PCCIs ແລະ ສະມາຄົມທຸລະກິດ ສໍາລັບຜະລິດຕະພັນແຊ້ມປ້ຽນລາວໃນ 5 ຕະຫຼາດທີ່ກ່ຽວຂ້ອງ ແລະ ການເຮັດລາຍງານສະບັບປັບປຸງປະຈໍາທຸກປີ. |
| 2 | ເປັນມືອາຊີບໃນການເຂົ້າຮ່ວມ ແລະ ການຈັດຕັ້ງງານວາງສະແດງ | a) Made in Laos ເປັນເວທີພົບປະທຸລະກິດມືອາຊີບທີ່ມີຊື່ສຽງ ແລະ ສ້າງສັນຍາສໍາລັບບໍລິສັດທີ່ເຂົ້າຮ່ວມ 5 ລ້ານໂດລາຕໍ່ປີ;<br>b) ຢ່າງໜ້ອຍ 200 ບໍລິສັດໄດ້ຮັບການຝຶກອົບຮົມໃນການເຂົ້າຮ່ວມງານວາງສະແດງການຄ້າທີ່ເປັນມືອາຊີບແລະ 70% ຢັ້ງຢືນວ່າເພິ່ງພໍໃຈກັບການຝຶກອົບຮົມ; | i. ພັດທະນາແນວຄວາມຄິດສໍາລັບງານວາງສະແດງສິນຄ້າ Made in Laos ທີ່ມີຄວາມເປັນມືອາຊີບ ແລະ ຈັດຕັ້ງປະຕິບັດ;<br>ii. ສ້າງຄູ່ມືໃນການເຂົ້າຮ່ວມງານວາງສະແດງສິນຄ້າ;<br>iii. ກອງປະຊຸມສໍາມະນາກ່ຽວກັບການເຂົ້າຮ່ວມງານວາງສະແດງການຄ້າແບບມືອາຊີບສໍາລັບບໍລິສັດຕ່າງໆ (ຜູ້ເຂົ້າຮ່ວມງານວາງສະແດງ) ແລະມາດຕະການກຽມຄວາມພ້ອມສໍາລັບການເຂົ້າຮ່ວມງານວາງສະແດງການຄ້າສາກົນ. |
| 3 | ການສົ່ງເສີມທຸລະກິດການຄ້າທາງອີເລັກໂທຣນິກ ແລະ ທຸລະກິດດິຈິຕອນ | a) ຈໍານວນບໍລິສັດທີ່ນໍາໃຊ້ທຸລະກິດການຄ້າທາງອີເລັກໂທຣນິກແລະທຸລະກິດດິຈິຕອນເພີ່ມຂຶ້ນທຸກໆປີ 20%. | i. ການສໍາຫຼວດພື້ນຖານກ່ຽວກັບການນໍາໃຊ້ການຄ້າທາງອີເລັກໂທຣນິກ ແລະ ການຕິດຕາມປະຈໍາປີ;<br>ii. ພັດທະນາການເວທີການເຮັດວຽກຂອງການຄ້າທາງອີເລັກໂທຣນິກ ລວມເຖິງ ການລວມລະບົບການຈ່າຍເງິນຜ່ານລະບົບອີເລັກໂທຣນິກ ແລະ ລະບົບການຈັດສົ່ງ ແລະ ໂປແກມ B2C ແອບພິເຄຊັນ; |

| | | | |
|---|---|---|---|
| | | | iii. ການສົ່ງເສີມການປັບຕົວຂອງການຄ້າເອເລັກໂຕຣນິກໃນບັນດາບໍລິສັດ (ການຝຶກອົບຮົມ, ການສຳມະນາ ແລະ ອື່ນໆ);<br>iii. ການຝຶກອົບຮົມ, ການສຳມະນາເພື່ອສົ່ງເສີມການຄຸ້ມຄອງ ແລະການຕະຫລາດດິຈິຕອນ ສຳລັບບໍລິສັດການຕ້ອນຮັບ ແລະ ການທ່ອງທ່ຽວຂອງລາວ |
| 4 | ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ແລະ ຕົວຊີ້ວັດຜະລິດຕະພັນ | a) ສຄອຊ ອອກໃບຢັ້ງຢືນຕົ້ນກຳເນີດ (CO), ໃບຢັ້ງຢືນສຳລັບ Brand Laos, Made in Laos ແລະອື່ນໆ;<br>b) ສຄອຊ ອອກລະຫັດບາໂຄດສ. | i. ກຳນົດມາດຕະຖານສຳລັບ Made in Laos ແລະ Brand Laos ແລະ ສະໜັບສະໜູນ ຜະລິດຕະພັນ / ບໍລິສັດໃຫ້ໄດ້ຮັບການຢັ້ງຢືນຕາມມາດຕະຖານ;<br>ii. ພັດທະນາ ແລະ ຈົດທະບຽນ “Heart of Laos” ແລະ ຍີ່ຫໍ້ ສຳລັບ 6 ຜະລິດຕະພັນແຊ້ມປ້ຽນລາວ;<br>iv. ອອກໃບຢັ້ງຢືນ (ເຊັ່ນ: ໃບຢັ້ງຢືນຕົ້ນກຳເນີດ (ລວມທັງດິຈິຕອລ), Brand Laos, Made in Laos ແລະ ອື່ນໆ);<br>v. ສຄອຊ ກາຍເປັນສະມາຊິກ GS1 ແລະ ອອກລະຫັດບາໂຄດສ. |

### 4.3.4. ການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການລົງທຶນທີ່ຍືນຍົງ.

ການເຊື່ອມໂຍງເສດຖະກິດພາກພື້ນໂດຍສະເພາະໃນກອບຂອງປະເທດອາຊຽນ ແລະ ປະເທດໃນລຸ່ມແມ່ນໍ້າຂອງ (GMS) ໄດ້ເປັນວຽກງານສຳຄັນຂອງ ສຄອຊ. ນອກຈາກນັ້ນຍັງມີວຽກງານການຮ່ວມມືເສດຖະກິດ-ທຸລະກິດໂດຍກົງກັບປະເທດອ້ອມຂ້າງເຊັ່ນ: ສປ ຈີນ, ລາຊະອານາຈັກໄທ ແລະ ສສ ຫວຽດນາມ. ກອບຂອງວຽກງານການເຊື່ອມໂຍງເສດຖະກິດນັ້ນແມ່ນການປະຕິບັດຂໍ້ຕົກລົງຂອງປະເທດອາຊຽນໃນເຂດການຄ້າເສລີອາຊຽນ (AFTA) ແລະ ຂໍ້ຕົກລົງລະຫວ່າງປະເທດອາຊຽນກັບຄູ່ຮ່ວມເສດຖະກິດເຊັ່ນ: ສປ ຈີນ, ເກົາຫຼີໃຕ້ ແລະ ຍີ່ປຸ່ນ ໂດຍຜ່ານການເຂົ້າຮ່ວມກອງປະຊຸມຕ່າງໆຂອງຄະນະທີ່ປຶກສາທຸລະກິດອາຊຽນ (ASEAN-BAC) ແລະ ຂອງຄະນະທຸລະກິດລຸ່ມແມ່ນໍ້າຂອງ (GMS-Business Council).

ໃນໄລຍະຜ່ານການຄ້າສາຍແດນ (Border Trade) ໄດ້ເປັນວຽກງານທີ່ຕິດພັນກັບການຜະລິດທຸລະກິດ ແລະ ການຄ້າໃນປະເທດ. ການເຈລະຈາຂໍໂກຕ້າການຄ້າ ແລະ ຂົນສົ່ງຂອງລັດຖະບານແມ່ນບໍ່ສາມາດປະຕິບັດໄດ້ໂດຍສ່ວນຫຼາຍ ແລະ ຍັງເກີດມີສະພາບການເອົາປຽບເອົາລັດລະຫວ່າງທຸລະກິດຕ່າງປະເທດ ແລະ ທຸລະກິດພາຍໃນດ້ວຍກັນ. ສຄອຊ ຈຶ່ງເຫັນຄວາມສຳຄັນໃນບັນດາສະພາການຄ້າ ແລະ ອຸດສາຫະກຳແຂວງໄດ້ເຂົ້າຮ່ວມມີບົດບາດໃນການເຈລະຈາ ແລະ ຈັດຕັ້ງປະຕິບັດສັນຍາການຄ້າສາຍແດນພ້ອມທັງໄດ້ເກັບກຳຂໍ້ມູນການນຳເຂົ້າ-ສົ່ງອອກ ສິນຄ້າເພື່ອການລາຍງານ.

ການເຊື່ອມໂຍງເສດຖະກິດພາກພື້ນທີ່ຕິດພັນກັບການລົງທຶນຕ່າງປະເທດຢູ່ ສປປ ລາວ. ໂດຍສະເພາະການລົງທຶນຂອງພາກເອກະຊົນທີ່ຕ້ອງການ ເພື່ອເສີມການລົງທຶນຂອງພາກເອກະຊົນທີ່ຕ້ອງການ ເພື່ອເສີມການລົງທຶນຂອງລັດຖະບານໃຫ້ແໜ້ນຂຶ້ນ. ການສ້າງເສັ້ນທາງລົດໄຟ ແລະ ຖະໜົນທາງດ່ວນຈາກສາຍແດນ ສປ ຈີນ ເຖິງວຽງຈັນ ໂດຍລັດຖະບານມີຄວາມຕ້ອງການໃຫ້ພາກທຸລະກິດ ເອກະຊົນໃຫ້ລົງທຶນ.

ໃນການຜະລິດກະສິກຳອຸດສາຫະກຳ ແລະ ການບໍລິການເພີ່ມເຕີມເພື່ອເຮັດໃຫ້ເສດຖະກິດໄດ້ດີຂຶ້ນໄດ້ມີຜົນປະໂຫຍດໃຫ້ປະຊາຊົນລາວ. ສຄອຊ ຈະໄດ້ຈັດຕັ້ງຄະນະຮ່ວມມືທຸລະກິດກັບຕ່າງປະເທດ ໂດຍສະເພາະກັບອົງການຈັດຕັ້ງ ແລະ ທຸລະກິດຂອງ ສປ ຈີນ ເພື່ອພັດທະນາໂຄງການທີ່ມີຄຸນະພາບ ແລະ ຍືນຍົງໃນເຂດຕ່າງໆທີ່ກຳນົດໂດຍລັດຖະບານ.

ເພື່ອສາມາດບັນລຸເປົ້າໝາຍທີ່ໄດ້ກ່າວມາຂ້າງເທິງນີ້ ສຄອຊ ໄດ້ມີຈຸດປະສົງ:

1). ເຊື່ອມໂຍງທຸລະກິດໃນ ສປປ ລາວ ເຂົ້າໃນໂຄງປະກອບເສດຖະກິດຂອງ ASEAN, ASEAN+, GMS ແລະ ຂໍ້ຕົກລົງເສດຖະກິດຕ່າງໆໃນພາກພື້ນ.

2). ສຄອຊ ມີບົດບາດຫຼາຍກວ່າເກົ່າໃນການເຈລະຈາການຄ້າ, ວາງແຜນການຜະລິດ ແລະ ຄຸ້ມຄອງການຄ້າສາຍແດນ.

3). ສຄອຊ ໄດ້ສ້າງກົນໄກ ແລະ ຮູບແບບໃນການຮ່ວມມືທຸລະກິດກັບຕ່າງປະເທດເພື່ອສ້າງໂຄງການລົງທຶນທີ່ຍືນຍົງ.

| ຕາຕາລາງທີ4: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກຳໃນການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການລົງທຶນທີ່ຍືນຍົງ. | | | |
|---|---|---|---|
| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກຳ |
| 1 | ເຊື່ອມໂຍງທຸລະກິດໃນ ສປປ ລາວ ເຂົ້າໃນໂຄງປະກອບເສດຖະກິດຂອງ ASEAN, ASEAN+, GMS ແລະ ຂໍ້ຕົກລົງເສດຖະກິດຕ່າງໆໃນພາກພື້ນ. | a) ການກຳນົດຄືນ NTB ແລະ NTM ໂດຍອີງຕາມປະສົບການ ຂອງ ບໍລິສັດລາວ ໃນການປັບປຸງ ແລະ ການພັດທະນາ ພ້ອມກັບອັບເດດຂໍ້ມູນ ໃຫ້ເປັນປົກກະຕິ<br>b) ການຄ້າພາຍໃນອາຊຽນຢ່າງເປັນທາງການຂອງລາວໄດ້ເພີ່ມຂຶ້ນ 10% ໃນລະຫວ່າງປີ 2021 ແລະ 2025. | i. ສ້າງຕັ້ງກຸ່ມຈຸດສຸມສຳລັບການຄ້າອຸດສະຫະກຳ, ການຂົນສົ່ງ (ຜູ້ຕາງໜ້າທຸລະກິດ) ຖືກສ້າງຕັ້ງຂຶ້ນ, ເກັບກຳຂໍ້ມູນກ່ຽວກັບ NTB ແລະ NTM, ສ້າງລະບົບເກັບຂໍ້ມູນ, ແລະໃຫ້ຄຳແນະນຳ;<br>ii. ສ້າງຕັ້ງກົນໄກວຽກງານ ABA Laos ແລະ ມີການມອບລາງວັນເປັນປະຈຳທຸກປີ;<br>iii. ການກະກຽມ ແລະ ການຈັດກອງປະຊຸມ ASEAN BIS ແລະກິດຈະກຳອື່ນໆທີ່ກ່ຽວຂ້ອງກັບທຸລະກິດອາຊຽນ 2024 (ການເປັນປະທານອາຊຽນຂອງລາວ);<br>iv. ການກະກຽມແລະຈັດຕັ້ງປະຕິບັດບັນດາວຽກງານ ASEAN-BAC. |
| 2 | ສຄອຊ ມີບົດບາດຫຼາຍກວ່າເກົ່າໃນການເຈລະຈາການຄ້າ, ວາງແຜນການຜະລິດ ແລະ ຄຸ້ມຄອງການຄ້າສາຍແດນ. | a) ສ້າງຕັ້ງທີມງານທີ່ມີບຸກຄົນທີ່ມີຄຸນວຸດທິເໝາະສົມ (ພະນັກງານແລະຄະນະ) ເພື່ອເຈລະຈາປະຈຳປີກັບຈີນ, ໄທ ແລະປະເທດອື່ນໆ;<br>b) ພາກລັດຖະບານລາວກ່ອນຈະເຊັນສັນຍາການຄ້າຊາຍແດນໃດໆຄວນພິຈາລະນາປຶກສາກັບ ສຄອຊ ຫຼື ສຄອ ແຂວງ | i. ການສ້າງຂີດຄວາມສາມາດໃຫ້ພະນັກງານທີ່ຮັບຜິດຊອບວຽກງານການຄ້າຊາຍແດນທີ່ ສຄອຊ ແລະ ສຄອ ແຂວງ;<br>ii. ສ້າງໂຄງຮ່າງການຈັດຕັ້ງໃນບັນດາແຂວງເພື່ອເກັບກຳຂໍ້ມູນກ່ຽວກັບການຄ້າຊາຍແດນ (ອີງຕາມຕົວຢ່າງຈາກຈຳປາສັກ);<br>iii. ສຄອ ແຂວງ ເກັບກຳຂໍ້ມູນກ່ຽວກັບໂຄງສ້າງ ແລະ ປະລິມານການຄ້າຊາຍແດນ;<br>iv. ຈັດການສຳມະນາກັບ ສຄອ ແຂວງ ກ່ຽວກັບບັນຫາການຄ້າຊາຍແດນສອງຄັ້ງຕໍ່ປີ<br>v. ສຄອຊ ແລະ ສຄອ ແຂວງ ວາງແຜນລະອຽດກຳນົດຈຸດຢືນຂອງລາວໃນການຄ້າຊາຍແດນ ແລະ ເຈລະຈາກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ; |

| | | | |
|---|---|---|---|
| | | | **vi.** ສຄອຊ ໃຫ້ຄໍາແນະນໍາ ແລະ ປະກອບຄໍາເຫັນ ໃຫ້ຄະນະກໍາມະການອໍານວຍຄວາມສະດວກດ້ານການຄ້າແຫ່ງຊາດ ແລະ ຄະນະກໍາມະການແຫ່ງຊາດດ້ານການຜະລິດສິນຄ້າ ແລະ ລະບຽບການກ່ຽວກັບການນໍາເຂົ້າສິນຄ້າບໍລິໂພກ;<br>vii. ການປະຊຸມກັບພາກລັດຖະບານເປັນປະຈໍາເພື່ອກະກຽມການເຈລະຈາກັບປະເທດທີສາມ;<br>viii. ການເຈລະຈາກ່ຽວກັບການຄ້າຊາຍແດນກັບປະເທດໃກ້ຄຽງ. |
| 3 | ສຄອຊ ໄດ້ສ້າງກົນໄກ ແລະ ຮູບແບບໃນການຮ່ວມມືທຸລະກິດກັບຕ່າງປະເທດເພື່ອສ້າງໂຄງການລົງທຶນທີ່ຍືນຍົງ. | a) ຄະນະກໍາມະການຮ່ວມມືທຸລະກິດລາວ - ຈີນ ແລະ ກອງເລຂາເຮັດ 4 ບົດຄົ້ນຄ້ວາກ່ຽວກັບທ່າແຮງການລົງທຶນ,<br>b) ສຄອຊ ໄດ້ມີ 12 ໂຄງການລົງທຶນຕາມເສັ້ນທາງລົດໄຟລາວ - ຈີນ ໃນຮູບແບບການຮ່ວມລົງທຶນລະຫວ່າງບໍລິສັດລາວ ແລະ ຕ່າງປະເທດ (3 ໂຄງການທ່ອງທ່ຽວທາງທໍາມະຊາດ, ອຸດສະຫະກໍາປຸງແຕ່ງອາຫານ, ນິຄົມອຸດສາຫະກໍາ ຫລື ໂລຈິດສຕິກ) ຈົນຮອດປີ 2025 ດ້ວຍການຄາດຄະເນປະລິມານການລົງທຶນຢ່າງໜ້ອຍ 250 ລ້ານໂດລາ;<br>c) ມີພາບລວມຢ່າງເປັນລະບົບກ່ຽວກັບໂຄງການລົງທຶນ (ໂຄງການລົງທຶນທີ່ມີຢູ່, ຖືກອະນຸມັດ, ມີແຜນ) ໃນຂອບເຂດທົ່ວປະເທດ;<br>ງ) ກອງປະຊຸມສຸດຍອດ "ການລົງທຶນໃນລາວ" (ອາດຈະລວມກັບ ASEAN-BIS 2024). | i. ການດໍາເນີນງານຂອງກອງເລຂາຄະນະກໍາມະການຮ່ວມມືທຸລະກິດລາວ - ຈີນ ທີ່ ສຄອຊ;<br>ii. ສຶກສາກ່ຽວກັບໂຄງການທີ່ມີທ່າແຮງ (ການຄ້າ, ການຜະລິດ, ໂລຈິດສຕິກ) ຕາມແລວທາງລົດໄຟກັບ ສຄອແຂວງ;<br>iii. ການຄັດເລືອກບັນດາໂຄງການທີ່ມີທ່າແຮງໃນການລົງທຶນ FDI / ການລົງທຶນຮ່ວມ, ສຸມໃສ່ການຮ່ວມມືດ້ານການລົງທຶນລາວ - ຈີນ;<br>iv. ການຈັບຄູ່ບໍລິສັດສໍາລັບ 12 ໂຄງການລົງທຶນ, ຕາມສັນຍາ ສຄອຊ ແລະ ສະພາສົ່ງເສີມການຄ້າສາກົນ ສປ ຈີນ (CCPIT);<br>v. ອໍານວຍຄວາມສະດວກໃຫ້ແກ່ໂຄງການລົງທຶນ / ການລົງທຶນຮ່ວມ;<br>vi. ສ້າງຕະຫລາດການຈັບຄູ່ການລົງທຶນແບບຖາວອນ;<br>vii. ສ້າງຊ່ອງທາງເພື່ອການລົງທຶນໃນດ້ານເສດຖະກິດດີຈິຕອນເພື່ອດຶງດູດການລົງທຶນທີ່ກ່ຽວຂ້ອງ; |

| | | | |
|---|---|---|---|
| | | | viii. ຄົ້ນຄ້ວາແຜນທີ່ຢ່າງລະອຽດ / ບັນຊີລາຍຊື່ໂຄງການລົງທຶນໃນຂອບເຂດທົ່ວປະເທດໂດຍການຮ່ວມມືກັບ ກະຊວງແຜນການ ແລະ ການລົງທຶນ;<br>ix. ກະກຽມ, ໂຄສະນາເຜີຍແຜ່, ຈັດຕັ້ງໂຄສະນາການລົງທຶນ 10 ຄັ້ງ (ລວມທັງຄະນະຜູ້ແທນທຸລະກິດ) ໂດຍຮ່ວມມືກັບເສົາຄໍ້າທີ III ເປັນປະຈໍາທຸກປີ;<br>ix. ກະກຽມ, ໂຄສະນາ, ຮັບຄະນະຜູ້ແທນທຸລະ  ກິດ 10 ຄັ້ງເປັນປະຈໍາທຸກປີ;<br>xi. ກອງປະຊຸມສຸດຍອດ "ການລົງທຶນໃນລາວ" ແມ່ນໄດ້ຖືກ ກະກຽມ, ໂຄສະນາ ແລະ ຈັດຕັ້ງປະຕິບັດໃນປີ 2024. |

| ຕາຕາລາງທີ4: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກໍາໃນການເຊື່ອມໂຍງເສດຖະກິດພາກພື້ນ ແລະ ການລົງທຶນທີ່ຍືນຍົງ. | | | |
|---|---|---|---|
| | | | |
| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກໍາ |
| 1 | ເຊື່ອມໂຍງທຸລະກິດໃນ ສປປ ລາວ ເຂົ້າໃນໂຄງປະກອບເສດຖະກິດຂອງ ASEAN, ASEAN+, GMS ແລະ ຂໍ້ຕົກລົງເສດຖະກິດຕ່າງໆໃນພາກພື້ນ. | b) ການກໍານົດຄືນ NTB ແລະ NTM ໂດຍອີງຕາມປະສົບການ ຂອງ ບໍລິສັດລາວ ໃນການປັບປຸງ ແລະ ການພັດທະນາ ພ້ອມກັນອັບເດດຂໍ້ມູນ ໃຫ້ເປັນປົກກະຕິ<br>b) ການຄ້າພາຍໃນອາຊຽນຢ່າງເປັນທາງການຂອງລາວໄດ້ເພີ່ມຂຶ້ນ 10% ໃນລະຫວ່າງປີ 2021 ແລະ 2025. | i. ສ້າງຕັ້ງກຸ່ມຈຸດສຸມສໍາລັບການຄ້າອຸດສະຫະກໍາ, ການຂົນສົ່ງ (ຜູ້ຕາງໜ້າທຸລະກິດ) ຖືກສ້າງຕັ້ງຂຶ້ນ, ເກັບກໍາຂໍ້ມູນກ່ຽວກັບ NTB ແລະ NTM, ສ້າງລະບົບເກັບຂໍ້ມູນ, ແລະໃຫ້ຄໍາແນະນໍາ;<br>ii. ສ້າງຕັ້ງກົນໄກວຽກງານ ABA Laos ແລະ ມີການມອບລາງວັນເປັນປະຈໍາທຸກປີ;<br>iii. ການກະກຽມ ແລະ ການຈັດກອງປະຊຸມ ASEAN BIS ແລະກິດຈະກໍາອື່ນໆທີ່ກ່ຽວຂ້ອງກັບທຸລະກິດອາຊຽນ 2024 (ການເປັນປະທານອາຊຽນຂອງລາວ);<br>iv. ການກະກຽມແລະຈັດຕັ້ງປະຕິບັດບັນດາວຽກງານ ASEAN-BAC. |
| 2 | ສຄອຊ ມີບົດບາດຫຼາຍກວ່າເກົ່າໃນການເຈລະຈາການຄ້າ, ວາງແຜນການຜະລິດ ແລະ ຄຸ້ມຄອງການຄ້າສາຍແດນ. | a) ສ້າງຕັ້ງທີມງານທີ່ມີບຸກຄົນທີ່ມີຄຸນວຸດທິເຫມາະສົມ (ພະນັກງານແລະຄະນະ) ເພື່ອເຈລະຈາປະຈໍາປີກັບຈີນ, ໄທ ແລະປະເທດອື່ນໆ;<br>b) ພາກລັດຖະບານລາວກ່ອນຈະເຊັນສັນຍາການຄ້າຊາຍແດນໃດໆຄວນພິຈາລະນາປຶກສາກັບ ສຄອຊ ຫຼື ສຄອ ແຂວງ | i. ການສ້າງຂີດຄວາມສາມາດໃຫ້ພະນັກງານທີ່ຮັບຜິດຊອບວຽກງານການຄ້າຊາຍແດນທີ່ ສຄອຊ ແລະ ສຄອ ແຂວງ;<br>ii. ສ້າງໂຄງຮ່າງການຈັດຕັ້ງໃນບັນດາແຂວງເພື່ອເກັບກໍາຂໍ້ມູນກ່ຽວກັບການຄ້າຊາຍແດນ (ອີງຕາມຕົວຢ່າງຈາກຈໍາປາສັກ);<br>iii. ສຄອ ແຂວງ ເກັບກໍາຂໍ້ມູນກ່ຽວກັບໂຄງສ້າງ ແລະ ປະລິມານການຄ້າຊາຍແດນ;<br>v. ຈັດການສໍາມະນາກັບ ສຄອ ແຂວງ ກ່ຽວກັບບັນຫາການຄ້າຊາຍແດນສອງຄັ້ງຕໍ່ປີ |

| | | | |
|---|---|---|---|
| | | | v. ສຄອຊ ແລະ ສຄອ ແຂວງ ວາງແຜນລະອຽດກຳນົດ<u>ຈຸດຢືນຂອງລາວ</u>ໃນການຄ້າຊາຍແດນ ແລະ ເຈລະຈາກັບເຈົ້າໜ້າທີ່ທີ່ກ່ຽວຂ້ອງ;<br>**vi.** ສຄອຊ ໃຫ້ຄຳແນະນຳ ແລະ ປະກອບຄຳເຫັນ ໃຫ້ຄະນະກຳມະການອຳນວຍຄວາມສະດວກດ້ານການຄ້າແຫ່ງຊາດ ແລະ ຄະນະກຳມະການແຫ່ງຊາດດ້ານການຜະລິດສິນຄ້າ ແລະ ລະບຽບການກ່ຽວກັບການນຳເຂົ້າສິນຄ້າບໍລິໂພກ;<br>vii. ການປະຊຸມກັບພາກລັດຖະບານເປັນປະຈຳເພື່ອກະກຽມການເຈລະຈາກັບປະເທດທີສາມ;<br>x. ການເຈລະຈາກ່ຽວກັບການຄ້າຊາຍແດນກັບປະເທດໃກ້ຄຽງ. |
| 3 | ສຄອຊ ໄດ້ສ້າງກົນໄກ ແລະ ຮູບແບບໃນການຮ່ວມມືທຸລະກິດກັບຕ່າງປະເທດເພື່ອສ້າງໂຄງການລົງທຶນທີ່ຍືນຍົງ. | a) ຄະນະກຳມະການຮ່ວມມືທຸລະກິດລາວ - ຈີນ ແລະ ກອງເລຂາເຮັດ 4 ບົດຄົ້ນຄ້ວາກ່ຽວກັບທ່າແຮງການລົງທຶນ,<br>b) ສຄອຊ ໄດ້ມີ 12 ໂຄງການລົງທຶນຕາມເສັ້ນທາງລົດໄຟລາວ - ຈີນ ໃນຮູບແບບການຮ່ວມລົງທຶນລະຫວ່າງບໍລິສັດລາວ ແລະ ຕ່າງປະເທດ (3 ໂຄງການທ່ອງທ່ຽວທາງທຳມະຊາດ, ອຸດສະຫະກຳປຸງແຕ່ງອາຫານ, ນິຄົມອຸດສາຫະກຳ ຫລື ໂລຈິດສຕິກ) ຈົນຮອດປີ 2025 ດ້ວຍການຄາດຄະເນປະລິມານການລົງທຶນຢ່າງໜ້ອຍ 250 ລ້ານໂດລາ;<br>c) ມີພາບລວມຢ່າງເປັນລະບົບກ່ຽວກັບໂຄງການລົງທຶນ (ໂຄງການລົງທຶນທີ່ມີຢູ່, ຖືກອະນຸມັດ, ມີແຜນ) ໃນຂອບເຂດທົ່ວປະເທດ;<br>ງ) ກອງປະຊຸມສຸດຍອດ "ການລົງທຶນໃນລາວ" (ອາດຈະລວມກັບ ASEAN-BIS 2024). | i. ການດຳເນີນງານຂອງກອງເລຂາຄະນະກຳມະການຮ່ວມມືທຸລະກິດລາວ - ຈີນ ທີ່ ສຄອຊ;<br>ii. ສຶກສາກ່ຽວກັບໂຄງການທີ່ມີທ່າແຮງ (ການຄ້າ, ການຜະລິດ, ໂລຈິດສຕິກ) ຕາມແລວທາງລົດໄຟກັບ ສຄອ ແຂວງ;<br>iii. ການຄັດເລືອກບັນດາໂຄງການທີ່ມີທ່າແຮງໃນການລົງທຶນ FDI / ການລົງທຶນຮ່ວມ, ສຸມໃສ່ການຮ່ວມມືດ້ານການລົງທຶນລາວ - ຈີນ;<br>iv. ການຈັບຄູ່ບໍລິສັດສຳລັບ 12 ໂຄງການລົງທຶນ, ຕາມສັນຍາ ສຄອຊ ແລະ ສະພາສົ່ງເສີມການຄ້າສາກົນ ສປ ຈີນ (CCPIT);<br>v. ອຳນວຍຄວາມສະດວກໃຫ້ແກ່ໂຄງການລົງທຶນ / ການລົງທຶນຮ່ວມ;<br>vi. ສ້າງຕະຫລາດການຈັບຄູ່ການລົງທຶນແບບຖາວອນ; |

| | | | |
|---|---|---|---|
| | | | vii. ສ້າງຊ່ອງທາງເພື່ອການລົງທຶນໃນດ້ານເສດຖະກິດດິຈິຕອນ ເພື່ອດຶງດູດການລົງທຶນທີ່ກ່ຽວຂ້ອງ;<br>viii. ຄົ້ນຄ້ວາແຜນທີ່ຢ່າງລະອຽດ / ບັນຊີລາຍຊື່ໂຄງການລົງທຶນໃນ ຂອບເຂດທົ່ວປະເທດໂດຍການຮ່ວມມືກັບ ກະຊວງ ແຜນການ ແລະ ການລົງທຶນ;<br>ix. ກະກຽມ, ໂຄສະນາເຜີຍແຜ່, ຈັດຕັ້ງໂຄສະນາການລົງທຶນ 10 ຄັ້ງ (ລວມທັງຄະນະຜູ້ແທນທຸລະກິດ) ໂດຍຮ່ວມມືກັບ ເສົາຄ້ຳທີ III ເປັນປະຈຳທຸກປີ;<br>xi. ກະກຽມ, ໂຄສະນາ, ຮັບຄະນະຜູ້ແທນທຸລະ  ກິດ 10 ຄັ້ງ ເປັນປະຈຳທຸກປີ;<br>xi. ກອງປະຊຸມສຸດຍອດ "ການລົງທຶນໃນລາວ" ແມ່ນໄດ້ຖືກ ກະກຽມ, ໂຄສະນາ ແລະ ຈັດຕັ້ງປະຕິບັດໃນປີ 2024. |

### 4.3.5. ການພັດທະນາຜູ້ປະກອບການ ແລະ ກິດຈະການຜູ້ໃຊ້ແຮງງານ.

ສຄອຊ ເປັນອົງການຕາງໜ້າຜູ້ແຮງງານຂອງ ສປປ ລາວ ແລະ ມີພາລະໜ້າທີ່ໃນການວາງແຜນ ແລະ ຈັດຕັ້ງປະຕິບັດກິດຈະກຳຂອງຜູ້ໃຊ້ແຮງງານຕາມລະບົບຄຸ້ມຄອງສາມຝ່າຍຮ່ວມກັບກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການກຳມະບານລາວ.

ໃນປັດຈຸບັນ ບັນດາອຸດສາຫະກຳທີ່ເປັນປາຍແຫຼມໃນການຂະຫຍາຍເສດຖະກິດເຊັ່ນ: ອຸດສາຫະກຳປຸງແຕ່ງກະສິກຳ, ອຸດສາຫະກຳປຸງແຕ່ງເພື່ອສົ່ງອອກ, ອຸດສາຫະກຳທ່ອງທ່ຽວ ແລະ ບັນດາທຸລະກິດການບໍລິການທີ່ປີ່ນອ້ອມເຊັ່ນ: ການຄ້າ, ການຂົນສົ່ງ, ການເງິນທະຄານ ແລະ ອື່ນໆ ແມ່ນຂາດຜູ້ປະກອບການທີ່ມີລະດັບການຄຸ້ມຄອງ ແລະ ແຮງງານທີ່ມີຈຸດ...........ທີ່ຕ້ອງການຈາກອຸດສາຫະກຳ. ກິດຈະກຳທີ່ສຳຄັນອັນໜຶ່ງຂອງເສົາຄ້ຳນີ້ເປັນການສົ່ງເສີມການສຶກສາເຕັກນິກວິຊາຊີບ (TVET) ເພື່ອສ້າງກຳລັງແຮງງານທີ່ມີຄຸນະພາບ ແລະ ຖືກກັບຄວາມຕ້ອງການກັບຕະຫຼາດແຮງງານ ເພື່ອສາມາດບັນລຸເປົ້າໝາຍດັ່ງກ່າວ ສຄອຊ ຈະໄດ້ຮ່ວມໂຄງການພັດທະນາລະບົບການສຶກສາເຕັກນິກວິຊາຊີບແບບຄວບຄູ່ (ຮຽນຢູ່ໂຮງຮຽນ ແລະ ຢູ່ສະຖານທີ່ປະກອບການ, ໂຮງງານໄປພ້ອມໆກັນ), ໂຄງການຍົກລະດັບການສຶກສາຊັ້ນສູງຂັ້ນປະລິນຍາໂທດ້ານການຄຸ້ມຄອງໄລຍະສັ້ນ (Mini MBA) ໃຫ້ແກ່ຜູ້ປະກອບການ.

ເພື່ອສາມາດບັນລຸເປົ້າໝາຍທີ່ກ່າວມານີ້ ສຄອຊ ໄດ້ວາງຈຸດປະສົງດັ່ງຕໍ່ໄປນີ້:

1). ການຈັດຕັ້ງປະຕິບັດກົນໄກສາມຝ່າຍທີ່ປະກອບມີການຄົ້ນຄວ້ານິຕິກຳ, ເງື່ອນໄຂ ແລະ ມາດຕະຖານວຽກງານຕາມອົງການແຮງງານໂລກ (ILO), ການກຳກົດເງິນເດືອນຕໍ່າສຸດ ແລະ ການຈັດງານຕະຫຼາດແຮງງານ.

2). ການຈັດຕັ້ງປະຕິບັດວຽກງານການພັດທະນາອາຊີວະສຶກສາ.

3). ການປັບປຸງການເຄື່ອນໄຫວຂອງຕະຫຼາດແຮງງານ.

4). ການປັບປຸງຄວາມສາມາດໃນການຄຸ້ມຄອງຂອງຜູ້ປະກອບການ.

| ຕາຕາລາງທີ5: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກຳໃນການພັດທະນາຜູ້ປະກອບການ ແລະ ກິດຈະການຜູ້ໃຊ້ແຮງງານ. | | | |
|---|---|---|---|
| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກຳ |
| 1 | ການຈັດຕັ້ງປະຕິບັດກົນໄກສາມຝ່າຍທີ່ປະກອບມີການຄົ້ນຄວ້ານິຕິກຳ, ເງື່ອນໄຂ ແລະ ມາດຕະຖານວຽກງານຕາມອົງການແຮງງານໂລກ (ILO), ການກຳກົດເງິນເດືອນຕ່ຳສຸດ ແລະ ການຈັດງານຕະຫຼາດແຮງງານ. | a) ມີລະບົບທີ່ອີງໃສ່ຂໍ້ເທັດຈິງເພື່ອກຳນົດຄ່າແຮງງານຂັ້ນຕ່ຳແມ່ນມີຢູ່;<br>b) ມີ 70 ຄົນຕໍ່ປີທີ່ໄດ້ຮັບການບໍລິການທີ່ກ່ຽວຂ້ອງຈາກ ສຄອຊ ທີ່ໄດ້ຮັບການຢັ້ງຢືນ OSH (ໃບຢັ້ງຢືນລະດັບຊາດ ແລະ / ຫຼື ສາກົນ) ແລະປະຕິບັດມາດຕະການຂອງ OSH. | i. ສ້າງຕັ້ງລະບົບການຊອກຫາຄ່າແຮງງານຂັ້ນຕ່ຳໂດຍອີງຕາມຂໍ້ເທັດຈິງຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ;<br>ii. ຈັດການຝຶກອົບຮົມຄວາມປອດໄພ ແລະ ສຸຂະພາບແຮງງານ (ສຳລັບບຸກຄົນ ແລະ ບໍລິສັດ)<br>iii. ຈັດຕັ້ງກອງປະຊຸມສຳມະນາຮ່ວມກັບກອງທຶນປະກັນສັງຄົມເພື່ອຊຸກຍູ້ໃຫ້ບໍລິສັດເຂົ້າຮ່ວມລະບົບປະກັນສັງຄົມ. |
| 2 | ການຈັດຕັ້ງປະຕິບັດວຽກງານການພັດທະນາອາຊີວະສຶກສາ. | a) ມາດຕະຖານດ້ານອາຊີບ / ຄວາມສາມາດໃນລະດັບຊາດແມ່ນປະກອບເຂົ້າໃນລະບຽບການຂອງ DCT;<br>b) ສ້າງຕັ້ງໂຕະຊ່ວຍວຽກສຳລັບ DCT ໃນ ສບວ ຂັ້ນແຂວງບ່ອນທີ່ DCT ຈະຖືກຈັດຕັ້ງປະຕິບັດ;<br>c) ມີ 25 ບໍລິສັດໃໝ່ໃນແຕ່ລະແຂວງເຂົ້າຮ່ວມ DCT ໃນແຕ່ລະປີ . | i. ສູນ DCT ຈັດຕັ້ງ ແລະ ປະຕິບັດກິດຈະກຳສົ່ງເສີມ;<br>ii. ການຝຶກອົບຮົມ ແລະ ການຢັ້ງຢືນຄູຝຶກ ແລະ ປະເມີນຜົນໃນບໍລິສັດ;<br>iii. ການສ້າງ 5 ໂຕະຊ່ວຍເຫລືອ DCT ແລະ ສ້າງຄວາມອາດສາມາດຂອງພະນັກງານຊ່ວຍວຽກ;<br>iv. ແຕ່ລະໂຕະຊ່ວຍວຽກຂອງ DCT ຈັດກິດຈະກຳຂໍ້ມູນຂ່າວສານຢ່າງໜ້ອຍ 2 ກິດຈະກຳຕໍ່ປີ ກ່ຽວກັບ DCT ໂດຍການຮ່ວມມືກັບວິທະຍາໄລທີ່ນຳໃຊ້ຫລັກສູດການຮຽນການສອນແບບຄວບຄູ່;<br>v. ສ້າງລະບົບການມອບລາງວັນ TVET ແລະ ການມອບລາງວັນຈັດຂຶ້ນໃນທຸກປີ. |

| | | | |
|---|---|---|---|
| 3 | ການປັບປຸງການເຄື່ອນໄຫວຂອງຕະຫຼາດແຮງງານ. | a) ການຈັດຕະຫລາດນັດແຮງງານ 4 ຄັ້ງ ຕໍ່ປີ (ໃນ ນະຄອນຫຼວງ ແລະ ຕ່າງແຂວງ) ຢ່າງໜ້ອຍມີ 80 ບໍລິສັດທີ່ເຂົ້າຮ່ວມໃນປີ 2021 ແລະ ເພີ່ມຂຶ້ນ 10% ໃນແຕ່ລະປີ;<br>b) ມີຂໍ້ມູນກ່ຽວກັບທັກສະ. | i. ຈັດຕະຫລາດນັດແຮງງານ 4 ຄັ້ງ ຕໍ່ປີ;<br>ii. ສູນບໍລິການ DCT ດໍາເນີນການສໍາຫຼວດ ຄວາມຕ້ອງການຂອງຕະຫລາດແຮງງານ / ຊ່ອງຫວ່າງທັກສະກ່ຽວກັບຕະຫຼາດແຮງງານ ໃນທຸກໆປີ;<br>iii. ສ້າງຂໍ້ສະເໜີສໍາລັບຜູ້ສ້າງນະໂຍບາຍ ແລະ ຜູ້ບໍລິການການຝຶກອົບຮົມໂດຍອີງໃສ່ການສໍາຫຼວດ. |
| 4 | ການປັບປຸງຄວາມສາມາດໃນການຄຸ້ມຄອງຂອງຜູ້ປະກອບການ. | a) ມີໂຄງການ ການເປີດສອນຫລັກສູດການສຶກສາໃນລະດັບປະລິນຍາຕີ (MBA) ແລະ ມີນັກຮຽນ 50 ຄົນຕໍ່ປີ;<br>b) ຫຼັກສູດ Mini MBA ເປີດສອນ 2 ຄັ້ງຕໍ່ປີ ໂດຍສະເລ່ຍມີນັກຮຽນ 20 ຄົນຕໍ່ຄັ້ງ. | i. ຂໍ້ຕົກລົງກັບມະຫາວິທະຍາໄລສາກົນກ່ຽວກັບການຈັດຕັ້ງປະຕິບັດ MBA ໃນລາວ;<br>ii. ມີຜູ້ປະສານງານສໍາລັບໂຄງການ MBA;<br>iii. ກິດຈະກໍາການໂຄສະນາເຜີຍແຜ່ເພື່ອດຶງດູດນັກຮຽນ;<br>iv. ປະຕິບັດໂຄງການ MBA ກັບຄູ່ຮ່ວມງານ;<br>v. ຈັດຕັ້ງປະຕິບັດໂຄງການ Mini MBA ກັບຄູ່ຮ່ວມງານ. |

### 4.3.6. ຂໍ້ມູນຂ່າວສານ, ການປະສາສຳພັນ ແລະ ການພັດທະນາສະມາຊິກຂອງ ສຄອຊ

ເສົາຄ້ຳທີ່ 6 ນີ້ແມ່ນມີເປົ້າໝາຍໃນການເສີມສ້າງຄວາມຮູ້, ຄວາມສາມາດ ແລະ ຄວາມເຂັ້ມແຂງໃຫ້ແກ່ ສະມາຊິກຂອງ ສຄອຊ ລະດັບແຂວງ ແລະ ລະດັບສະມາຄົມທຸລະກິດ. ໃນປັດຈຸບັນການເຄື່ອນໄຫວຂອງ ສຄອ ແຂວງ ແລະ ສະມາຄົມທຸລະກິດຍັງຈຳກັດ ແລະ ບໍ່ກົງກັບບັນດາເປົ້າໝາຍທີ່ລັດຖະບານ ແລະ ສຄອຊ ໄດ້ວາງໄວ້ ພ້ອມກັນນັ້ນ ການຂະຫຍາຍສະມາຊິກກໍ່ຍັງບໍ່ແຂງແຮງ.

ດຳລັດເລກທີ່ 237/ນຍ ວ່າດ້ວຍບົດບາດ ແລະ ໜ້າທີ່ຂອງ ສຄອຊ ໄດ້ໃຫ້ຄວາມກະຈ່າງແຈ້ງຕໍ່ສາຍພົວພັນ ລະຫວ່າງ ສຄອຊ ແລະ ສະມາຄົມທຸລະກິດ ຈຶ່ງມີຄວາມຈຳເປັນໃຫ້ ສຄອຊ ໄດ້ປັບປຸງໂຄງຮ່າງການຈັດຕັ້ງ, ສາຍການ ຄຸ້ມຄອງ ແລະ ປະຕິບັດວຽກງານຂອງຕົນໃຫ້ແທດເໝາະຂຶ້ນຕື່ມ.

ເປົ້າໝາຍອີກຢ່າງໜຶ່ງຂອງເສົາຄ້ຳທີ 6 ແມ່ນການພັດທະນາລະບົບຂໍ້ມູນດ້ານທຸລະກິດ ແລະ ເສດຖະກິດຂອງ ສປປ ລາວ ທີ່ໃນປັດຈຸບັນແມ່ນເກືອບບໍ່ມີເລີຍ ແລະ ຢູ່ແບບກະແຈກກະຈາຍ (ບໍ່ລວມສູນ). ການລະບາດຂອງພະຍາດ COVID-19 ໄດ້ໃຫ້ ສຄອຊ ເລັ່ງລັດການສ້າງລະບົບເກັບກຳ, ເກັບຮັກສາ ແລະ ເຜີຍແຜ່ຂໍ້ມູນທຸລະກິດ ແລະ ເສດຖະກິດເພື່ອການຟື້ນຟູການຜະລິດກໍ່ຄືເສດຖະກິດຄືນໃໝ່ຢ່າງຮີບດ່ວນ.

ເພື່ອສາມາດບັນລຸເປົ້າໝາຍດັ່ງກ່າວນີ້ ສຄອຊ ມີຈຸດປະສົງດັ່ງຕໍ່ໄປນີ້:

1). ພັດທະນາລະບົບການຄຸ້ມຄອງໃນ ສຄອຊ, ສຄອ ແຂວງ, ນະຄອນຫຼວງ ແລະ ສະມາຄົມທຸລະກິດທີ່ກົມກຽວ ແລະ ມີປະສິດທິຜົນສູງ.

2). ສ້າງຖານຂໍ້ມູນທຸລະກິດດິຊິຕໍທີ່ສາມາດຮັບໃຊ້ສະມາຊິກຂອງ ສຄອຊ ແລະ ພາກສ່ວນອື່ນໆ.

3). ສ້າງລະບົບສັງລວມ ແລະ ເຜີຍແຜ່ຂໍ້ມູນທຸລະກິດ.

4). ຄົ້ນຄວ້າວິໃຈຂໍ້ມູນທະລິດ ແລະ ສ້າງເປັນເອກະສານເຜີຍແຜ່ໃຫ້ລັດຖະບານ ແລະ ມວນຊົນ.

| ຕາຕາລາງທີ 6: ຈຸດປະສົງ, ຕົວຊີ້ວັດ ແລະ ກິດຈະກຳໃນການພັດທະນາຂໍ້ມູນຂ່າວສານ, ການປະສາສຳພັນ ແລະ ການພັດທະນາສະມາຊິກຂອງ ສຄອຊ | | | |
|---|---|---|---|
| ລ/ດ | ຈຸດປະສົງ | ຕົວຊີ້ວັດ | ກິດຈະກຳ |
| 1 | ພັດທະນາລະບົບການຄຸ້ມຄອງໃນ ສຄອຊ, ສຄອ ແຂວງ, ນະຄອນຫຼວງ ແລະ ສະມາຄົມທຸລະກິດທີ່ ກົມກຽວ ແລະ ມີປະສິດທິຜົນສູງ. | a) ສະພາການຄ້າ, ສະມາຄົມທຸກລະກິດ ດຳເນີນງານຕາມແບບແຜນຂອງອົງກອນ ແລະ ລະບຽບຄູ່ມືກາຄູ້ມຄອງບໍລິຫານຂອງ ສຄອຊ,<br>b) ການໃຫ້ບໍລິການທີ່ມີຄຸນນະພາບ ແລະ ຄຸ້ມຄ່າເງິນ, ໂດຍອີງຕາມ 80% ຂອງຜົນການຕອບແບບສອບຖາມໃນການສຳຫຼວດປະຈຳປີ (ການສຳຫຼວດສະມາຊິກ);<br>c) ແຜນການສຳລັບການເຂົ້າເປັນສະມາຊິກ ແບບບັງຄັບ ແລະ ຖືກຈັດຕັ້ງປະຕິບັດ. | i. ສ້າງປື້ມຄູ່ມືການຈັດຕັ້ງແລະຄູ່ມືການຄຸ້ມຄອງບໍລິຫານ ລວມທັງ SOP ກ່ຽວກັບການບໍລິການ, ການບໍລິຫານ, ການຕິດຕາມກວດກາ, ການປະເມີນຜົນແລະອື່ນໆ ເຊັ່ນ, ສຳລັບສະພາການຄ້າແຂວງ (ໂດຍອີງຕາມດຳລັດ 237)<br>ii. ສ້າງຂີດຄວາມສາມາດໃຫ້ ສຄອ ໃນຂັ້ນແຂວງແລະໃນສະມາຄົມທຸລະກິດ ພ້ອມດ້ວຍຄູ່ມືແບບແຜນການຈັດຕັ້ງ ແລະ ການຄຸ້ມຄອງບໍລິຫານສະພາການຄ້າ;<br>iii. ພັດທະນາການບໍລິການທີ່ໄດ້ມາດຕະຖານສຳລັບ ສຄອ ແຂວງ ແລະ ສະມາຄົມທຸລະກິດ;<br>iv. ການຝຶກອົບຮົມໃຫ້ແກ່ ສຄອ ແຂວງ ໃນການບໍລິຫານ ແລະ ການໃຫ້ບໍລິການ ລວມທັງການຕິດຕາມກວດກາ;<br>v. ສ້າງແຜນ ແລະ ປະຕິບັດກ່ຽວກັບວຽກງານສະມາຊິກ;<br>vi. ສ້າງເງື່ອນໄຂທີ່ໂປ່ງໃສສຳລັບການຮັບລາງວັນທຸລະກິດຂອງ ສຄອຊ ແລະ ສ້າງໂຄງສ້າງການໃຫ້ລາງວັນ (ເຊັ່ນ: ຂໍ້ຕົກລົງການຮ່ວມມືກັບຄູ່ຮ່ວມມືທີ່ເປັນເອກະລາດໃນສື່ ເພື່ອຄັດເລືອກຜູ້ທີ່ໄດ້ຮັບລາງວັນ) ແລະປະຕິບັດຂັ້ນຕອນການຮັບລາງວັນປະຈຳປີ. |
| 2 | ສ້າງຖານຂໍ້ມູນທຸລະກິດດີຊິຕໍທີ່ສາມາດຮັບໃຊ້ສະມາຊິກຂອງ ສຄອຊ ແລະ ພາກສ່ວນອື່ນໆ. | a) ລະບົບຖານຈັດເກັບຂໍ້ມູນໄດ້ຮັບການປັບປຸງ | **i.** ສ້າງລະບຽບທີ່ຄຸ້ມຄອງການເຂົ້າສູ່ລະບົບ, ຄວາມປອດໄພຂອງຂໍ້ມູນ, ສິດໃນການເຂົ້າເຖິງ, ການຄຸ້ມຄອງຂໍ້ມູນ ແລະ ການແລກປ່ຽນຂໍ້ມູນ. |

4

ເພື່ອ

ໃນ

ຈະ

ຈະ

ການ

| | | | |
|---|---|---|---|
| | | • ປະກອບຂໍ້ມູນສະມາຊິກໃຫ້ຄົບຖ້ວນລວມທັງ ຂໍ້ມູນບໍລິສັດ ແລະ ຜະລິດຕະພັນ, ການຈ້າງ ງານ,<br>• ຂໍ້ມູນລວມຈາກການຂຶ້ນທະບຽນວິສາຫະກິດ , ພາສີ ແລະ ພາກສ່ວນອື່ນໆ,<br>• ຂໍ້ມູນ ProFIT, ບົດລາຍງານຂອງ LBF ແລະ ບົດສຶກສາຄົ້ນຄ້ວາອື່ນໆ,<br>• ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກັບ ທຸລະກິດ (ລວມທັງກົດລະບຽບຂອງແຂວງ).<br>b) ບັນດາສະພາການຄ້າ ແລະ ອຸດສາຫະກຳ ແຂວງ ແລະ ສະມາຄົມທຸລະກິດມີຄວາມ ສາມາດໃນການເກັບກຳ ແລະປ້ອນຂໍ້ມູນເຂົ້າ ໃນລະບົບເປັນຢ່າງເປັນປະຈຳ;<br>c) ການກວດສອບຂໍ້ມູນປະຈຳປີ ຢັ້ງຢືນວ່າ 90% ຂອງຂໍ້ມູນໃນລະບົບຖືກຕ້ອງ ແລະ ມີ ການປັບປຸງ. | ii. ຖານຂໍ້ມູນທາງກົດໝາຍໄດ້ຖືກສ້າງຕັ້ງຂຶ້ນ ແລະ ສຄອຊ, ສຄອ ແຂວງ ແລະ ສະມາຄົມທຸລະກິດ ປ້ອນຂໍ້ມູນທີ່ຖືກຕ້ອງ ຕາມກົດໝາຍໂດຍຜ່ານການຄົ້ນຄວ້າ (ກວດເບິ່ງແຫຼ່ງຂໍ້ມູນ ທີ່ມີຢູ່) ແລະເກັບກຳຂໍ້ກຳນົດ ແລະ ສິ່ງພິມຕ່າງໆໂດຍກົງ;<br>iii. ພະນັກງານ ສຄອ ແຂວງ ແລະ ສະມາຄົມທຸລະກິດ ໄດ້ຮັບ ການຝຶກອົບຮົມໃນການເກັບກຳ ແລະ ທຳຄວາມສະອາດ / ກວດສອບຂໍ້ມູນຈາກແຫຼ່ງຕ່າງໆ;<br>iv. ຮັບປະກັນການເຂົ້າເຖິງຂໍ້ມູນໂດຍການຮ່ວມມືກັບ ກະຊວງ ອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ ແລະ ລວມ ພະແນກການຄ້າ ແລະ ພະແນກການເງິນຢູ່ຕ່າງແຂວງ;<br>v. ສຄອ ແຂວງ ແລະ ສະມາຄົມທຸລະກິດ ເກັບກຳຂໍ້ມູນນຳ ພະແນກການຄ້າ ແລະ ພະແນກ ການເງິນຢູ່ຕ່າງແຂວງ, ປຽບທຽບ ແລະ ສ້າງຊຸດຂໍ້ມູນຂອງບໍລິສັດທີ່ມີຢູ່ (ບໍລິສັດທີ່ ຍັງມີການດຳເນີນງານຢູ່) ແລະ ນຳເອົາຂໍ້ມູນນີ້ເຂົ້າໃນຖານຂໍ້ ມູນຂອງ ສຄອຊ;<br>vi. ການກວດສອບຂໍ້ມູນປະຈຳປີ. |
| 3 | ສ້າງລະບົບສັງລວມ ແລະ ເຜີຍແຜ່ຂໍ້ມູນທຸລະກິດ. | a) ເວບໄຊທ໌ ແລະ ແອບພິເຄຊັນໂທລະສັບມືຖື ຖືກເບິ່ງ ແລະ ນຳໃຊ້ຢ່າງໜ້ອຍ 80% ຂອງ ສະມາຊິກ ສຄອຊ. | i. ສ້າງຄຳແນະນຳກ່ຽວກັບການສື່ສານ ແລະ ການອອກແບຄູ່ມື ນຳໃຊ້ທົ່ວລະບົບຂອງສະພາການຄ້າ, ລວມທັງ. ສບວ, ສູນ ບໍລິການ ແລະ ສຄອ ແຂວງ;<br>ii. ສ້າງ ແລະ ໃຊ້ການສື່ສານ ແລະ ການປະຊາສຳພັນ ແລະ ປັບປຸງປະຈຳທຸກປີ;<br>iii. ສ້າງ ແລະຈັ ດຕັ້ງປະຕິບັດການໂຄສະນາເຜີຍແຜ່ກ່ຽວກັບ ຜົນປະໂຫຍດ ແລະ ການບໍລິການຂອງ ສຄອຊ; |

**.4. ຄາດ ຄະເນ ລາຍຮັບ ແລະ ລາຍຈ່າຍ ຂອງ ສຄອຊ ປີ 2021-2023**

ໃຫ້ ຮັບປະກັນ ງົບປະມານ ພຽງພໍກັບ ຄວາມ ຕ້ອງການ ການຈັດຕັ້ງ ປະຕິບັດກິດ ກຳ, ສຄອຊ ໄດ້ເນັ້ນໃນ ສ້າງລາຍຮັບ

| | | | |
|---|---|---|---|
| 4 | ຄົ້ນຄວ້າວິໃຈຂໍ້ມູນທະລິດ ແລະ ສ້າງເປັນເອກະສານ ເຜີຍແຜ່ໃຫ້ລັດຖະບານ ແລະ ມວນຊົນ. | a) ການສຳຫຼວດ ແລະ ປະເມີນຜົນກະທົບ ຂອງ COVID-19 ຕໍ່ເສດຖະກິດເຄິ່ງປີ ແລະ ຂໍ້ສະເໜີແນະສຳລັບມາດຕະການຟື້ນຟູເສດຖະກິດ;<br>b) ການສຳຫຼວດສະມາຊິກປະຈຳປີແມ່ນຖືກ | i. ຈັດຕັ້ງປະຕິບັດການສຳຫຼວດຜົນກະທົບ COVID 19 ໃນທຸກໆ 6 ເດືອນ;<br>ii. ອອກແບບ ແລະ ຈັດຕັ້ງປະຕິບັດການສຳຫຼວດສະມາຊິກ |
| | | ຈັດຕັ້ງປະຕິບັດ. | iv. ເຜີຍແຜ່ຂໍ້ມູນຂ່າວສານຜ່ານທາງໂທລະພາບ ແລະ ໜັງສືພິມ ເປັນປະຈຳທຸກປີ. |
| | | | |

ຈາກ , ຈາກຄ່າສະມາຊິກ ຍັ້ງຢືນສິນຄ້າ, ລາຍຮັບຈາກງານວາງສະແດງສິນຄ້າ, ລາຍຮັບຈາກ Roadshow ແລະ Mission, ລາຍຮັບຈາກການຈັດຝຶກອົບຮົມ, ສຳມະນາ, ກອງປະຊຸມ ແລະ ການສຶກສາ. ລາຍຮັບຈາກຫ້ອງການ, ການໂຄສະນາ ແລະ ການສະໜັບສະໜູນ ແລະ ອື່ນໆດັ່ງຕາຕະລາງລຸ່ມນີ້.

### 4.4.1 ຄາດຄະເນລາຍຈ່າຍ ຂອງ ສຄອຊ ປີ 2021-2023

| ລ/ດ | ລາຍການ | 2019 | 2021 | 2022 | 2023 |
|---|---|---|---|---|---|
| | | | ຄ. ຈນ | ຄ. ຈນ | ຄ. ຈນ |
| 1). | ຄ່າບໍລິຫານ | 413,921,864 | 455,314,050 | 500,845,455 | 550,930,001 |
| 2). | ຄ່າເດີນທາງ | 173,139,715 | 190,453,687 | 209,499,055 | 230,448,961 |
| 3). | ຄ່າຮັບແຂກ | 18,571,480 | 20,428,628 | 22,471,491 | 24,718,640 |
| 4). | ຄ່າທຳນຽມ | 11,073,064 | 12,180,370 | 13,398,407 | 14,738,248 |
| 5). | ຄ່າຈັດກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ອື່ນໆ | 1,292,527,191 | 1,421,779,910 | 1,563,957,901 | 1,720,353,691 |
| 6). | ຄ່າງານວາງສະແດງ | | - | - | - |

| ລ/ດ | ລາຍການ | ຫົວໜ່ວຍ | 2021 | | 2022 | | 2023 | |
|---|---|---|---|---|---|---|---|---|
| | | | ຄ. ໜ | ຄ. ຈນ | ຄ. ໜ | ຄ. ຈນ | ຄ. ໜ | ຄ. ຈນ |
| **1).** | **ລາຍຮັບຈາກຄ່າສະມາຊິກ** | | | | | | | |
| | ສະມາຊິກ VVIP | 80,000,000 | 10 | 800,000,000 | 15 | 1,200,000,000 | 20 | 1,600,000,000 |
| | ສະມາຊິກ VIP | 24,000,000 | 20 | 480,000,000 | 25 | 600,000,000 | 30 | 720,000,000 |
| | ສະມາຊິກສາມັນ 1 | 2,000,000 | 500 | 1,000,000,000 | 1000 | 2,000,000,000 | 2000 | 4,000,000,000 |
| | ສະມາຊິກສາມັນ 2 | 800,000 | 1000 | 800,000,000 | 2000 | 1,600,000,000 | 3000 | 2,400,000,000 |
| | | | *ລວມ:* | ***3,080,000,000*** | | ***5,400,000,000*** | | ***8,720,000,000*** |
| **2).** | **ລາຍຮັບຈາກການຢັ້ງຢືນ** | | | | | | | |
| | ລາຍຮັບຈາກການອອກ C.O | | | 120,000,000 | | 126,000,000 | | 132,600,000 |
| | ລາຍຮັບຈາກການຢັ້ງຢືນ Made in Laos (Bar-Code) | | | 0 | | 16,000,000 | | 17,600,000 |
| | ລາຍຮັບຈາກການຢັ້ງຢືນອື່ນໆ | | | 10,000,000 | | 11,000,000 | | 12,100,000 |

| | | | | | |
|---|---|---|---|---|---|
| 7). | ໂຄສະນາ, ໜັງສືພິມ, ຄ່າເອກະສານ | 15,773,000 | 17,350,300 | 19,085,330 | 20,993,863 |
| 8). | ຄ່າຈັດພິມຕ່າງໆ | 83,077,000 | 91,384,700 | 100,523,170 | 110,575,487 |
| 9). | ສ້ອມແປງຫ້ອງການ | 446,015,395 | 490,616,935 | 539,678,628 | 593,646,491 |

| | | | | | | | | |
|---|---|---|---|---|---|---|---|---|
| | | | *ລວມ:* | ***130,000,000*** | | ***153,000,000*** | | ***162,300,000*** |
| **3).** | **ລາຍຮັບຈາກງານວາງສະແດງສິ້ນຄ້າ** | | | | | | | |
| | ງານວາງສະແດງຢູ່ພາຍໃນປະເທດ | | | 180,000,000 | | 189,000,000 | | 198,450,000 |
| | ງານວາງສະແດງຢູ່ຕ່າງປະເທດ | | | 200,000,000 | | 210,000,000 | | 220,500,000 |
| | ລາຍຮັບຈາກການບໍລິການກະກຽມວາງສະແດງ ແລະ ອື່ນໆ | | | 40,000,000 | | 42,000,000 | | 44,100,000 |
| | | | *ລວມ:* | ***420,000,000*** | | ***441,000,000*** | | ***463,050,000*** |
| **4).** | **ລາຍຮັບຈາກ Roadshow ແລະ Mission** | | | | | | | |
| | ການຈັດ Roadshow ແລະ Mission ພາຍໃນປະເທດ | | | 56,000,000 | | 58,800,000 | | 61,740,000 |
| | ການຈັດ Roadshow ແລະ Mission ຕ່າງປະເທດ | | | 27,000,000 | | 28,350,000 | | 29,767,500 |
| | | | *ລວມ:* | ***83,000,000*** | | ***87,150,000*** | | ***91,507,500*** |
| **5).** | **ລາຍຮັບຈາກການຈັດຝຶກອົບຮົມ, ສໍາມະນາ, ກອງປະຊຸມ ແລະ ການສຶກສາ** | | | | | | | |
| | ຄ່າບໍລິການຈັດຝຶກອົບຮົມ, ສໍາມະນາ ແລະ ກອງປະຊຸມ | 611,157,550 | | 617,269,126 | | 648,132,582 | | 680,539,211 |

| | | | | | | | | |
|---|---|---|---|---|---|---|---|---|
| | ຄ່າທຳນຽມການຝຶກອົບຮົມ | 0 | | 13,500,000 | | 14,175,000 | | 14,883,750 |
| | | | *ລວມ:* | ***630,769,126*** | | ***662,307,582*** | | ***695,422,961*** |
| **6).** | **ລາຍຮັບຈາກຫ້ອງການ, ການໂຄສະນາ ແລະ ການສະໜັບສະໜູນ** | | | | | | | |
| | ຄ່າເຊົ່າສະຖານທີຫ້ອງການ | 271,540,000 | | 298,694,000 | | 328,563,400 | | 361,419,740 |
| | ຄ່າເຊົ່າລົດ ແລະ ຫ້ອງປະຊຸມ | 49,301,000 | | 54,231,100 | | 59,654,210 | | 65,619,631 |
| | ຄ່າໂຄສະນາໃນ Internet ແລະ ປື້ມສິ່ງພິມ | 11,942,000 | | 13,136,200 | | 14,449,820 | | 15,894,802 |
| | ຄ່າສະໜນອງຂໍ້ມູນທຸລະກິດ ແລະ ຂ່າວສານ | 0 | | 13,500,000 | | 14,850,000 | | 16,335,000 |
| | ຄ່າສະໜັບສະໜູນກອງປະຊຸມ, ງານລາງວັນ ແລະ ອື່ນໆ | 2,035,797,651 | | 2,239,377,416 | | 2,463,315,158 | | 2,709,646,673 |
| | | | *ລວມ:* | ***2,618,938,716*** | | ***2,880,832,588*** | | ***3,168,915,846*** |
| | | | *ລວມທັງໝົດ:* | ***6,962,707,842*** | | ***9,624,290,169*** | | ***13,301,196,307*** |

| | | | | | |
|---|---|---|---|---|---|
| 10). | ສ້ອມແປງອື່ນໆ (ລົດ+ແອ+ນ້ຳມັນເຄື່ອງ) | 43,133,000 | 47,446,300 | 52,190,930 | 57,410,023 |

| | | | | | |
|---|---|---|---|---|---|
| 11). | ຈ່າຍເງິນເດືອນພະນັກງານ, ເງິນບໍານານ, ເງິນແຮ່ ແລະ ເງິນສະຫວັດດີການ | 1,550,877,500 | 1,705,965,250 | 1,876,561,775 | 2,064,217,953 |
| 12). | ອື່ນໆ (ໂບນັດພະນັກງານ ແລະ ການປະກອບສ່ວນຊຸກຍູ້ຕ່າງໆ ແລະ ງານລ້ຽງຕ່າງໆ) | 626,829,328 | 689,512,261 | 758,463,487 | 834,309,836 |
| | | ***ລວມ:*** | ***5,142,432,391*** | ***5,656,675,630*** | ***6,222,343,193*** |

***ໝາຍເຫດ:***

1). ຄາດຄະເນລາຍຈ່າຍຄິດໄລ່ບົນພື້ນຖານການໃຊ້ຈ່າຍຕົວຈິງຂອງປີ 2019

2). ຍັງມີລາຍຮັບ-ລາຍຈ່າຍຈາກບັນດາໂຄງການທີ່ຮ່ວມກັບພາກລັດຖະບານໃນການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງ ທີ່ບໍ່ໄດ້ຈັດເຂົ້າໃນງົບປະມານ ເພາະການຄຸ້ມຄອງງົບປະມານ ແມ່ນບໍ່ໄດ້ຄຸ້ມຄອງໂດຍກົງ ຈາກ ສຄອຊ

3). ສຄອຊ ແມ່ນມີໂຄງການໃນກອບກອງທຶນນາງຟ້າ ແລະ ກອງທຶນ SMEs ເຊິ່ງໄດ້ຈາກການລະດົມທຶນ ແລະ ອີງການຕ່າງໆ, ສະນັ້ນ ລາຍຮັບ-ລາຍຈ່າຍບໍ່ໄດ້ຂຶ້ນໄດ້ງົບປະມານ

## 4.5 ໂຄງຮ່າງການຈັດຕັ້ງໃໝ່ຂອງ ສຄອຊ ໃນອະນາຄົດ

ເພື່ອໃຫ້ແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນ ແລະ ສາມາດຕອບສະໜອງ ການບໍລິການໃຫ້ແກ່ສະມາຊິກໃຫ້ໄດ້ດີຂຶ້ນກວ່າເກົ່າ,ສຄອຊ ຈະໄດ້ມີການປັບປຸງໂຄງຮ່າງການຈັດຕັ້ງພາຍໃນໃນອະນາຄົດໃຫ້ດີຂື້ນຕື່ມ.




(ລາຍລະອຽດຂອງແຜນຍຸດທະສາດ ໄດ້ສ້າງເປັນເອກະສານຕາງຫາກ)

ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ
ປະທານ